# 0. ຂໍ້ມູນທົ່ວໄປ ຂອງຄູ່ມື

## 0.1. ພາກສະເໜີ

***"ຄູ່ມືສຳລັບການຄຸ້ມຄອງ ແຜນງານການລົງທຶນຂອງລັດ (ແຜນງານ PIP)"*** ແມ່ນເອກະສານແນະນຳ ໄປສູ່ການຄຸ້ມຄອງ ແຜນງານ PIP ຢ່າງມີປະສິດທິພາບ ຈາກມຸມມອງທີ່ຄົບຖ້ວນ ໃນລະດັບແຜນງານ. ບັນດາເນື້ອໃນຂອງ ປຶ້ມຄູ່ມືເຫຼັ້ມນີ້ ແມ່ນກ່ຽວກັບ ການຄຸ້ມຄອງແຜນງານ PIP, ເຊິ່ງໄດ້ຊີ້ແຈງໃນພາກທີໜຶ່ງ, ***ແມ່ນແຜນທີ່ຄົບຖ້ວນໃດໜຶ່ງ ຢູ່ພາຍໃນຂະແໜງການ ຫຼື ເຂດແຄວັນໃດໜຶ່ງ, ເຊິ່ງປະກອບດ້ວຍບັນດາໂຄງການລົງທຶນລັດ ແລະ ແຜນການລົງທຶນອື່ນໆ ທີ່ເຮັດໃຫ້ເກີດມີຜົນກະທົບການພັດທະນາແບບດຽວກັນ.***

ປຶ້ມຄູ່ມືເຫຼັ້ມນີ້ໄດ້ມີການພັດທະນາຂຶ້ນສຳລັບພະນັກງານລັດ ທີ່ມີໜ້າທີ່ໃນການສ້າງ ແລະ ຕິດຕາມກວດກາບັນດາແຜນການລົງທຶນລັດພາຍໃຕ້ ແຜນພັດທະນາເສດຖະກິດ-ສັງຄົມ. ຢ່າງໃດກໍ່ຕາມ, ບັນດາພະນັກງານລັດທັງໝົດ ທີ່ກ່ຽວຂ້ອງກັບການລົງທຶນລັດໄດ້ຖືກແນະນຳ ໃຫ້ອ່ານຜ່ານເນື້ອໃນ ເພື່ອເຂົ້າໃຈດີຂຶ້ນກ່ຽວກັບແຜນການລົງທຶນລັດ ແລະ ແນວຄວາມຄິດໃນການຄຸ້ມຄອງ.

ກົດໝາຍ, ດຳລັດ ແລະ ລະບຽບການ ແມ່ນມີຜົນບັງຄັບໃຊ້ ສຳລັບອົງການຕ່າງໆ ໃນການສ້າງ ແລະ ຄຸ້ມຄອງການລົງທຶນລັດ. ຢ່າງໃດກໍ່ຕາມ, ເນື້ອໃນດຳລັດເຫຼົ່ານັ້ນ ແມ່ນຍັງເລັ່ງໃສ່ແຕ່ພາລະ ແລະ ໜ້າທີ່ພື້ນຖານ, ແຕ່ບໍ່ໄດ້ກ່າວເຖິງ ບັນດາໜ້າທີ່ ແລະ ວິທີການສະເພາະ ທີ່ຕ້ອງການໂດຍແຕ່ລະອົງການ. ຍິ່ງໄປກວ່ານັ້ນ, ກໍ່ຍັງບໍ່ໄດ້ກ່າວ ເຖິງຂັ້ນ ຕອນໜ້າວຽກສະເພາະ ທີ່ເປັນມາດຕະຖານ ໃນການຄຸ້ມຄອງ ແຜນງານ PIP. ດັ່ງນັ້ນ, ປຶ້ມຄູ່ມື ນີ້ໄດ້ມີການ ພັດທະນາຂຶ້ນ ພາຍຫຼັງການ ສຶກສາຢ່າງລະອຽດຮອບຄອບ ກ່ຽວກັບສະພາບການໃນການຄຸ້ມຄອງ ແຜນງານ PIP ແລະ ໄດ້ປັບປຸງເນື້ອໃນໃຫ້ສອດຄ່ອງ ກັບຄວາມຕ້ອງການຂອງມັນ. ບັນດາແນວຄວາມຄິດ, ວິທີການ ແລະ ເຄື່ອງມືທີ່ມີຢູ່ແລ້ວ ໄດ້ຖືກນຳໃຊ້ຫຼາຍ ທີ່ສຸດເທົ່າທີ່ຈະເປັນໄປໄດ້, ຄຽງຄູ່ກັບການນຳໃຊ້ ສິ່ງໃໝ່ ໃນເວລາຈຳເປັນ, ດັ່ງນັ້ນ ພະນັກງານ ພ້ອມທັງຄວາມ ສາມາດທີ່ມີຢູ່ໃນປັດຈຸບັນ ສາມາດເຂົ້າໃຈໄດ້ ໂດຍບໍ່ຕ້ອງມີຄວາມເຂົ້າໃຈບັນດາວິທີການໃໝ່ໆມາກ່ອນເລີຍ.

ປຶ້ມຄູ່ມືນີ້ຈະມີການປັບປຸງໃຫ້ດີຂຶ້ນໃນອະນາຄົດ ເພື່ອໃຫ້ສອດຄ່ອງກັບການພັດທະນາຄວາມສາມາດຂອງອົງການຈັດຕັ້ງ ແລະ ພະນັກງານ ຄຽງຄູ່ໄປກັບ ການປັບປຸງສະພາບການໃນການຄຸ້ມຄອງໂຄງການລົງທຶນລັດ ເຊັ່ນ: ການມີຂໍ້ມູນ ແລະ ຂ່າວສານຂອງໂຄງການລົງທຶນລັດທີ່ຊັດເຈນ.

## 0.2. ຈຸດປະສົງ ຂອງຄູ່ມື

ປຶ້ມຄູ່ມືນີ້ ໄດ້ຖືກພັດທະນາຂຶ້ນເພື່ອເປັນເອກະສານແນະນຳໃຫ້ແກ່ ພະນັກງານທີ່ເຮັດວຽກ ກ່ຽວກັບການຄຸ້ມຄອງ ແຜນງານ PIP, ໂດຍມີຈຸດປະສົງ ເພື່ອສ້າງຄວາມເຂົ້າໃຈໃຫ້ກົງກັນ ກ່ຽວກັບນິຍາມ, ຄຳສັບ, ຂັ້ນຕອນ, ວິທີການ ແລະ ເຄື່ອງມື ທີ່ໃຊ້ໃນການຄຸ້ມຄອງແຜນງານ PIP.

ຄູ່ມືນີ້ ຍັງມີຈຸດປະສົງຊ່ວຍໃນການພັດທະນາຄວາມສາມາດໃຫ້ແກ່ພະນັກງານລັດ ທີ່ກ່ຽວຂ້ອງ ກັບການຄຸ້ມຄອງແຜນງານ PIP. ຄູ່ມືນີ້ຍັງເໝາະສົມກັບຜູ້ທີ່ຕ້ອງການມີຄວາມຮູ້ກ່ຽວກັບວິທີການ ແລະ ເຄື່ອງມືສະເພາະໃນຂັ້ນຕອນການຄຸ້ມຄອງ ແຜນງານ PIP.

ຕາມທີ່ໄດ້ຕັ້ງຊື່ ຄູ່ມືນີ້, ແມ່ນເລັງໃສ່ການຄຸ້ມຄອງແຜນງານ PIP ມັນໄດ້ກ່າວ ເຖິງຄວາມຕ້ອງການຂອງການຄຸ້ມຄອງ ແຜນງານ PIP ທີ່ຖືເປັນແຜນງານທີ່ມີຍຸດທະສາດ ແລະ ຄົບຖ້ວນ. ຂັ້ນຕອນ ແລະ ວິທີການຕ່າງໆ ສຳລັບແຕ່ລະບັນດາໂຄງການລົງທຶນລັດ ໄດ້ກ່າວໄວ້ໃນ ***"ຄູ່ມື ສຳລັບການຄຸ້ມຄອງ ໂຄງການໃນແຜນງານການລົງ ທຶນຂອງລັດ"***. ການພັດທະນາ 2 ຄູ່ມື ***"ຄູ່ມືສຳລັບ ການຄຸ້ມຄອງໂຄງການ ໃນແຜນງານການລົງທຶນຂອງລັດ" ແລະ "ຄູ່ມືສຳລັບການຄຸ້ມຄອງແຜນງານ ການລົງທຶນຂອງລັດ"*** ແມ່ນບໍ່ມີ ຈຸດປະສົງທີ່ຈະແຍກແນວຄວາມຄິດອອກເປັນ 2 ນິຍາມ. ການທີ່ແຍກອອກເປັນ ແຕ່ລະປຶ້ມຄູ່ມືນີ້ ເພື່ອໃຫ້ຜູ້ນຳໃຊ້ສາມາດເຂົ້າໃຈຄວາມສຳຄັນຂອງການຄຸ້ມຄອງແຜນງານ ແລະ ໂຄງການທັງສອງ. ໂດຍລວມມີບາງຫົວ ຂໍ້ໄດ້ບັນຍາຍໃນທັງ 2 ຄູ່ມື. ຢ່າງໃດກໍ່ຕາມ, ສັບສຳນວນອາດຈະມີການປ່ຽນແປງຂຶ້ນຢູ່ກັບຈຸດປະສົງຂອງ ແຕ່ລະຄູ່ມື.

## 0.3. **ໂຄງຮ່າງຂອງຄູ່ມື**

ພາກນີ້ໄດ້ອະທິບາຍເຖິງ ຂໍ້ມູນທົ່ວໄປ ຂອງຄູ່ມື ແລະ ມີອີກສອງພາກຕົ້ນຕໍ່ໃນປື້ມຄູ່ມືນີ້. ***ພາກທີ I*** ອະທິບາຍຄຳນິຍາມຂອງ ແຜນງານ PIP ພ້ອມກັບອະທິບາຍ ຫົວໜ່ວຍແຜນງານ PIP. ***ພາກທີ II*** ອະທິບາຍຂັ້ນຕອນ ການຄຸ້ມຄອງແຜນງານ PIP, ພ້ອມກັບບັນດາວິທີການ ແລະ ເຄື່ອງມື ທີ່ມີໃນຫົວໜ່ວຍແຜນງານ PIP.

## 0.4. **ຜູ້ນຳໃຊ້ເຄື່ອງມື**

ຜູ້ນຳໃຊ້ຕົ້ນຕໍ ຂອງປຶ້ມຄູ່ມືນີ້ ແມ່ນ ພະນັກງານ ທີ່ກ່ຽວຂ້ອງ ກັບການຄຸ້ມຄອງແຜນງານ PIP ເຊັ່ນ ພະນັກງານ ຂອງ ກະຊວງແຜນການ ແລະການລົງທຶນ (ຜທ), ພະແນກແຜນການຂອງບັນດາກະຊວງ, ແລະ ພະແນກແຜນການ ແລະ ການລົງທຶນ (ພຜທ) ແຂວງ . ພະນັກງານເຫຼົ່ານີ້ ມີພາລະບົດບາດເປັນໃຈກາງໃນການຄຸ້ມຄອງແຜນງານ PIP. ໜ້າທີ່ຂອງເຂົ້າເຈົ້າ ບໍ່ພຽງແຕ່ການເຮັດໃຫ້ເປົ້າໝາຍ ແລະ ແຜນການພັດທະນາປາກົດຜົນເປັນຈິງເທົ່ານັ້ນ ແຕ່ຍັງເປັນຜູ້ໃຫ້ແນວທາງ ເພື່ອເຮັດໃຫ້ການວາງແຜນ ແລະ ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນລັດດີຂຶ້ນກວ່າເດີມ.

ຄູ່ມືນີ້ ຈະບໍ່ໄດ້ກ່າວເຖິງບັນດາມາດຕະຖານ ແລະ ວິທີການຂອງຂະບວນການອະນຸມັດຂັ້ນສຸດທ້າຍໂດຍຜູ້ມີສິດຕັດສິນ. ຢ່າງໃດກໍ່ຕາມ, ຄູ່ມືນີ້ແມ່ນເຮັດໜ້າທີ່ເປັນເອກະສານແນະນຳ ເພື່ອວ່າຜູ້ມີສິດຕັດສິນອາດ ຈະໄດ້ຮັບຍຸດທະສາດຕ່າງໆ ທີ່ເໝາະສົມຂອງແຜນງານ ເພື່ອຊ່ວຍໃນການຕັດສິນ ໃນຂັ້ນຕໍ່ໄປ.

ດ້ວຍເຫດນີ້, ຈຶ່ງຂໍສະເໜີວ່າ ຜູ້ມີສິດຕັດສິນກໍ່ຕ້ອງເບິ່ງຄູ່ມືເຫຼັ້ມນີ້ ແລະເຂົ້າໃຈເຖິງເນື້ອໃນທີ່ເປັນສິ່ງອຳນວຍຄວາມສະດວກໃນການຕັດສິນໃຈຂອງທ່ານເອງ.

# ປື້ມຄູ່ມື ການຄຸ້ມຄອງແຜນງານການລົງທຶນລັດ

## ພາກທີ 1 : ຄໍານິຍາມ ແລະ ຂັ້ນຕອນການ ຄຸ້ມຄອງ ແຜນງານ PIP

## ສາລະບານ

1. **ຄໍານິຍາມ** ........................................ 2

1.1 ສາມທັດສະນະຕົ້ນຕໍ ຂອງ ການສໍາເລັດເປົ້າໝາຍການພັດທະນາ ........................................ 2

1.2 ແຜນງານ ການລົງທຶນຂອງລັດ ........................................ 4

**1.3** ການພົວພັນຕ່າງໆ ລະຫວ່າງ ແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ແຜນງານ PIP ........................................ 6

2. **ຫົວໜ່ວຍ ແຜນງານ PIP** ........................................ 8

**2.1** ຄວາມຫຼາກຫຼາຍ ຂອງບັນດາຫົວໜ່ວຍ ແຜນງານ PIP ........................................ 9

**2.2** ແນວຄວາມຄິດ ຂອງ ການຄຸ້ມຄອງ ຫົວໜ່ວຍແຜນງານ PIP ........................................ 10

2.3 ສາມທັດສະນະ ຂອງການຄຸ້ມຄອງ ແຜນງານ PIP ........................................ 11

# ພາກທີ່ 1: ຄຳນິຍາມ ແລະ ຂັ້ນຕອນການຄຸ້ມຄອງແຜນງານການລົງທຶນລັດ (PIP)

ພາກນີ້ອະທິບາຍແນວຄວາມຄິດທັງໝົດຂອງ ແມ່ນແຜນງານການລົງທຶນລັດ ແລະຂັ້ນຕອນຂອງການຄຸ້ມຄອງ

## 1. ຄຳນິຍາມ

ຄຳວ່າ ***"ແຜນງານການລົງທຶນຂອງລັດ (PIP)"*** ແລະ ***"ໂຄງການລົງທຶນລັດ"*** ແມ່ນໄດ້ຖືກນຳໃຊ້ ຢ່າງກວ້າງຂວາງ ໃນບັນດາຖັນແຖວພະນັກງານລັດ ຢູ່ ສປປ ລາວ. ພາກນີ້ຈະເວົ້າເຖິງນິຍາມ ຕົ້ນຕໍຂອງບັນດາຄຳສັບຫຼັກເຫຼົ່ານີ້ ແລະ ຈະເວົ້າເຖິງວ່າພວກມັນມີການພົວພັນແນວໃດ ຕໍ່ກັບການບັນລຸຜົນສຳເລັດຂອງບັນດາເປົ້າ ໝາຍການພັດ ທະນາຂອງຊາດ, ຂະແໜງການ ແລະ ເຂດແຄ້ວນ.

### 1.1 ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະຂອງບັນດາແຂວງ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເປັນວຽກງານລະດັບຊາດ ແລະຊີ້ໃຫ້ເຫັນເຖິງທິດທາງຂອງລັດຖະບານ ເພື່ອບັນລຸເປົ້າໝາຍ ໄລຍະກາງ ໃນການພັດທະນາທາງດ້ານເສດຖະກິດ-ສັງຄົມ. ປັດຈຸບັນແມ່ນກຳລັງຢູ່ ໃນໄລຍະແຜນການ 5 ປີ ຄັ້ງທີ່ 6 (2006-2010).

ພາຍໃຕ້ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ,ໄດ້ມີການສ້າງບັນດາແຜນພັດທະນາເສດຖະກິດ-ສັງຄົມ ຂອງບັນດາກະຊວງ ແລະ ເຂດແຄວ້ນ ເພື່ອລະບຸເຖິງເປົ້າໝາຍສະເພາະໃດໜຶ່ງ.

### 1.2 ສາມທັດສະນະຕົ້ນຕໍ ຂອງ ການສຳເລັດເປົ້າໝາຍການພັດທະນາ

ບັນດາເປົ້າໝາຍ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແມ່ນສາມາດ ບັນລຸຜົນສຳເລັດ ໂດຍການປະກອບສ່ວນຂອງ 3 ພາກສ່ວນ. ນອກຈາກ ***ການລົງທຶນຂອງລັດ*** ເຊິ່ງປະກອບດ້ວຍທຶນພາຍໃນ, ທຶນການຊ່ວຍເຫຼືອ ເພື່ອການພັດທະນາ ແລະ ການກູ້ຢືມ, ***ການລົງທຶນພາກ ເອກະຊົນ***, ພາຍໃນ ແລະ ຕ່າງປະເທດ, ແລະ ***ການບັນລຸຜົນສຳເລັດຂອງສັງຄົມ*** ທີ່ມີເປົ້າໝາຍ ແລະ ຄາດໝາຍ ຕ່າງໆ ຂອງມັນ ຕາມລຳດັບ. ບັນດາຄາດໝາຍ ຂອງແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແມ່ນສາມາດບັນລຸຜົນ ໂດຍການປະກອບສ່ວນຂອງແຕ່ລະພາກສ່ວນ, ເຖິງແມ່ນວ່າມີການຄຸ້ມຄອງ ໃນຂະແໜງການ ຫຼື ເຂດແຄວ້ນ.

**ຮູບ 1: ແຜນພັດທະນາ ເສດຖະກິດ ສັງຄົມ ແຫ່ງຊາດ, ແຜນພັດທະນາ ເສດຖະກິດ ສັງຄົມແຂວງແລະ 3 ພາກສ່ວນຕົ້ນຕໍ**




***ການລົງທຶນຂອງລັດ*** ແມ່ນ ການລົງທຶນຈາກຊັບພະຍາກອນຂອງລັດ, ພາຍໃນ ຫຼື ຕ່າງປະເທດ, ທີ່ມີຈຸດປະສົງເພື່ອພັດທະນາໃນຂະແໜງການ ແລະ /ຫຼື ໃນເຂດແຄວ້ນ. ບັນດາໂຄງການລົງທຶນລັດ ທີ່ນໍາໃຊ້ທຶນພາຍໃນ, ການຊ່ວຍເຫຼືອຈາກຕ່າງປະເທດເພື່ອການພັດທະນາ ໃນຮູບແບບການຊ່ວຍເຫຼືອລ້າ, ການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການກູ້ຢືມ ແມ່ນເປັນອົງປະກອບຕົ້ນຕໍ. ການສະໜອງ ສິ່ງກໍ່ສ້າງໂຄງລ່າງພື້ນຖານ (ເຊັ່ນ ຂົວ, ທາງ, ລະບົບຊົນລະປະທານ, ໂຮງໝໍ, ໂຮງຮຽນ, ຕາໜ່າງໄຟຟ້າ ແລະ ອື່ນໆ) ແລະ ການສົ່ງເສີມທາງດ້ານວິຊາການ (ການຝຶກອົບຮົມ) ໂດຍທົ່ວໄປ ແມ່ນນໍາໃຊ້ ການລົງທຶນຂອງລັດ.

***ການລົງທຶນ ເອກະຊົນ*** ແມ່ນ ການລົງທຶນຈາກ ຊັບພະຍາກອນ ຂອງເອກະຊົນ. ບັນດາບໍລິສັດເອກະຊົນ, ພາຍໃນ ແລະຕ່າງປະເທດ, ລົງທຶນເພື່ອຈຸດປະສົງ ສ້າງກໍາໄລ ເຊິ່ງຈະເຮັດໃຫ້ເກີດມີຜົນປະໂຫຍດທາງອ້ອມ ຕໍ່ການພັດທະນາ ຂອງການເຕີບໂຕທາງດ້ານເສດຖະກິດຕະຫຼາດ. ແລະຍັງເປັນການປະກອບ ສ່ວນໃນການສ້າງງານ, ແລະ ເຮັດໃຫ້ປະຊາຊົນມີລາຍໄດ້ ແລະ ມີຄວາມໝັ້ນຄົງໃນການດໍາລົງຊີວິດ.

***ການບັນລຸຜົນສໍາເລັດ ຈາກສັງຄົມ*** ແມ່ນການປະກອບສ່ວນຈາກສັງຄົມ ແລະ/ຫຼື ຈາກແຕ່ລະຄົນ. ໂດຍອີງຕາມຄາດໝາຍທີ່ຕັ້ງໄວ້ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ຄວາມພະຍາຍາມຂອງແຕ່ລະບຸກຄົນ ໃນການຍົກລະດັບມາດຕະຖານການດໍາລົງຊີວິດຂອງເຂົາເຈົ້າ ແລະ ການດໍາເນີນກິດຈະກໍາປະຈໍາວັນຂອງເຂົາເຈົ້າ ແມ່ນປະກອບສ່ວນ ຢ່າງຫຼວງຫຼາຍຕໍ່ກັບ ຄວາມສໍາເລັດຂອງແຜນພັດທະນາເສດຖະກິດ-ສັງຄົມ. ຕົວຢ່າງ, ການຜະລິດຂອງຊາວນາ ແມ່ນມີບົດບາດ ສໍາຄັນໃນການພັດທະນາຂອງຊາດ. ການເຂົ້າໂຮງຮຽນຂອງເດັກນ້ອຍ ແລະ ການຮັກສາສຸຂະພາບພາຍໃນ ຄອບຄົວ ກໍ່ຖືໄດ້ວ່າ ແມ່ນການປະກອບສ່ວນຈາກສັງຄົມ.

ໃນ 3 ພາກສ່ວນຫຼັກດັ່ງກ່າວນັ້ນ, ສາມາດເວົ້າໄດ້ວ່າ ການລົງທຶນຂອງລັດ ແມ່ນມີບົດບາດສໍາຄັນກວ່າໝູ່.

ການ ລົງທຶນຂອງລັດ ບໍ່ພຽງແຕ່ປະກອບສ່ວນໂດຍກົງຕໍ່ການບັນລຸຄາດໝາຍ ຂອງແຜນພັດທະນາເສດຖະກິດ-ສັງ ຄົມແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ການລົງທຶນຂອງລັດ ຍັງຖືວ່າເປັນ "ພາກສ່ວນຫຼັກ" ໃນການສົ່ງເສີມ ການລົງທຶນຂອງພາກສ່ວນເອກະຊົນ ແລະ ການບັນລຸຜົນສໍາເລັດຂອງສັງຄົມ, ໂດຍການຕອບສະໜອງເງື່ອນໄຂຮອບຂ້າງທີ່ເໝາະສົມ ເພື່ອເຮັດໃຫ້ມີການປະກອບສ່ວນ ຈາກບັນດາພາກສ່ວນດັ່ງກ່າວ ໄດ້ຢ່າງເຕັມສ່ວນ. ຕົວຢ່າງ ການສ້າງທາງ ແລະ ການສ້າງຕະຫຼາດຈາກພາກສ່ວນລັດ ເຮັດໃຫ້ການດໍາເນີນ ການຂອງຜູ້ລົງທຶນເອກະຊົນດີຂຶ້ນ, ເຮັດໃຫ້ມີການເຕີບໂຕທາງ ດ້ານເສດຖະກິດເພີ່ມຂຶ້ນ. ການກໍ່ສ້າງໂຮງຮຽນ ແລະ ໂຮງໝໍ ແລະ ການຝຶກອົບຮົມບັນດາຄູອາຈານ, ພະຍາບານ ແລະ ໝໍ ເຮັດໃຫ້ສັງຄົມມີການພັດທະນາ ທາງດ້ານການສຶກສາ ແລະ ສາທາລະນະສຸກ, ທັງໝົດ ແມ່ນປະກອບສ່ວນຕໍ່ຄາດໝາຍຕ່າງໆຂອງ ແຜນພັດທະ ນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຕາມລໍາດັບ.

### 1.3 ແຜນງານ ການລົງທຶນຂອງລັດ (PIP)

ການລົງທຶນຂອງລັດ ໃນສປປ ລາວ ແມ່ນໄດ້ຮັບການຄຸ້ມຄອງພາຍໃຕ້ແຜນງານ ການຄຸ້ມຄອງການລົງທຶນຂອງ ລັດ. ບັນດາຄໍານິຍາມຂອງຄໍາສັບທີ່ນໍາໃຊ້ໃນປຶ້ມຄູ່ມືເຫຼັ້ມນີ້ ມີດັ່ງລຸ່ມນີ້:

*<ຄໍາວ່າ "ໂຄງການ" ໂດຍທົ່ວໄປ>*

***ຄໍາວ່າ "ໂຄງການ" ໂດຍທົ່ວໄປແລ້ວແມ່ນການລົງທຶນໃດໜຶ່ງທີ່ມີຈຸດປະສົງ (ໂຕຢ່າງ: ສໍາເລັດການກໍ່ສ້າງໂຄງລ່າງ, ບັນລຸ ໝາກຜົນໃດໜຶ່ງ), ພາຍໃນກອບເວລ
າທີ່ແນ່ນອນ.*** ປັດໃຈນໍາເຂົ້າສໍາລັບໂຄງການ ແມ່ນຖືກກໍານົດໃນຂັ້ນຕອນ ການວາງແຜນ. ກິດຈະກໍາຂອງໂຄງການແມ່ນສໍາເລັດພາຍຕະລາງເວລາທີ່ວາງແຜນໄວ້ ແລະຖືວ່າເປັນການຈັດຕັ້ງ ປະຕິບັດໂຄງການ.

*< ຄໍາວ່າ "ແຜນງານ" ໂດຍທົ່ວໄປ>*

***ຄໍາວ່າ "ແຜນງານ" ໂດຍທົ່ວໄປແລ້ວແມ່ນ ເປັນແບບແຜນທີ່ຄົບຖ້ວນພາຍໃນຂະແໜງການ ຫຼືເຂດແຄ້ວນທີ່ລວບລວມເອົາຢ່າງໜ້ອຍ 1ໂຄງການ ແລະແຜນການລົງທຶນອື່ນໆ ທີ່ເຮັດໃຫ້ເກີດຜົນກະທົບທາງດ້ານການພັດທະນາໄປໃນທິດທາງດຽວ.***

ແຜນງານໃດໜຶ່ງມີເປົ້າໝາຍທີ່ຕ້ອງບັນລຸໃນຊ່ວງເວລາໃດໜຶ່ງ, ໂດຍທົ່ວໄປໄລຍະກາງ ຫຼືຍາວ. ບັນດາຄາດໝາຍເລົ່ານີ້ກ່ຽວພັນເຖິງຍຸດທະສາດ ແລະແຜນການຂ້າງເທິງ ເຊັ່ນ ບັນດາແຜນ ແລະເປົ້າໝາຍການພັດທະນາ.

*<ໂຄງການລົງທຶນລັດ>*

ໂຄງການລົງທຶນລັດ ແມ່ນໂຄງການໜຶ່ງທີ່ປະກອບການລົງທຶນລັດ

ຄໍາວ່າ "ໂຄງການລົງທຶນລັດ" ແມ່ນຄໍານິຍາມທົ່ວໄປ. ແຕ່ທີ່ຈິງແລ້ວໃນ ສປປ ລາວ ທຸກໆໂຄງການລົງທຶນລັດແມ່ນ ນອນໃນແຜນງານ. ດັ່ງນັ້ນ, ໂຄງການລົງທຶນລັດໃນລາວແມ່ນມີຄວາມໝາຍວ່າໂຄງການລົງທຶນລັດ ໃນແຜນງານ (PIP project).

(ລາຍລະອຽດກ່ຽວກັບການລົງທຶນລັດເບິ່ງຂໍ້1.2 ຂ້າງເທິງ)

**<ແຜນງານການລົງທຶນລັດ (PIP)>**

ແມ່ນແຜນງານທີ່ລວບລວມເອົາແຕ່ລະບັນດາໂຄງການລົງທຶນລັດ ເພື່ອບັນລຸແຜນພັດທະນາເສດຖະກິດສັງຄົມໃນ ສປປ ລາວ. ແຜນງານ PIP ແມ່ນມັກສະແດງອອກໃນກອບແນວຄວາມຄິດຂອງທິວໜ່ວຍແຜນງານ.

<ໂຄງການໃນແຜນງານ (PIP project)>

**ໂຄງການໃນແຜນງານ ແມ່ນໂຄງການໜຶ່ງທີ່ນອນຢູ່ໃນແຜນງານ.**

ບັນດາໂຄງການລົງທຶນລັດແມ່ນ ໜຶ່ງໃນສາມພາກສ່ວນຕົ້ນຕໍ ໃນການບັນລຸແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ. ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງແລ້ວວ່າທຸກໆໂຄງການລົງທຶນລັດແມ່ນນອນຢູ່ໃນແຜນງານການລົງທຶນລັດ. ດັ່ງນັ້ນ, ພວກເຮົາຈຶ່ງເອີ້ນບັນດາໂຄງການເຫຼົ່ານີ້ວ່າໂຄງການໃນແຜນງານ.

**ທັງສອງແນວຄວາມຄິດຂ້າງເທິງກ່ຽວກັບຄຳວ່າ "PIP" ຄວນຈະຖືກແຍກອອກຈາກກັນ. ເພື່ອຫຼີກລ້ຽງຄວາມສັບສົນລະຫ່ວາງ ຄຳວ່າ "ແຜນງານ PIP" ແລະ "ໂຄງການ PIP", ຕໍ່ໄປນີ້ຄຳວ່າ "ແຜນງານການລົງທຶນລັດ" ຖືກເອີ້ນວ່າ "ແຜນງານ PIP" ແລະ "ໂຄງການລົງທຶນລັດໃນແຜນງານ ຫຼືໂຄງການ PIP" ແມ່ນຖືກເອີ້ນວ່າ "ໂຄງການລົງທຶນລັດ" ໃນປຶ້ມຄູ່ມືຫົວນີ້.**

**<ທິວໜ່ວຍແຜນງານ PIP>**

**ທິວໜ່ວຍແຜນງານ ແມ່ນກອບແນວຄວາມຄິດພາຍໃນແຜນງານ PIP ເຊິ່ງລວບລວມເອົາບັນດາໂຄງການລົງທຶນລັດ ເພື່ອບັນລຸເປົ້າໝາຍພ້ອມກັບໂຕຊີ້ວັດຂອງແຜນງການ ແລະ/ຫຼືເຂດແຄວ້ນສະເພາະໃດໜຶ່ງ.**

(ແຫຼ່ງຂໍ້ມູນ:ຄູ່ມືການຄຸ້ມຄອງໂຄງການ)

**ໂຄງຮ່າງແນວຄວາມຄິດຂອງທິວໜ່ວຍແຜນງານ:**

ໃນປຶ້ມຄູ່ມືນີ້, ກ່ຽວກັບທິວໜ່ວຍອົງປະກອບ ຂອງ ແຜນງານ PIP ແມ່ນໄດ້ອະທິບາຍວ່າເປັນ ***ທິວໜ່ວຍແຜນງານ PIP***. ທິວໜ່ວຍແຜນງານ PIP ມີເປົ້າໝາຍຕ່າງໆ ທີ່ຕ້ອງບັນລຸພາຍໃນຊ່ວງ ເວລາໃດໜຶ່ງ, ໂດຍທົ່ວໄປໄລຍະກາງ ແລະ ໄລຍະຍາວ. ບັນດາຄາດໝາຍເຫຼົ່ານີ້ ກ່ຽວຂ້ອງກັບບັນ ດາຍຸດທະສາດ ແລະ ແຜນການຂ້າງເທິງ ເຊັ່ນ ບັນດາແຜນ ແລະ ເປົ້າໝາຍການພັດທະນາ. ບັນດາທິວໜ່ວຍແຜນງານ ແມ່ນປະກອບດ້ວຍ ແຕ່ລະບັນດາໂຄງການລົງທຶນລັດ ຈຳນວນໜຶ່ງ. ບັນດາໂຄງການລົງທຶນລັດ ເຫຼົ່ານີ້ ໄດ້ມີການວາງແຜນ ແລະ ຕິດຕາມກວດກາ ເພື່ອຮັບປະກັນວ່າບັນດາຄາດໝາຍພາຍໃນ ທິວໜ່ວຍແຜນງານ PIP ບັນລຸຜົນສຳເລັດ ໃນທາງທີ່ມີປະສິດທິພາບ ແລະ ປະສິດທິຜົນທີ່ສຸດ.

ແຕ່ລະໂຄງການລົງທຶນລັດ ພາຍໃນທິວໜ່ວຍແຜນງານ PIP ມີການພົວພັນກັນຢ່າງມີໂລຊິກ. ບັນດາໂຄງການລົງທຶນລັດ ແມ່ນໄດ້ມີການວາງແຜນ ແລະ ຈັດຕັ້ງປະຕິບັດ ເຊິ່ງເປັນເຄື່ອງມືທີ່ສຳຄັນ ເພື່ອເຮັດໃຫ້ທິວໜ່ວຍແຜນງານ PIP ບັນລຸຜົນ.

ເຖິງແມ່ນວ່າ ແຜນງານ PIP ແລະ ແຕ່ລະບັນດາໂຄງການລົງທຶນລັດ ມີເປົ້າໝາຍຮ່ວມກັນ ຄືການບັນລຸຜົນສຳເລັດຂອງແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ,

ແຕ່ວ່າ ແຜນງານ PIP ແລະ ແຕ່ລະບັນດາໂຄງການລົງທຶນລັດມີຄວາມແຕກຕ່າງກັນ. ແຜນງານ PIP ແມ່ນຄົບຖ້ວນກວ່າ ແລະ ມີເປົ້າໝາຍທີ່ກວ້າງຂວາງ, ສ່ວນບັນດາໂຄງການລົງທຶນລັດ ແມ່ນລົງເລິກແຜນການລົງທຶນອັນໃດໜຶ່ງ ທີ່ເປົ້າໝາຍຂອງມັນແມ່ນຢູ່ໃນຂອບເຂດຈຳກັດ. ສາມາດເວົ້າໄດ້ເຊັ່ນ ກັນວ່າ ບັນດາໂຄງການລົງທຶນລັດ ມີງົບປະມານຂອງຕົວມັນເອງສຳລັບການຈັດຕັ້ງປະຕິບັດ, ແຜນງານ PIP ມີວິທີການທາງດ້ານແນວຄວາມຄິດ, ດັ່ງນັ້ນຈຶ່ງບໍ່ມີງົບປະມານສະເພາະສຳລັບການຈັດຕັ້ງປະຕິບັດຂອງມັນ.

## 1. 4 ການພົວພັນຕ່າງໆ ລະຫວ່າງ ແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ແຜນງານ PIP

ໂດຍທົ່ວໄປແລ້ວມັນເປັນການຍາກຫຼາຍໃນການລະບຸເຖິງການສົ່ງຜົນໂດຍກົງ ຂອງບັນດາໂຄງການລົງທຶນຂອງລັດ ຕໍ່ກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ດັ່ງນັ້ນ, ເມື່ອພິຈະລະນາເຖິງ ຄວາມສອດຄ່ອງຂອງ ແຕ່ ລະໂຄງການ PIP, ມັນມີຄວາມສຳຄັນທີ່ຕ້ອງມີການລະບຸເຖິງຄວາມກ່ຽວພັນ ຢ່າງມີໂລຊິກກັບແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ບັນດາເປົ້າໝາຍໄລຍະກາງຂອງມັນ.

**ຮູບທີ່ 2: ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງານ PIP (1)**




ແຜນງານ PIP ເຮັດໜ້າທີ່ ເປັນເຄື່ອງມືແຜນງານ ການລົງທຶນຂອງລັດ ທີ່ຜັນຂະຫຍາຍ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ບັນດານະໂຍບາຍ ເສດຖະກິດມະຫາພາກ ຂອງຂະແໜງການ ມາເປັນບັນດາໂຄງການລົງທຶນລັດ. ແຜນງານ PIP ແມ່ນໄດ້ຮັບການອະທິບາຍຢ່າງຈະແຈ້ງ ແລະ ອອກແບບໃຫ້ສອດຄ່ອງກັບແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ, ເຊິ່ງບັນດາໂຄງການລົງທຶນລັດ ໄດ້ມີການຄັດເລືອກຢ່າງລະມັດລະວັງ ພາຍໃນບັນດາບູລິມະສິດຂອງຫົວໜ່ວຍແຜນງານ PIP ນັ້ນ, ແລະ ຖືກຈັດຕັ້ງປະຕິບັດດ້ວຍຈຸດປະສົງ ເຮັດໃຫ້ເກີດຜົນປະໂຫຍດສູງສຸດ ໂດຍການ

ນຳໃຊ້ຊັບພະຍາກອນທີ່ມີຈຳກັດ.

**ຮູບທີ 3: ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງານ PIP (2)**




ແຜນງານ PIP ເຮັດໜ້າທີ່ເຊັ່ນກັນ ໃນການສະໜັບສະໜູນທາງອ້ອມ ໃນການສົ່ງເສີມ ການລົງທຶນພາກເອກະຊົນ ແລະ ການບັນລຸຜົນສຳເລັດ ຂອງສັງຄົມ, ໂດຍການສະໜອງເງື່ອນໄຂອ້ອມຂ້າງ ທີ່ເໝາະສົມ. ຫຼາຍໆ ໂຄງການລົງທຶນຂອງລັດໄດ້ມີການວາງແຜນ ແລະ ຈັດຕັ້ງປະຕິບັດ ໂດຍຄາດຫວັງ ເພື່ອສົ່ງເສີມການລົງທຶນເອກະຊົນ ໃນບາງຂະແໜງການ ແລະ/ຫຼື ເຂດແຄວ້ນ, ຫຼື ສົ່ງເສີມການປັບປຸງຊີວິດການເປັນຢູ່ຂອງຄົນໃນສັງຄົມໃຫ້ດີຂຶ້ນ. ໃນບາງກໍລະນີ ໂຄງການລົງທຶນຂອງລັດ ໄດ້ມີການວາງແຜນ ແລະ ຈັດຕັ້ງປະຕິບັດຮ່ວມກັບ ຜູ້ລົງທຶນເອກະຊົນ ຫຼື ກັບສັງຄົມ. ແຜນງານ PIP ເປັນທິດທາງ ໃນເວລາວາງແຜນ ແລະ ການຈັດຕັ້ງ ປະຕິບັດ ບັນດາໂຄງການລົງທຶນລັດ.

2)

## 1. ທິວໜ່ວຍ ແຜນງານ PIP

***ທິວໜ່ວຍແຜນງານ PIP*** ແມ່ນທິວໜ່ວຍໜຶ່ງ ຂອງແຜນງານ PIP. ມັນປະກອບດ້ວຍ ຫຼາຍໆບັນດາໂຄງການລົງທຶນລັດ, ຄ້າຍຄືກັບການຈັດແບ່ງເປັນແຂວງ/ຂະແໜງການ ທີ່ໃຊ້ໃນແຜນການລົງທຶນຂອງລັດ ສົກງົບປະມານປະຈຳປີ, ແຕ່ວ່າມັນໄດ້ຖືກນຳໃຊ້ ເພື່ອຕິດຕາມກວດກາໝາກຜົນ ແລະ ຜົນໄດ້ຮັບຂອງໂຄງການລົງທຶນລັດ ໂດຍຜ່ານຜົນກະທົບຕໍ່ການພັດທະນາ. ທິວໜ່ວຍແຜນງານ PIP ແມ່ນຢູ່ໃຕ້ ບັນດາແຜນພັດທະນາ, ຢູ່ເທິງ ແຕ່ລະບັນດາໂຄງການລົງທຶນລັດ. ບັນດາແຜນການພັດທະນາ, ທິວໜ່ວຍແຜນງານ PIP ແລະ ແຕ່ລະບັນດາໂຄງການລົງທຶນລັດ ສາມາດຈັດລຽງເປັນລຳດັບເປັນໃນລັກສະນະເຫດ ແລະ ຜົນ. ຈຳນວນຂອງທິວໜ່ວຍແຜນງານ PIP ປ່ຽນແປງໂດຍຂຶ້ນກັບແຜນພັດທະນາ ຂອງຂະແໜງການ ຫຼື ເຂດແຄວ້ນ.

### ຮູບທີ່ 4: ບັນດາທິວໜ່ວຍ ແຜນງານ PIP




ຜົນປະໂຫຍດຂອງ ການສ້າງທິວໜ່ວຍແຜນງານ ແມ່ນມີດັ່ງຕໍ່ໄປນີ້;

***ເພື່ອສ້າງ ແຜນປະຕິບັດງານ ເພື່ອບັນລຸຄາດໝາຍການພັດທະນາ.*** ໂດຍທົ່ວໄປ ບັນດາແຜນການພັດທະນາ ໄດ້ອະທິບາຍຢ່າງຈະແຈ້ງ ບັນດາເປົ້າໝາຍແລະທິດທາງຂອງຊາດ/ຂະແໜງ ການ/ເຂດແຄວ້ນ, ຢ່າງໃດກໍ່ຕາມ ມັນບໍ່ໄດ້ລະບຸ ແຜນການປະຕິບັດງານສະເພາະ. ເພື່ອຮັບປະກັນການບັນລຸຜົນສຳ ເລັດຂອງເປົ້າໝາຍການພັດທະນາ ພາຍໃນເວລາທີ່ຕັ້ງໄວ້, ການວາງແຜນຢ່າງມີຍຸດທະສາດຂອງບັນ

ດາແຜນປະຕິບັດງານ ດ້ວຍມຸມມອງຂອງທົວໜ່ວຍແຜນງານ PIP ແມ່ນມີຜົນປະໂຫຍດຫຼາຍ.

- ***ເພື່ອເຮັດໃຫ້ ການຄຸ້ມຄອງ ແຜນງານ PIP ບົນພື້ນຖານໝາກຜົນ ປາກົດເປັນຈິງ.*** ໃນເວລາວາງແຜນໂຄງການ PIP, ຕ້ອງວາງ ຈຸດປະສົງຈະແຈ້ງ ແລະ ກໍານົດຜົນກະທົບຂອງການພັດທະນາ ທີ່ຄາດໝາຍໄວ້ຈາກໂຄງການດັ່ງກ່າວນີ້, ແລະ ເຊັ່ນດຽວກັນ ຕ້ອງລະບຸບົດບາດຕ່າງໆຂອງການປະກອບສ່ວນຂອງໂຄງການເອງ ເພື່ອການບັນລຸເປົ້າໝາຍການພັດທະນາ. ທົວໜ່ວຍແຜນງານ PIP ເປັນເຄື່ອງມືເພື່ອເຊື່ອມຕໍ່ແຕ່ບັນດາລະໂຄງການລົງທຶນລັດ ກັບບັນດາແຜນການພັດທະນາ, ໂດຍສະເພາະໃນຂະບວນການການວາງແຜນ.
- ***ເພື່ອຕິດຕາມກວດກາ ຄວາມສໍາເລັດ ຂອງບັນດາແຜນພັດທະນາ.*** ການຕິດຕາມກວດກາ ແຕ່ລະບັນດາ ໂຄງການລົງທຶນຂອງລັດ ແມ່ນມີຄວາມສໍາຄັນ. ຢ່າງໃດກໍ່ຕາມ, ມັນບໍ່ພຽງພໍ ທີ່ຈະເຂົ້າ ໃຈພຽງແຕ່ພາບລວມ ຂອງການພັດທະນາ ໃນລະດັບຊາດ/ ຂະແໜງການ/ ເຂດແຄວ້ນເທົ່ານັ້ນ. ທົວໜ່ວຍແຜນງານ PIP ຊ່ວຍໃນການຕິດຕາມກວດກາ ການບັນລຸຜົນສໍາເລັດ ຂອງບັນດາແຜນການໂດຍການເຊື່ອມຕໍ່ ບັນດາຕົວຊີ້ວັດໄລຍະກາງ ກັບການປະຕິບັດ ແລະ ຜົນກະທົບຂອງບັນດາໂຄງການລົງທຶນລັດ.
- ***ເພື່ອຮັບປະກັນ ຄວາມຮັບຜິດຊອບ ຄວາມສໍາເລັດຂອງແຜນພັດທະນາ ຕໍ່ກັບ ສັງຄົມ.*** ຍ້ອນຄວາມຮັບຜິດຊອບຂອງຊາດ, ມັນມີຄວາມສໍາຄັນ ຕ້ອງມີຄວາມຄືບໜ້າໄລຍະກາງ ເພື່ອບັນລຸ ເປົ້າໝາຍແຜນພັດທະນາຕໍ່ກັບສັງຄົມ. ຄວາມຄືບໜ້າ ອາດຈະກະຕຸກຊຸກຍູ້ ທ່າແຮງ ແລະ ການຮ່ວມ ມືຕໍ່ໄປຈາກສັງຄົມ ເພື່ອການພັດທະນາຕໍ່ໄປ. ບັນດາທົວໜ່ວຍ ແຜນງານ PIP ເປັນເຄື່ອງມື ເພື່ອສະແດງເຖິງສະຖານະພາບຂອງຄວາມຄືບໜ້າໂດຍຜ່ານສັງຄົມ.

## 2.1 **ຄວາມຫຼາກຫຼາຍ ຂອງບັນດາທົວໜ່ວຍ ແຜນງານ PIP**

ທົວໜ່ວຍ ແຜນງານການລົງທຶນຂອງລັດ ແມ່ນໄດ້ສ້າງຂຶ້ນ ພາຍໃຕ້ ແຜນພັດທະນາ ເສດຖະກິດ-ສັງຄົມ. ດັ່ງນັ້ນ, ທົວໜ່ວຍ ແຜນງານ PIP ສາມາດສ້າງຂຶ້ນພາຍໄຕ້ ແຜນພັດທະນາເສດຖະກິດ-ສັງຄົມຂອງເຂດແຄວ້ນ (ແຂວງ) ຫຼື ຂະແໜງການ ( ກະຊວງ )ໃດໆກໍ່ໄດ້. ເຊັ່ນກັນ ກໍ່ສາມາດ ສ້າງແຜນງານ PIP ໃນລະດັບ ເມືອງ/ຂັ້ນບ້ານ, ຖ້າວ່າມີເປົ້າໝາຍ ແລະ ມີກິດຈະກໍາ (ໂຄງການ) ຕ່າງໆ. ໃນທົວໜ່ວຍແຜນງານ PIP ທັງໝົດ, ຕ້ອງມີການພິຈະ ລະນາເຖິງຂະແໜງການ ( ຫຼື ຂະແໜງການຍ່ອຍ ) ແລະ ພື້ນທີ່ໃນເຂດແຄວ້ນ, ເຖິງແມ່ນວ່າລະດັບຂອງ ການພິຈະລະນາ ມີຄວາມແຕກຕ່າງກັນໄປ ຂຶ້ນກັບທົວໜ່ວຍແຜນງານນັ້ນ. ຂ້າງລຸ່ມນີ້ ອະທິບາຍຄຸນລັກສະ ນະຂອງທົວໜ່ວຍແຜນງານ ຂຶ້ນກັບ ແຜນພັດທະນາ ເສດຖະກິດ-ສັງຄົມທີ່ຢູ່ເບື້ອງເທິງ.

### **ບັນດາທົວໜ່ວຍ ແຜນງານ PIP ພາຍໄຕ້ ແຜນພັດທະນາ ເສດຖະກິດ-ສັງຄົມ ຂອງຂະແໜງການ (ກະຊວງ)**

ແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການ ຫຼື ແຜນພັດທະນາເສດຖະກິດ-ສັງຄົມ ສໍາລັບກະຊວງຕ່າງໆ ໄດ້ສ້າງບັນດາຄາດໝາຍ ໃນສາຂາຊ່ຽວຊານສະເພາະ ທີ່ຕ້ອງການ ສໍາລັບຂະແໜງ ການນັ້ນ.

ໂດຍທົ່ວໄປແລ້ວ, ທົວໜ່ວຍແຜນງານ PIP ໄດ້ສ້າງຂຶ້ນ ຈາກຂະແໜງການຍ່ອຍ ແລະ ໄດ້ແບ່ງເພີ່ມເຕີມຕາມລະເຂດແຄວ້ນ. ເນື່ອງຈາກວ່າ ຫຼາຍໆ ໂຄງການລົງທຶນຂອງລັດ ແມ່ນໄດ້ມີການຈັດແບ່ງແລ້ວ ໃນຂະແໜງການຍ່ອຍນັ້ນ ຢູ່ໃນຂັ້ນຕອນການວາງແຜນຂອງມັນ, ມັນເປັນການງ່າຍໃນຈັດແບ່ງ ໃນເວລາທີ່ບັນດາໂຄງການ ລົງທຶນລັດ ໄດ້ມີການກຳນົດແລ້ວ. ຢ່າງໃດກໍ່ຕາມ, ຍ້ອນວ່າການຄອບຄຸມຂອງແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການແມ່ນກວມເອົາໃນລະດັບຊາດ, ມັນເປັນການຍາກໃນການເກັບກຳຂໍ້ມູນຂອງ ຂະແໜງການຍ່ອຍ ໃນລະດັບເຂດແຄ້ວນ, ທີ່ເຊິ່ງບັນດາໂຄງການລົງທຶນຂອງລັດ ແມ່ນໄດ້ມີການປະຕິບັດ ໂດຍການລິເລີ່ມດ້ວຍຕົວຂອງມັນເອງ.

**(1) ທົວໜ່ວຍ ແຜນງານ PIP ພາຍໃຕ້ ແຜນພັດທະນາເສດຖະກິດ-ສັງຄົມ ແຂວງ**

ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແມ່ນໄດ້ລະບຸເປົ້າໝາຍຕ່າງໆ ຂອງບັນດາຂະແໜງການສຳຄັນ ພາຍໃນແຂວງ. ທົວໜ່ວຍ ແຜນງານ PIP ທີ່ຈະໄດ້ສ້າງຂຶ້ນ ຈາກຂະແໜງການ, ແລະ ຂະແໜງການຍ່ອຍ ໄດ້ຖືກແບ່ງພາຍໃນທົວໜ່ວຍແຜນງານ PIP ດຽວກັນ. ມັນມີຄວາມຈຳເປັນເຊັ່ນ ກັນ ໃນການພິຈະນາເຖິງມູມມອງຂອງເຂດແຄວ້ນຍ່ອຍ (ເມືອງ /ຂັ້ນບ້ານ) ຍ້ອນວ່າ ແຕ່ລະບັນດາໂຄງການລົງທຶນລັດ ແມ່ນຍັງນ້ອຍໂພດ ທີ່ຈະສົ່ງຜົນຕໍ່ກັບແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງທັງໝົດ.

**(2) ບັນດາທົວໜ່ວຍ ແຜນງານການ PIP ໃນລະດັບເມືອງ/ກຸ່ມບ້ານ**

ເຖິງແມ່ນວ່າບໍ່ມີ ແຜນພັດທະນາເສດຖະກິດ-ສັງຄົມ ໃນລະດັບຂັ້ນນີ້, ທົວໜ່ວຍແຜນງານ PIP ຍັງຄົງສາມາດສ້າງໄດ້. ເຊິ່ງສາມາດເຮັດໄດ້ໂດຍ ການລະບຸເຖິງບັນດາເປົ້າໝາຍສະເພາະ ສຳລັບເຂດແຄວ້ນຍ່ອຍ, ແລະ ວິເຄາະອົງປະກອບຂອງກິດຈະກຳ (ລວມເຖິງ ບັນດາໂຄງການລົງທຶນລັດ).

ບັນດາຂະແໜງການ ຫຼື ເຂດແຄວ້ນທົ່ວໆໄປ ພາຍໃນ ບັນດາທົວໜ່ວຍແຜນງານ PIP ຈາກກະຊວງຕ່າງໆ, ບັນດາແຂວງ ແລະ ລະດັບອື່ນໆ ສາມາດແບ່ງປັນກັນໄດ້. ຕົວຢ່າງເຊັ່ນ, ຂໍ້ມູນໃນທົວໜ່ວຍແຜນງານຂອງຂະແໜງການ (ກະຊວງ) ໄຕ້ຂະແໜງການຍ່ອຍໜຶ່ງ ສາມາດໃຊ້ຮ່ວມກັນກັບ ທົວໜ່ວຍແຜນງານຂອງແຂວງ. ໂດຍຜ່ານການປຶກສາຫາລື, ທ້າຍສຸດແລ້ວ ທັງສອງພາກສ່ວນ ຈະໄດ້ຮັບຜົນປະໂຫຍດຈາກການຊອກຫາວິທີທາງ ທີ່ມີປະສິດທິດຜົນ ແລະ ປະສິດທິພາບທີ່ສຸດ ເພື່ອບັນລຸເປົ້າໝາຍຂອງພວກມັນເອງ.

## 2.2 **ແນວຄວາມຄິດ ຂອງ ການຄຸ້ມຄອງ ທົວໜ່ວຍແຜນງານ PIP**

ບັນດາທົວໜ່ວຍ ແຜນງານ PIP ແມ່ນໄດ້ຮັບການຄຸ້ມຄອງເປັນຫຼັກ ໂດຍການລິເລີ່ມຂອງ ຜທ/ພຜທ, ແຕ່ການບັນລຸຜົນສຳເລັດ ຂອງທົວໜ່ວຍ ແຜນງານຂອງຂະແໜງການ ແລະ ເຂດແຄວ້ນ ຂຶ້ນກັບ ບັນດາອົງການຈັດຕັ້ງ ທີ່ມີຄວາມຮັບຜິດຊອບໂດຍກົງ ໃນທົວໜ່ວຍນັ້ນ. ສາມາດເວົ້າໄດ້ວ່າ ຜທ/ພຜທ ແມ່ນ ຮັບຜິດຊອບ ສຳລັບກອບວຽກຂອງແຜນງານ PIP, ແລະ ບັນດາອົງການ ຈັດຕັ້ງຕ່າງໆ ຂອງຂະແໜງການ/ເຂດແຄວ້ນ ແມ່ນຮັບຜິດຊອບ ເນື້ອໃນຂອງທົວໜ່ວຍແຜນງານເອງ.

ດັ່ງທີ່ກ່າວມາຂ້າງເທິງ, ຈຸດປະສົງທົ່ວໄປ ສຳລັບປະເທດ ແມ່ນເພື່ອບັນລຸ ແຜນພັດທະນາເສດຖະກິດ-ສັງຄົມ ຫ້າປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການ/ເຂດແຄ້ວນ ແລະ ຜົນສຳເລັດໄລຍະກາງຂອງມັນ. ເຖິງແມ່ນວ່າ ທົ່ວໜ່ວຍ ແຜນງານ PIP ແມ່ນປະກອບດ້ວຍ ບັນດາໂຄງການລົງທຶນລັດໃນຂະແໜງການ ຫຼື ເຂດແຄວ້ນຂອງມັນ, ທົ່ວໜ່ວຍແຜນງານເອງນັ້ນມີຈຸດປະສົງທີ່ກ້ວາງຂວາງກວ່າແຕ່ລະບັນດາໂຄງການ. ມັນເຮັດໜ້າທີ່ຄື "ກັບທີ່ມີເຄື່ອງໝາຍ" ສຳລັບຂະແໜງການ ຫຼື ເຂດແຄວ້ນໃດໜຶ່ງສະເພາະ ເຊິ່ງແຕ່ລະໂຄງການລົງທຶນຂອງລັດ ພາຍໃນທົ່ວໜ່ວຍ (ກັບ) ສາມາດຈັດແບ່ງ ແລະ ຕິດຕັ້ງໄດ້ຢ່າງງ່າຍດາຍ.

**ຮູບທີ 5: ແຜນງານ PIP "ຮູບກັບ ທີ່ມີເຄື່ອງໝາຍ"**




ດັ່ງນັ້ນ, ການຄຸ້ມຄອງ ທົ່ວໜ່ວຍແຜນງານ PIP ແມ່ນເປັນໃນແນວດຽວກັນກັບການຄຸ້ມຄອງແຕ່ລະບັນດາໂຄງການ ລົງທຶນລັດ. ມັນຮັບປະກັນ ວ່າທົ່ວໜ່ວຍແຜນງານ ສາມາດສັງເກດໃນລະດັບທີ່ກວ້າງຂວາງ.

## 2.3 ສາມທັດສະນະ ຂອງການຄຸ້ມຄອງ ແຜນງານ PIP

ການສັງເກດ ທົ່ວໜ່ວຍ ແຜນງານ PIP ມີຄວາມຈຳເປັນຕ້ອງມີ ມຸມມອງທີ່ຄົບຖ້ວນ. ເພື່ອເຮັດໃຫ້ການຄຸ້ມຄອງທົ່ວໜ່ວຍແຜນງານ PIP ເປັນໄປໄດ້ຢ່າງລາບລື້ນ, ຕ້ອງກວມເອົາສາມທັດສະນະດັ່ງຕໍ່ໄປນີ້.

***ມຸມມອງ ທາງດ້ານໂລຊິກ:*** ແຜນງານ PIP ເຮັດໜ້າທີ່ ເປັນຕົວເຊື່ອມລະຫວ່າງ ບັນດາແຜນພັດທະນາ ແລະ ແຕ່ລະບັນດາໂຄງການລົງທຶນລັດ. ມັນສາມາດເວົ້າໄດ້ວ່າ ບັນດາແຜນພັດທະນາ, ບັນດາທົ່ວໜ່ວຍແຜນ ງານ PIP ແລະ ແຕ່ລະບັນດາໂຄງການລົງທຶນລັດ ແມ່ນເຊື່ອມກັນໃນລັກສະນະລຳດັບເຫດ ແລະ ຜົນ ຢ່າງມີໂລຊິກ. ລຳດັບ ຢ່າງມີໂລຊິກຊ່ວຍໃຫ້ເຂົ້າໃຈ ການຄອບຄຸມຢ່າງຄົບຖ້ວນ ຂອງບັນດາໂຄງການລົງ ທຶນລັດ ໄດ້ຄາດໝາຍການພັດທະນາ. ເຊັ່ນກັນມັນເຮັດໜ້າທີ່ ເພື່ອຊອກຮູ້ໄດ້ວ່າ ມີບັນດາໂຄງການລົງ ທຶນລັດພຽງພໍ (ຫຼືຫຼາຍໂພດ) ເພື່ອເຮັດໃຫ້ສຳເລັດ ເປົ້າໝາຍຕ່າງໆ ຂອງການພັດທະນາ.

***ມຸມມອງ ແບບເປັນລຳດັບ:*** ນອກເໜືອຈາກ ມຸມມອງທາງດ້ານໂລຊິກ, ມຸມມອງແບບເປັນລຳດັບ ຫຼືລຳດັບຂອງເວລາ ໃນລະດັບຂອງ ແຜນງານ ເປັນປັດໃຈທີ່ສຳຄັນ. ເມື່ອຄາດໝາຍການພັດທະນາໄລຍະກາງໄດ້ຖືກຕັ້ງໄວ້, ລັດຖະບານຕ້ອງຕິດຕາມກວດກາວ່າສະຖານະການ ຂອງຄວາມຄືບໜ້າຂອງ ການກ້າວໄປສູ່ຄວາມສຳເລັດຂອງມັນ. ໂດຍສະເພາະ ເມື່ອແຕ່ລະບັນດາໂຄງການລົງທຶນລັດ ເຊື່ອມຕໍ່ຢ່າງ ມີໂລຊິກກັບບາງເປົ້າໝາຍການພັດ ທະນາໃດໜຶ່ງ ກຳລັງຄືບໜ້າໄປ, ໄດ້ສຳເລັດ ແລະ ສ້າງຜົນກະທົບທາງບວກຕ່າງໆ, ມັນມີຄວາມສຳຄັນ ໃນການຕິດຕາມກວດກາຄວາມສຳເລັດຂອງພວກມັນ ບໍ່ສະເພາະພຽງແຕ່ຈາກມຸມມອງ ຂອງແຕ່ລະບັນດາໂຄງການລົງທຶນລັດເຫຼົ່ານີ້ ແຕ່ຕ້ອງຕິດຕາມກວດກາຈາກມຸມມອງທີ່ຄົບຖ້ວນ.
***ມຸມມອງທາງດ້ານພູມີສາດ:*** ຍຸດທະສາດທາງດ້ານເຂດແຄວ້ນ ແມ່ນອົງປະກອບທີ່ສຳຄັນ ສຳລັບການບັນລຸຄວາມສຳເລັດ ຂອງເປົ້າໝາຍການພັດທະນາ. ບັນດາເປົ້າໝາຍແຫ່ງຊາດ ຈະບໍ່ບັນລຸໄດ້ ຖ້າບໍ່ໄດ້ພິຈະລະນາ ການຄອບຄຸມທາງດ້ານພູມີສາດ. ເຊັ່ນດຽວກັນ ໂດຍການສັງເກດ ສະຖານທີ່ຕັ້ງຂອງບັນດາໂຄງການລົງທຶນລັດ ຕາມລັກສະນະທາງດ້ານພູມີສາດ, ມັນບໍ່ສະເພາະໃຫ້ຮູ້ເຖິງ ການຄອບຄຸມພື້ນທີ່ຂອງໂຄງການທີ່ຄ້າຍຄືກັນ, ແຕ່ມັນຍັງໃຫ້ເຮົາຮູ້ໄດ້ວ່າ ບັນດາໂຄງການລົງທຶນລັດ ທີ່ແຕກຕ່າງກັນທີ່ສາມາດມີສ່ວນຊຸກຍູ້ເຊິ່ງກັນແລະກັນ, ເຊັ່ນ ການເຊື່ອມກັນລະຫວ່າງການກໍ່ສ້າງທາງເຂົ້າ ແລະ ໂຮງໝໍຕ່າງໆ ແລະອື່ນໆ.

ເມື່ອຄຸ້ມຄອງ ໂດຍຜ່ານສາມມຸມມອງ ທີ່ກ່າວມາຂ້າງເທິງ, ແຜນງານ PIP ເຮັດໜ້າທີ່ເປັນວິທີການ ສະໜັບສະໜູນ ທັງບັນດາຄາດໝາຍ ການພັດທະນາ ແລະ ແຕ່ລະບັນດາໂຄງການລົງທຶນລັດ.

# ຄູ່ມືການຄຸ້ມຄອງແຜນງານການລົງທຶນລັດ

## ພາກທີ 2 ຂັ້ນຕອນ ແລະ ວິທີການ ຄຸ້ມຄອງແຜນງານ PIP

### ສາລະບານ

**1.ຂັ້ນຕອນການຄຸ້ມຄອງແຜນງານ PIP ........ 2**

**2.ການກຳນົດແຜນງານ PIP ........ 4**

2.1 ຂັ້ນຕອນທີ່ 1: ການວິເຄາະ SEDP ........ 4

2.2 ການກຳນົດບັນດາທິວໜ່ວຍແຜນງານ PIP ........ 7

2.3. ການສ້າງແຜນທີ່ໂຄງການລົງທຶນລັດ ........ 20

**3. ການຕິດຕາມກວດກາ ບັນດາທິວໜ່ວຍ ແຜນງານ PIP ແລະ ແຜນທີ່ໂຄງການລົງທຶນລັດ ........ 25**

3.1 ການຕິດຕາມກວດກາ ບັນດາທິວໜ່ວຍ ແຜນງານ PIP ........ 26

3.2 ການຕິດຕາມກວດກາ ແຜນທີ່ໂຄງການລົງທຶນລັດ ........ 29

3.3 ການສະທ້ອນຜົນຂອງການຕິດຕາມກວດກາ ໃຫ້ແຕ່ລະໂຄງການລົງທຶນລັດ ........ 30

**4. ການປະເມີນຜົນ ບັນດາທິວໜ່ວຍແຜນງານ PIP ........ 32**

4.1.ຄວາມສຳເລັດ ແລະ ຄວາມຄືບໜ້າ ຂອງບັນດາເປົ້າໝາຍທິວໜ່ວຍ ແຜນງານ PIP ........ 32

4.2 ການປະເມີນຜົນ ໂດຍການນຳໃຊ້ 5 ມາດຕະຖານການປະເມີນຜົນ ........ 33

4.3.ຂໍ້ສະຫຼຸບ ແລະ ຄຳເຫັນແນະນຳ ........ 36

4.4.ສິ່ງທີ່ສະທ້ອນໃຫ້ເຫັນ ຈາກຜົນຂອງການປະເມີນຜົນ ........ 36

## ພາກທີ 2 ຂັ້ນຕອນ ແລະ ວິທີການ ຄຸ້ມຄອງແຜນງານ PIP

ຢູ່ພາກນີ້ແມ່ນອະທິບາຍລະອຽດກ່ຽວກັບຂັ້ນຕອນ, ວິທີການ ແລະ ເຄື່ອງມື ທີ່ຈະນໍາໃຊ້ເຂົ້າໃນການຄຸ້ມຄອງແຜນງານ.

### 1. ຂັ້ນຕອນການຄຸ້ມຄອງແຜນງານ PIP

ການຄຸ້ມຄອງແຜນງານ PIP ໂດຍທົ່ວໄປແລ້ວ ແມ່ນເລີ່ມຕົ້ນປະຕິບັດໃນ *ລັກສະນະໄລຍະກາງ*. ບັນດາຫົວໜ່ວຍແຜນງານ PIP ໄດ້ຖືກກໍານົດຂຶ້ນ ຈາກແຜນພັດທະນາເສດຖະກິດ-ສັງຄົມ 5 ປີ, ແລະ ຈະຖືກຕິດຕາມກວດກາ ໂດຍປະຈໍາປີ ແລະ ຈະໄດ້ແກ້ໄຂໂດຍອີງໃສ່ແຜນລວມບົດລາຍງານປະຈໍາປີ. ເຊິ່ງສາມາດເວົ້າໄດ້ວ່າ ບັນດາຫົວໜ່ວຍແຜນງານ PIP ທີ່ໄດ້ຖືກນໍາໃຊ້ນັ້ນ ເປັນເຄື່ອງມືຕິດຕາມກວດກາຄວາມສໍາເລັດຂອງແຜນພັດທະນາເສດຖະກິດ-ສັງຄົມ.

ຂັ້ນຕອນການຄຸ້ມຄອງແຜນງານ PIP ແມ່ນແບ່ງອອກເປັນ 6 ຂັ້ນຕອນ. ລາຍລະອຽດຈະໄດ້ອະທິບາຍດັ່ງຕໍ່ໄປນີ້

**ຮູບທີ່ 1: 6 ຂັ້ນຕອນ ໃນການຄຸ້ມຄອງແຜນງານ PIP**




### (1) ການວິເຄາະຂອງແຜນພັດທະນາເສດຖະກິດ-ສັງຄົມ

ຍ້ອນການກໍານົດແຜນງານ PIP ແມ່ນອີງໃສ່ພື້ນຖານຂອງແຜນພັດຖະນາເສດຖະກິດ-ສັງຄົມ, ກ່ອນອື່ນໝົດຕ້ອງ ***ວິເຄາະແຜນພັດທະນາເສດຖະກິດ-ສັງຄົມ*** ກ່ອນ. ມັນໄດ້ດໍາເນີນການ ໂດຍຜ່ານການສົມທຽບຜົນສໍາເລັດ ໃນໄລຍະຜ່ານມາ ແລະ ປະຈຸບັນ ຂອງແຜນພັດທະນາເສດຖະກິດ-ສັງຄົມ ເພື່ອຊອກຫາວ່າອັນໃດໃໝ່ ແລະ ອັນໃດກໍາລັງສືບຕໍ່. ຍ້ອນວ່າ ເປົ້າໝາຍອັນໃໝ່ສໍາລັບ 5 ປີທີ່ຈະມາເຖິງນັ້ນ ໄດ້ຖືກຕັ້ງໄວ້ແລ້ວ, ມັນມີຄວາມສໍາຄັນ ຕ້ອງໄດ້ກ່າວເຖິງເປົ້າໝາຍເຫຼົ່ານີ້ ກ່ອນທີ່ຈະມີການກໍານົດຫົວໜ່ວຍແຜນງານ PIP.

**(2) ການກຳນົດບັນດາທິວໜ່ວຍແຜນງານ PIP**

ໂດຍອີງໃສ່ການວິເຄາະບັນດາຜົນໄດ້ຮັບ, ***ບັນດາທິວໜ່ວຍແຜນງານ PIP*** ໄດ້ຖືກກຳນົດໂດຍການຜັນຂະຫຍາຍແຍກບັນດາເປົ້າໝາຍຕົ້ນຕໍຂອງແຜນ SEDP. ລາຍລະອຽດຂອງບັນດາທິວໜ່ວຍແຜນງານ PIP ໄດ້ຖືກກຳນົດໂດຍການວິເຄາະດ້ານການພົວພັນຂອງ SEDP ແລະ ແຕ່ລະບັນດາໂຄງການລົງທຶນລັດ ຕາມລັກສະນະຂອງການນຳໃຊ້ ***ເຄືອຈຸດປະສົງແຜນງານ (POT)*** ທີ່ເໝາະສົມ. ຕໍ່ໄປຈຶ່ງກຳນົດຈາກລັກສະນະຂອງການນຳໃຊ້ ***ຕາຕະລາງລຳດັບໂຄງການ (ໂຄງໂນໂລຊີ).*** ການສຶກສາແຕ່ລະຂັ້ນຕອນນີ້ຄວນຈະເຮັດໃຫ້ສຳເລັດໃນຕອນເລີ່ມຂອງໄລຍະກາງ, ໄວເທົ່າທີ່ຈະໄວໄດ້ ພາຍຫຼັງແຜນ SEDP 5 ປີ ໄດ້ຖືກປະກາດອອກ.

**(3). ການກຳນົດແຜນທີ່ໂຄງການລົງທຶນລັດ**

ໂດຍອີງໃສ່ການວິເຄາະຂອງຜົນໄດ້ຮັບຂອງ SEDP, ບັນດາແຜນທີ່ໂຄງການລົງທຶນລັດ ຈະຖືກກຳນົດເພື່ອບອກເຖິງທີ່ຕັ້ງຂອງ ໂຄງການລົງທຶນລັດ ແລະ ຂໍ້ມູນຕ່າງໆທີ່ໄດ້ພົວພັນເຖິງ NSEDP ບັນດາເປົ້າຫມາຍໂຄງການລົງທຶນລັດ ຢູ່ໃນແຜນທີ່. ອັດຕາສ່ວນ ແລະ ຂະໜາດຂອງຄວາມແຕກຕ່າງ ທີ່ໃຊ້ຢູ່ໃນແຜນທີ່ແມ່ນຂື້ນກັບລະດັບ ທີ່ໄດ້ສຶກສາຈາກທິວຫນ່ວຍແຜນງານ PIP. ຕົວຢ່າງ: ໂດຍທົ່ວໄປແລ້ວແຜນທີ່ທົ່ວປະເທດແມ່ນໄດ້ຖືກນຳໃຊ້ ເພື່ອສຶກສາທິວຫນ່ວຍແຜນງານຫນຶ່ງ ໃນລະດັບຂັ້ນຂະແໜງການ (ກະຊວງ). ສຳລັບ ໃນກໍລະນີສຶກສາແຜນງານຫນຶ່ງ ໃນລະດັບທ້ອງຖິ່ນ, ອາດຈະໃຊ້ແຜນທີ່ມາດຕາສ່ວນທີ່ນ້ອຍກວ່າແມ່ນຂື້ນກັບອັດຕາສ່ວນ ທີ່ໄດ້ສຶກສາຢູ່ທ້ອງຖິ່ນນັ້ນ. ຂັ້ນຕອນຂອງ ການສຶກສານີ້ ຄວນຈະຈັດຕັ້ງປະຕິບັດຢູ່ຕອນເລີ່ມຕົ້ນຂອງໄລຍະກາງ, ໄວເທົ່າທີ່ຈະໄວໄດ້ ພາຍຫຼັງແຜນ SEDP 5 ປີ ໄດ້ຖືກປະກາດອອກ.

**(4). ການຕິດຕາມກວດກາ ທິວໜ່ວຍແຜນງານ PIP ແລະ ແຜນທີ່ໂຄງການລົງທຶນລັດ**

ທິວໜ່ວຍແຜນງານ PIP ແລະ ແຜນທີ່ໂຄງການລົງທຶນລັດ ໂດຍທົ່ວໄປແລ້ວຈະຖືກຕິດຕາມກວດກາປະຈຳປີ. ພາຍຫຼັງແຜນ SEDP ໄດ້ຖືກປະກາດອອກ ຄຽງຄູ່ກັບຄູ່ມືແນະນຳງົບປະມານການລົງທຶນລັດ, ເນື້ອໃນຂອງແຕ່ລະທິວຫນ່ວຍແຜນງານ PIP ລວມທັງແຜນທີ່ລົງທຶນລັດ ຈະຖືກດັດແກ້ ອີງຕາມການປ່ຽນແປງຢູ່ພາຍໃນແຜນຂອງມັນເອງ. ຂໍ້ມູນຂ່າວສານຂອງໂຄງການລົງທຶນລັດ ຈະໄດ້ມີການປັບດັດໃຫ້ທັນກັບສະພາບການ ທີ່ລວມເອົາໂຄງການໃໝ່ ແລະ ໄດ້ກວດຄືນບັນດາໂຄງການທີ່ສຳເລັດແລ້ວ.

**(5). ການປະເມີນຜົນຂອງທິວຫນ່ວຍແຜນງານ PIP**

ກ່ອນໄລຍະກາງຈະສຳເລັດ, ທິວຫນ່ວຍແຜນງານ PIP ແມ່ນຈະຖືກປະເມີນຜົນ. ຈຸດປະສົງແມ່ນ ຕ້ອງການກວດຄືນ ລະດັບການບັນລຸຜົນສຳເລັດ ຂອງທິວຫນ່ວຍແຜນງານ PIP ພາຍໃນໄລຍະກາງ. ນອກຈາກກວດຄືນການດຳເນີນງານຂອງ ແຕ່ລະບັນດາໂຄງການລົງທຶນລັດແລ້ວ, ການດຳເນີນການຂອງເຂດແຄວັນ ແລະ ຂະແໜງການທາງອ້ອມ ຕ້ອງມີການກວດຄືນເຊັ່ນດຽວກັນ. ຜົນໄດ້ຮັບຈາກການສຶກສາການປະ

ເມີນຜົນຈະເປັນສິ່ງອ້າງອີງທີ່ສຳ ຄັນໃຫ້ແກ່ການສ້າງແຜນການ ສຳລັບໄລຍະກາງຕໍ່ໄປຂອງ SEDP.

### (6). ການສະທ້ອນຜົນໄດ້ຮັບໃຫ້ແກ່ SEDP ສະບັບໃໝ່

ບັນດາຜົນໄດ້ຮັບຂອງການປະເມີນຜົນ, ລວມທັງຄຳຄິດເຫັນແນະນຳ ແລະ ບົດຮຽນທີ່ຖອດຖອນໄດ້ຈາກ ການ ສຶກສາການປະເມີນຜົນສາມາດຖືກນຳໃຊ້ເພື່ອເປັນສິ່ງອ້າງອີງໃຫ້ແກ່ແຜນ SEDP ອັນຕໍ່ໄປ. ຫົວໜ່ວຍແຜນງານ PIP ຈະຕ້ອງໄດ້ສຶກສາຢ່າງຄົບຖ້ວນ, ລວມທັງຄວາມສຳເລັດ ແລະ ແນວທາງການລົງທຶນພາກເອກະ ຊົນຂອງສັງຄົມ. ເມື່ອ SEDP ໃໝ່ໄດ້ຖືກວາງແຜນ ແລະ ປະກາດອອກ, ຕ້ອງມີການວິເຄາະຕື່ມອີກເທື່ອໜຶ່ງ ເພື່ອກຳນົດບັນດາຫົວໜ່ວຍແຜນງານ PIP ຊຸດໃໝ່.

## 2. ການກຳນົດແຜນງານ PIP

ສາມຂັ້ນຕອນທຳອິດ ຢູ່ໃນຂັ້ນຕອນຂອງການຄຸ້ມຄອງແຜນງານ ແມ່ນຂັ້ນຕອນເພື່ອກຳນົດແຜນງານ PIP. ພາກຍ່ອຍຕໍ່ໄປນີ້ ຈະໄດ້ອະທິບາຍເຖິງ ວິທີການສະເພາະ ສຳລັບການກຳນົດແຜນງານ PIP.

### 2.1 ຂັ້ນຕອນທີ່ 1: ການວິເຄາະ SEDP

ດັ່ງທີ່ໄດ້ອະທິບາຍ ໃນພາກ I, NSEDP ແມ່ນວາລະພາຍໃນປະເທດເພື່ອການພັດທະນາ, ການສັງເຂບທິດທາງ ລັດຖະບານເພື່ອບັນລຸເປົ້າໝາຍການພັດທະນາເສດຖະກິດ ແລະ ສັງຄົມໄລຍະກາງ. ພາຍໃຕ້ NSEDP, SEDP ຈະໄດ້ຖືກສ້າງຂຶ້ນ ພາຍໃນບັນດາຂະແໜງການຂັ້ນກະຊວງ ແລະ ບັນດາແຂວງຕ່າງໆ ຕາມລຳດັບ.

ການວິເຄາະໄດ້ມີຂຶ້ນໂດຍການສົມທຽບຜົນສຳເລັດ ຂອງ SEDP ທີ່ຜ່ານມາ ແລະ ໃນປະຈຸບັນ, ແລະ ຊອກເບິ່ງວ່າອັນໃດກຳລັງສືບຕໍ່ ຫຼື ອັນໃດໃໝ່. ຍ້ອນວ່າເປົ້າໝາຍສຳລັບ 5 ປີທີ່ກຳລັງຈະມາເຖິງໄດ້ຖືກຕັ້ງຂຶ້ນແລ້ວ, ມັນມີຄວາມສຳຄັນ ຕ້ອງໄດ້ກ່າວເຖິງເປົ້າໝາຍເຫຼົ່ານີ້ ກ່ອນໜ້າຈະມີການກຳນົດຫົວໜ່ວຍແຜນງານ PIP.

ມັນມີຄວາມສຳຄັນຫຼາຍທີ່ຈະຕ້ອງເຂົ້າໃຈ SEDP ທັງໝົດ, ຕາຕະລາງລຸ່ມນີ້ ແມ່ນສະແດງໃຫ້ເຖິງບາງຫົວຂໍ້ ທີ່ມີຄວາມສຳຄັນ ທີ່ຕ້ອງມີການວິເຄາະ ໃນເວລາກຳນົດແຜນງານ PIP.

## ຕາຕະລາງ 1: ບັນດາຫົວຂໍ້ສຳລັບການວິເຄາະ SEDP

| ຫົວຂໍ້ | ບັນດາຈຸດທີ່ຕ້ອງວິເຄາະ |
|---|---|
| ອົງປະກອບ ຂອງແຜນພັດທະນາທີ່ມີຢູ່ | ➢ ຂຽນລາຍຊື່ ຂອງ ບັນດາແຜນພັດທະນາ ທີ່ໄດ້ມີການກະກຽມແລ້ວ.<br>➢ ມັນອາດຈະແມ່ນ 20 ປີ, 10 ປີ, 5 ປີ, 2.5 ປີ ແລະ ແຕ່ລະປີ |
| ຍຸດທະສາດ ການພັດທະນາໂດຍລວມ ໃນແຜນ 20 ປີ | ➢ ເຂົ້າໃຈທິດທາງການພັດທະນາຂອງຂະແໜງການ/ເຂດແຄວ້ນ, ລວມທັງທິດທາງການພັດທະນາລວມ ໄລຍະຍາວ<br>➢ ຕ້ອງໄດ້ເຂົ້າໃຈ ເຊັ່ນດຽວກັນ ກ່ຽວກັບ ບັນດາຕົວຊີ້ວັດມະຫາພາກ, ບັນດາ ໜ້າວຽກຕົ້ນຕໍ ແລະ ແນວທາງແນະນຳ ຢູ່ໃນໄລຍະກາງ. |
| ຍຸດທະສາດ<br>ການພັດທະນາ ໄລຍະກາງ (10 ປີ) | ➢ ຈຸດທີ່ຕ້ອງມີການວິເຄາະ ແມ່ນຄືກັນກັບ ແຜນ 20 ປີ.<br>➢ ຍຸດທະສາດ ການພັດທະນາ ໄລຍະກາງ ຈະເປັນ ໄລຍະວັດແທກ ເຄິ່ງທາງຂອງແຜນ 20 ປີ. |
| ຫົວຂໍ້ ທີ່ສຳຄັນ ແລະ<br>ຫົວເລື່ອງທີ່ກວມ ເອົາທຸກປະເດັນ | ➢ ມີຫຼາຍຫົວຂໍ້ ທີ່ເປັນ ຫົວເລື່ອງທີ່ກວມເອົາທຸກປະເດັນ ແລະ ມີຫຼາກຫຼາຍແງ່ມູມ, ດ້ວຍເຫດນີ້ ຈຶ່ງບໍ່ສາມາດກ່ຽວພັນສະເພາະ ກັບຂະແໜງການດຽວໄດ້. ບັນດາຫົວຂໍ້ເຫຼົ່ານີ້ ຕ້ອງມີການເອົາໃຈໃສ່ ຢ່າງລະອຽດທີ່ສຸດ ຈາກມູມມອງທີ່ ຮອບດ້ານ.<br>➢ ບັນດາຫົວຂໍ້ດັ່ງກ່າວນີ້ ແມ່ນ ການຫລຸດຜ່ອນຄວາມທຸກຍາກ, ຄວາມສະເຫມີພາບລະຫວ່າງບົດບາດຍິງ-ຊາຍ, ການຮັກສາສິ່ງແວດລ້ອມ, ການພັດທະນາ ພາກທຸລະກິດ, ວິທະຍາສາດ & ເຕັກໂນໂລຊີ ແລະ ອື່ນໆ. |
| ການພັດທະນາ ຂະແໜງການ ແລະ ໜ່ວຍງານ | ➢ ເຂົ້າໃຈບັນດາເປົ້າໝາຍ (ໄລຍະຍາວກັບບັນດາຕົວຊີ້ວັດເປົ້າໝາຍ) ພາຍໃນ ແຕ່ລະຂະແໜງການ ແລະ ໜ່ວຍງານ.<br>➢ ຊອກຫາສາຍພົວພັນ ກັບຫົວເລື່ອງທີ່ກວມເອົາທຸກປະເດັນ ແລະ ບັນດາຂະ ແໜງການ ອື່ນໆ. |
| ການພັດທະນາເຂດແຄວ້ນ | ➢ ເຂົ້າໃຈບັນດາເປົ້າໝາຍລວມ (ລວມທັງບັນດາຕົວຊີ້ວັດເປົ້າໝາຍ) ພາຍ ໃນເຂດແຄວ້ນ ແລະ ຂົງເຂດໃນເຂດແຄວ້ນນັ້ນ. .<br>➢ ຊອກຫາສາຍພົວພັນ ກັບ ບັນດາຍຸດທະສາດ ຂອງຂະແໜງການ ແລະ ໜ່ວຍງານ<br>➢ ຊອກຫາສາຍພົວພັນ ກັບບັນດາເຂດແຄວ້ນໃກ້ຄຽງ ແລະ ຂົງເຂດ ໃນ ເຂດແຄວ້ນນັ້ນ. |

ຈຸດຂອງການວິເຄາະແມ່ນພະຍາຍາມຊີ້ບອກ ຄວາມເປັນໄປໄດ້ທາງດ້ານປະລິມານຂອງ SEDP. ນອກຈາກຍຸດທະສາດລວມແລ້ວ, ບັນດາຫົວຂໍ້ສ່ວນໃຫ່ຍ ກໍ່ສາມາດສະແດງໃຫ້ເຫັນໄດ້ໃນທາງປະລິມານ. ຖ້າມີຈຸດໃດ ຫນຶ່ງທີ່ສຳຄັນທີ່ພຽງແຕ່ສະແດງໃຫ້ເຫັນທາງດ້ານຄຸນນະພາບເທົ່ານັ້ນ, ມັນມີຄວາມສຳຄັນຫຼາຍທີ່ຈຸດດັ່ງກ່າວນີ້ ຈະຕ້ອງກຳນົດເປັນປະລິມານເຊັ່ນກັນຖ້າເປັນໄປໄດ້.

## ຕົວຢ່າງຂອງການວິເຄາະ

ເອກະສານຄັດຕິດ 1 ສະແດງໃຫ້ເຫັນເຖິງຕົວຢ່າງຕ່າງໆ ຂອງການວິເຄາະ ແຜນພັດທະນາ ຄື: 1)

ແຜນພັດທະ ນາເສດຖະກິດສັງຄົມຂັ້ນແຂວງ (PSEDP) ແລະ 2) ແຜນພັດທະນາຂະແໜງ ການຕົວແບບ ຄື ຂະແໜງໂຍທາທິການ ແລະ ຂົນສົ່ງ (PWTDP) ໃນ 3 ແຂວງ ທົດລອງຂອງໂຄງການ ພິແຄັບ 2, ກ) ແຂວງ ອຸດົມໄຊ, ຂ) ແຂວງ ຄຳມ່ວນ ແລະ ຄ) ແຂວງ ສາລະວັນ.

## ຜົນໄດ້ຮັບ ຂອງການວິເຄາະຕົວຢ່າງ

ໂດຍຜ່ານການວິເຄາະຕົວຢ່າງ, ບາງຜົນໄດ້ຮັບສາມາດສະແດງໃຫ້ເຫັນດັ່ງຕໍ່ໄປນີ້;

### *1) ແຜນໄລຍະກາງ*

ບາງແຂວງບໍ່ມີ ແຜນພັດທະນາເສດຖະກິດສັງຄົມຂອງແຂວງ 10 ປີ ແລະ ນັ້ ນໄດ້ສະແດງໃຫ້ເຫັນທິດທາງການພັດທະນາໄລຍະກາງ (10 ປີ), ບັນດາຕົວຊີ້ວັດລະດັບມະຫາພາກ, ເປົ້າໝາຍ ແລະ ບັນດາໜ້າວຽກ. ແຜນ 10 ປີ ໂດຍທົ່ວ ໄປແລ້ວ ຕ້ອງສະແດງໃຫ້ເຫັນ ບັນດາອົງປະກອບດັ່ງກ່າວນັ້ນ ເຊິ່ງເປັນໄລຍະວັດແທກເຄິ່ງທາງ ຂອງແຜນພັດທະນາ 20 ປີ. ນອກຈາກນັ້ນແລ້ວ, ແຜນ 10 ປີ ສາມາດເຮັດໃຫ້ບັນດາເປົ້າໝາຍມີຄວາມຈະແຈ້ງ ພາຍຫຼັງ ການບັນລຸຜົນສຳເລັດຂອງແຜນພັດທະນາ 5 ປີທຳອິດ ພາຍໃນຍຸດທະສາດການພັດທະນາ ໄລຍະ 20 ປີ. ດັ່ງນັ້ນ ບັນດາເປົ້າໝາຍໃນ 20 ປີ, 10 ປີ ແລະ 5 ປີ ສາມາດຖືກສະແດງໃຫ້ເຫັນ ໃນພາບລວມຂອງການພັດທະ ນາໂດຍທົ່ວໄປສຳລັບ 20 ປີ. ໃນຄວາມໝາຍດັ່ງກ່າວນີ້, ບັນດາທິດທາງການພັດທະນາ, ບັນດາຕົວຊີ້ວັດລະດັບມະຫາພາກ, ເປົ້າໝາຍ ແລະ ບັນດາໜ້າວຽກທີ່ຕ້ອງການ ຈະບັນລຸຜົນສຳເລັດໃນ 10 ປີ ຕ້ອງໄດ້ມີການ ກະກຽມຕັ້ງແຕ່ເລີ່ມ ຕົ້ນ ຂອງຍຸດທະສາດ 20 ປີ, ທີ່ເຊິ່ງຕ້ອງມີການທົບທວນ ແລະດັດແກ້ທຸກໆ 5 ປີ ໃນຂັ້ນຕອນທີ່ ມີການຮັບຮອງທາງການ.

### *2) ຫົວຂໍ້ ທີ່ສຳຄັນ ແລະ ຫົວເລື່ອງທີ່ກວມທຸກປະເດັນ*

ທຸກໆເອກະສານການພັດທະນາ ເສດຖະກິດ-ສັງຄົມ ໄດ້ອະທິບາຍເນື້ອໃນຕ່າງໆ ຂອງເນື້ອຫາການພັດທະນາຕາມແຕ່ລະຂະແໜງການ. ໂຄງສ້າງຂອງເນື້ອໃນນີ້ ບໍ່ມີບັນຫາ ຄືກັບບັນດາເອກະສານ ແຜນພັດທະນາ. ແຕ່ຢ່າງໃດກໍ່ຕາມ, ມັນມີຄວາມສຳຄັນເຊັ່ນດຽວກັນ ທີ່ເອກະສານນັ້ນຕ້ອງມີການກ່າວເຖິງການພັດທະນາ ໃນຫົວເລື່ອງທີ່ກວມທຸກປະເດັນ ເຊັ່ນ ສິ່ງແວດລ້ອມ, ປະເດັນບົດບາດຍິງ-ຊາຍ, ແລະ ການຫຼຸດຜ່ອນຄວາມທຸກຍາກ, ທີ່ໄດ້ກ່າວໄວ້ແລ້ວໃນແຜນພັດທະນາແຫ່ງຊາດ (NSEDP) 2006-2010. ການຫຼຸດຜ່ອນຄວາມທຸກຍາກ ເປັນປະເດັນທີ່ມີຄວາມສຳຄັນ ໂດຍສະເພາະໃນພື້ນທີ່ຕ່າງໆ ຖືວ່າເປັນເປົ້າໝາຍລວມທັງໝົດຂອງບັນດາແຜນພັດທະນາທັງໝົດ. ນອກຈາກນັ້ນ, ການຄຳນຶງເຖິງ ສິ່ງແວດລ້ອມ ໃນປັດຈຸບັນນີ້ເປັນປະເດັນທີ່ສຳຄັນໃນ ທົ່ວໂລກເພື່ອການພັດທະນາແບບຍືນຍົງ. ດັ່ງນັ້ນ, ມັນມີຄວາມຈຳເປັນທີ່ວ່າເນື້ອໃນການພັດທະນາໃນແຕ່ລະຂະແໜງການນັ້ນ ຈະຕ້ອງໄດ້ກ່າວເຖິງ ໃຫ້ເຫັນຢ່າງໜ້ອຍສຸດວ່າ ມັນຈະສາມາດປະກອບສ່ວນແນວໃດ ເພື່ອບັນລຸເປົ້າໝາຍຕ່າງໆ ໃນແຕ່ລະຫົວເລື່ອງທີ່ກວມທຸກປະເດັນ.

### *3) ປະເດັນ ການພັດທະນາເຂດແຄວ້ນ*

ບາງແຜນພັດທະນາ ຂອງຂະແໜງ ໂຍທາທິການ ແລະຂົນສົ່ງ ບໍ່ໄດ້ກ່າວເຖິງເຂດແຄວ້ນທີ່ເປັນຈຸດເປົ້າໝາຍ, ຫຼັກການ ແລະ ບັນດາເປົ້າໝາຍຂອງການພັດທະນາ. ມັນມີຄວາມຈຳເປັນສຳລັບແຕ່ລະບັນດາແຜນພັດທະນາຂອງຂະແໜງການ ຕ້ອງໄດ້ກ່າວເຖິງ ບັນດາອົງປະກອບທີ່ໄດ້ສະແດງໃນ "ຮູບທີ 1". ນອກຈາກນີ້, ທັດສະນະຂອງການພັດທະນາເຂດແຄວ້ນມີຄວາມສຳຄັນ ຕໍ່ກັບປະເດັນກວມລວມເຊັ່ນການ ຫຼຸດຜ່ອນຄວາມທຸກຍາກ, ແລະ ຄວາມບໍ່ເທົ່າທຽມກັນລະຫວ່າງ ເຂດແຄວ້ນຕ່າງໆ.

### *4) ຄຳສັບ*

ບາງຄຳທາງດ້ານວິຊາການທີ່ສຳຄັນ ເຊັ່ນ ເປົ້າໝາຍລວມ, ເປົ້າໝາຍ (ຈຸດມຸ່ງໝາຍ), ຕົວຊີ້ວັດ, ຈຸດປະສົງ, ກິດຈະກຳ, ໂຄງການ ແລະ ແຜນງານ ໂດຍເລື້ອຍໆ ແລ້ວມີຄວາມສັບສົນໃນການນຳໃຊ້ໃນທຸກໆ ແຜນພັດທະນາ. ໂດຍສະເພາະຄຳສັບ, ເຊັ່ນ ກິດຈະກຳ ແລະ ໂຄງການ ທີ່ ໂດຍເລື້ອຍໆ ແລ້ວໄດ້ຖືກນຳໃຊ້ໃນຄວາມໝາຍອັນດຽວກັນແຕ່ບາງເທື່ອໄດ້ຖືກນຳໃຊ້ມີຄວາມໝາຍແຕກຕ່າງ ເຊິ່ງກັນແລະກັນ. ເພື່ອຫຼີກລ້ຽງຄວາມສັບສົນດັ່ງກ່າວນີ້, ມັນມີຄວາມຈຳເປັນຕ້ອງໄດ້ໃຫ້ຄຳນິຍາມ ຄວາມໝາຍຢ່າງຈະແຈ້ງຂອງແຕ່ລະຄຳກໍຄື ລຳດັບຊັ້ນຂອງບັນດາຄຳເຫຼົ່ານີ້. ສິ່ງທີ່ຢາກແນະນຳແມ່ນ ຕ້ອງຂຽນຄຳນິຍາມຂອງ ບັນດາຄຳສັບຕົ້ນຕໍນີ້ ໃນຕອນຕົ້ນ ຂອງເອກະສານບັນດາແຜນພັດທະນາ.

### *5) ບັນດາອົງປະກອບ ທາງດ້ານປະລິມານ ຂອງບັນດາຕົວຊີ້ວັດ*

ບັນດາຫຼາຍໆ ຕົວຊີ້ວັດ ໃນແຜນພັດທະນາ ບໍ່ມີ ອົງປະກອບ ທາງປະລິມານຕ່າງໆ ຢ່າງພຽງພໍ. ມີຫຼາຍໆຕົວຊີ້ວັດ ທີ່ກ່າວພຽງແຕ່ເນື້ອໃນໂດຍຫຍໍ້ ຂອງສະຖານະການ ທີ່ຕ້ອງການຈະບັນລຸຜົນສຳເລັດ ພາຍຫຼັງການຈັດຕັ້ງປະຕິບັດ ແຜນຕ່າງໆ. ການຂາດອົງປະກອບທາງດ້ານປະລິມານ ຂອງບັນດາຕົວຊີ້ວັດນີ້ບໍ່ພຽງແຕ່ເຮັດໃຫ້ຄວາມຊັດເຈນ ຂອງສິ່ງທີ່ແຜນຕ້ອງການຈະບັນລຸຜົນນັ້ນຫຼຸດລົງ ແຕ່ມັນຍັງເຮັດໃຫ້ບໍ່ສາມາດຕິດຕາມກວດກາ ແລະ ປະເມີນຜົນ ຄວາມຄືບໜ້າ ແລະ ຜົນສຳເລັດ ຂອງບັນດາແຜນ ທາງດ້ານປະລິ ມານໄດ້ບັນດາຕົວຊີ້ວັດ ໂດຍທົ່ວໄປ ຕ້ອງກ່າວເຖິງ 1) ແມ່ນຫຍັງ; 2) ເທົ່າໃດ; 3) ດີແນວໃດ; 4) ເວລາໃດ; ແລະ 5) ຢູ່ໃສ ເຖິງແມ່ນວ່າ ຈະເປັນຄຳເວົ້າແບບລັກສະນະບັນຍາຍ.

## 2.2 ການກຳນົດບັນດາຫົວໜ່ວຍແຜນງານ PIP

ດັ່ງທີ່ໄດ້ອະທິບາຍໃນ ພາກທີ I, ແຜນງານ PIP ໄດ້ພັນຂະຫຍາຍມາເປັນບັນດາຫົວໜ່ວຍແຜນງານ PIP, ໂດຍປາດສະຈາກການປະຊຸມຂອງແຜນ SEDP. ຍ້ອນວ່າແຜນ SEDP ໄດ້ສ້າງຂຶ້ນ ເຊິ່ງກວມໄລຍະ 5 ປີ, ດັ່ງນັ້ນ ບັນດາໜ່ວຍງານແຜນງານ PIP ກໍ່ຕ້ອງຖືກສ້າງຂຶ້ນຕາມຮອບວຽນ 5 ປີ ຄືກັນ. ພື້ນຖານຂອງບັນດາໜ່ວຍງານແຜນງານ PIP ຈະບໍ່ສາມາດປ່ຽນແປງໄດ້ ຢູ່ໃນຊ່ວງໄລຍະຮອບວຽນ 5 ປີ, ເວັ້ນແຕ່ວ່າມີການ ປ່ຽນແປງຢ່າງຫຼວງຫຼາຍໃນແຜນພັດທະນາ ຫຼື ໃນນະໂຍບາຍ. ເຖິງແນວໃດກໍ່ຕາມ, ເມື່ອມີຫົວຂໍ້ ຫຼື

ປະເດັນໃໝ່ເກີດຂຶ້ນ ໃນລະດັບຂັ້ນແຜນພັດທະນາ, ບັນດາຫົວໜ່ວຍແຜນງານ PIP ໃຫມ່ແມ່ນຈະຖືກພິຈາລະນາສ້າງຂຶ້ນ ຫຼື ທົບທວນຄືນ.

ບັນດາຫົວໜ່ວຍແຜນງານ PIP ຈະຖືກພັດທະນາໂດຍກອງປະຊຸມທີ່ໄດ້ເຂົ້າຮ່ວມຈາກ ບັນດາພະນັກງານຈາກ ພະແນກແຜນການ, ຂະແໜງການ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

DPI ຈະເປັນຜູ້ລິເລີ່ມດຳເນີນກອງປະຊຸມໃນເວລາກຳນົດບັນດາຫົວໜ່ວຍແຜນງານລະດັບຂັ້ນແຂວງ. ຕົວແທນ ຕາງໜ້າຈາກ ພະແນກການ ແລະ ເມືອງ ຈະຖືກເຊີນເຂົ້າຮ່ວມກອງປະຊຸມ. ໂດຍຫຼັກການແລ້ວ, ຫົວໜ່ວຍ ແຜນງານແມ່ນຈະຖືກພິຈາລະນາຈາກທັດສະນະຂອງຂະແໜງການ. ເຖິງແນວໃດກໍຕາມ, ເມື່ອທັດສະນະຂອງຂົງເຂດໃດໜຶ່ງ ໄດ້ຖືກພິຈະລະນາເຫັນວ່າ ເປັນປັດໃຈສຳຄັນ (ຕົວຢ່າງ, ມີຫຼາຍໆເມືອງ ຖືກພິຈາລະນາວ່າເປັນເມືອງທີ່ທຸກຍາກທີ່ສຸດ, ດັ່ງນັ້ນ SEDP ຕ້ອງມີການຕິດຕາມກວດກາບັນດາເມືອງນັ້ນ ຕະຫຼອດໄລຍະ 5 ປີ). ສິ່ງນັ້ນ ສາມາດຖືກພິຈະລະນາ ໃນທັງສອງທັດສະນະຄື ທັດສະນະຂອງຂະແໜງການ ແລະ ທັດສະນະຈາກ ຂົງເຂດດັ່ງກ່າວ (ທັດສະນະຂັ້ນເມືອງ). ສ່ວນບັນດາສະມາຊິກ MPI ແມ່ນມີສ່ວນຮ່ວມ ຢູ່ໃນຕຳແໜ່ງ ເປັນຜູ້ແນະນຳ.

ບັນດາສະມາຊິກ ກະຊວງແຜນການ ແລະ ການລົງທຶນ, ຄຽງຄູ່ກັບການສະໜັບສະໜູນຈາກກົມແຜນການ ຂອງບັນດາກະຊວງຕ່າງໆ ຈະເປັນຜູ້ລິເລີ່ມດຳເນີນກອງປະຊຸມ ໃນການກຳນົດບັນດາຫົວໜ່ວຍແຜນງານ PIP ລະດັບກະຊວງ. ຕົວແທນຕາງໜ້າຈາກບັນດາໜ່ວຍງານ ຂອງຂະແໜງການ ແລະພະແນກ ຂັ້ນແຂວງຈະຖືກເຊີນເຂົ້າຮ່ວມກອງປະຊຸມ. ໂດຍຫຼັກການແລ້ວ, ບັນດາຫົວໜ່ວຍແຜນງານຈະຖືກພິຈາ ລະນາຈາກທັດສະນະຂອງໜ່ວຍງານ. ເຖິງແນວໃດກໍຕາມ, ເມື່ອທັດສະນະຂອງເຂດແຄວ້ນພິຈາລະນາ ວ່າແມ່ນປັດໃຈທີ່ສຳຄັນ (ຕົວຢ່າງ, ບາງຂະແໜງ ມີຄວາມສົນໃຈພິເສດ ໃນພື້ນທີ່ພິເສດ; ເຊັ່ນວ່າພູພຽງບໍລິເວນ ສຳລັບຂະແໜງກະສິກຳ)

ຂັ້ນຕອນລຸ່ມນີ້ສະແດງບາດກ້າວສະເພາະ ເພື່ອກຳນົດບັນດາຫົວໜ່ວຍແຜນງານ PIP

### (1). ການໄຈ້ແຍກບັນດາຫົວໜ່ວຍແຜນງານ PIP

ອີງໃສ່ການວິເຄາະຂອງແຜນ SEDP, ***ຫົວໜ່ວຍແຜນງານ PIP*** ຈະຖືກກຳນົດໂດຍການແບ່ງອອກຈາກເປົ້າໝາຍຫຼັກ ຂອງ SEDP. ບັນດາເນື້ອໃນ ***ການພັດທະນາຂະແໜງການ ແລະ ໜ່ວຍງານ*** ລວມ ທັງ ***ການພັດທະນາເຂດແຄວ້ນ*** ຈະຖືກຍື່ນສະເໜີເປັນຕົວເລືອກ ເພື່ອກຳນົດບັນດາໜ່ວຍງານແຜນງານ PIP. ຖ້າແຜນ SEDP ຂັ້ນແຂວງໄດ້ຖືກສຶກສາ, ຫົວຂໍ້ທີ່ສຳຄັນ ແລະ ຫົວເລື່ອງທີ່ກວມເອົາທຸກປະເດັນຄວນຈະຖືກຍື່ນ ສະເໜີໃຫ້ເປັນຕົວເລືອກ ເພື່ອກຳນົດບັນດາໜ່ວຍງານແຜນງານ PIP ເຊັ່ນດຽວກັນ.

ຈຳນວນຂອງບັນດາຫົວໜ່ວຍແຜນງານ PIP ພາຍໃນSEDP ຂຶ້ນກັບຂະໜາດການສຶກສາຂອງຂະ ແໜງການ ຫຼື ແຂວງ, ແລະ ການຊັ່ງຊາຄວາມສາມາດດ້ານການຄຸ້ມຄອງ. ດ້ານການຄຸ້ມຄອງຈຳນວນຂອງ ບັນດາຫົວໜ່ວຍແຜນງານ PIP ພາຍໃນຂະແໜງການ ຫຼື ແຂວງ ຄວນຈະປະມານ 10 ຫົວໜ່ວຍ, ເຖິງແມ່ນ

ວ່າມັນຈະຂຶ້ນກັບຂະໜາດ ແລະ ການຄອບຄຸມ ຂອງແຕ່ລະຫົວໜ່ວຍແຜນງານ PIP ກໍຕາມ.

ເພື່ອຮັບປະກັນຈຳນວນເປົ້າໝາຍ ສຳລັບບັນດາຫົວໜ່ວຍແຜນງານໃຫ້ມີຄວາມຈະແຈ້ງ. ສຳລັບແຕ່ລະຫົວໜ່ວຍແຜນງານ, ຄວນຈະມີຕົວຊີ້ວັດຈຳນວນໜຶ່ງ ທາງດ້ານປະລິມານ, ເພື່ອວ່າບັນດາຫົວໜ່ວຍແຜນງານຈະມີວິທີການສັງເກດ ເພື່ອໃຫ້ບັນລຸເປົ້າໝາຍການພັດທະນາທີ່ສູງວ່າ.

ມັນເປັນສິ່ງທີ່ມີຄວາມສຳຄັນຫຼາຍ ໃນການກຳນົດປະເພດ ແລະ ຈຳນວນ ຂອງຫົວໜ່ວຍແຜນງານ PIP, ຍ້ອນວ່າສິ່ງເຫຼົ່ານີ້ ອາດຈະປ່ຽນນະໂຍບາຍ ແລະ ທິດທາງຂອງການຄຸ້ມຄອງ PIP ສຳລັບ 5 ປີ ຕະຫຼອດຮອດ ໄລຍະການຈັດຕັ້ງປະຕິບັດ SEDP. ຫຼັງຈາກທີ່ໄດ້ຕົກລົງພາຍໃນ ຂອງບັນດາສຳມະຊິກຢູ່ໃນກອງປະຊຸມແລ້ວ, ມັນມີຄວາມສຳຄັນຫຼາຍທີ່ຈະຕ້ອງລາຍງານໃຫ້ ຜູ້ຕັດສິນໃຈເພື່ອອະນຸມັດ, ດັ່ງນັ້ນ ມັນມີຄວາມເປັນເອກະພາບ ທີ່ຊັດເຈນທາງດ້ານນະໂຍບາຍ ແລະ ທິດທາງ.

### (2). ການກຳນົດເຄືອຈຸດປະສົງແຜນງານ (POT)

ເຄືອຈຸດປະສົງແຜນງານ (**POT**) ແມ່ນຈະຖືກກຳນົດຂຶ້ນສຳລັບທຸກໆຫົວໜ່ວຍແຜນງານ. ເຄືອຈຸດປະສົງແຜນງານນີ້ ແມ່ນມີໂຄງຮ່າງຄ້າຍຄືຕົ້ນໄມ້ເຊິ່ງມີ 3 ລະດັບໃຫຍ່. ເປົ້າໝາຍຂອງຫົວໜ່ວຍ ແຜນງານຢູ່ລະດັບເທິງສຸດ, ບັນດາເປົ້າໝາຍລະດັບກາງແມ່ນຈະຈັດຢູ່ລະດັບສອງ/ລະດັບກາງ, ແລະ ບັນດາໂຄງການລົງທຶນລັດ ແມ່ນຈະຢູ່ລະດັບສາມ, ຮູບສະແດງຂ້າງລຸ່ມ ນີ້ແມ່ນການພົວພັນລະຫວ່າງ ບັນດາເປົ້າໝາຍ ລະດັບກາງຕາມ ລຳດັບ**.**

**ຮູບ 2: ເຄືອຈຸດປະສົງ ແລະການພົວພັນລະຫວ່າງເຫດ ແລະຜົນ**



ການພົວພັນທາງຕັ້ງພາຍໃນ 3 ລະດັບແມ່ນມີເຫດມີຜົນ. ບັນດາຫົວໜ່ວຍແຜນງານ ມີການພົວພັນກັນຢ່າງມີເຫດມີຜົນ ເຊິ່ງກັນແລະກັນ ລະຫວ່າງແຕ່ລະບັນດາເປົ້າໝາຍລະດັບກາງ. ບັນດາເປົ້າໝາຍລະດັບກາງ ກໍ່ມີການພົວພັນຢ່າງມີເຫດມີຜົນ ກັບບັນດາໂຄງການລົງທຶນລັດ ທີ່ຂຶ້ນກັບຕົວມັນເອງຕາມລຳດັບ

ເຊັ່ນດຽວກັນ.

ໂດຍທົ່ວໄປແລ້ວ, POT ຈະຖືກສ້າງ ຈາກລະດັບຂັ້ນເທິງ, ລົງໄປຫາລຸ່ມສຸດ. ເຖິງແນວໃດກໍ່ຕາມ, ໃນບາງກໍລະນີ ທີ່ເປົ້າຫມາຍລະດັບກາງ; ຫຼື ລະດັບທີ່ສອງ; ແມ່ນບໍ່ຈະແຈ້ງ, ມັນຈະໄດ້ຖືກພັດ ທະນາພ້ອມໆ ກັນກັບການຈັດລຽງ ບັນດາໂຄງການລົງທຶນລັດ; ຫຼື ກັບລະດັບທີ່ສາມ. ບາດກ້າວລຸ່ມນີ້ແມ່ນ ວິທີການທີ່ເປັນມາດຖານ ກ່ຽວກັບວິທີການພັດ ທະນາ POT

**ບາດກ້າວ 1: ເປັນເອກະພາບກ່ຽວກັບເປົ້າຫມາຍຫົວຫນ່ວຍແຜນງານ ແລະ ບັນດາຕົວຊີ້ວັດຂອງມັນ**
ພາຍຫຼັງບາດກ້າວທີ່ (1), ຈະໄດ້ມີການຈັດປະເພດຂອງບັນດາຫົວຫນ່ວຍແຜນງານ, ຄຽງຄູ່ກັນກັບຈຳນວນເປົ້າ ຫມາຍທີ່ກ່ຽວຂ້ອງຂອງມັນ. ເພື່ອຈະພັດທະນາ POT, ມັນມີຄວາມສຳຄັນຫຼາຍ ທີ່ຕ້ອງມີຄວາມເປັນເອກະພາບ ກ່ຽວກັບເປົ້າຫມາຍ ແລະ ການຄອບຄຸມ ຂອງແຕ່ລະຫົວຫນ່ວຍແຜນງານ ແລະ ບັນດາຕົວຊີ້ວັດຂອງມັນ.

**ຮູບ 3: ບັນດາເປົ້າຫມາຍລະດັບກາງແລະຫົວຫນ່ວຍແຜນງານ**



**ບາດກ້າວ 2: ການພັດທະນາເປົ້າຫມາຍລະດັບກາງແບບມີເຫດມີຜົນ ແລະ ບັນດາຕົວຊີ້ວັດຂອງມັນ.**
ຍ້ອນວ່າບັນດາຫົວຫນ່ວຍແຜນງານແມ່ນ ເປັນອົງປະກອບຫນຶ່ງທີ່ຕ່າງຫນ້າຂອງ SEDP, ມັນອາດຈະບໍ່ໄດ້ພົວພັນ ຢ່າງມີໂລຊິກໂດຍກົງກັບບັນດາໂຄງການລົງການລົງທຶນລັດ, ເຖິງແມ່ນວ່າພວກມັນ ຈະຈັດຢູ່ໃນປະເພດດຽວກັນໂດຍທາງອ້ອມ. ແຕ່ຖ້າວ່າມັນມີການພົວພັນຢ່າງມີໂລຊິກ ມັນອາດຈະຕ້ອງເຮັດໃຫ້ສຳເລັດຫຼາຍໆໂຄງການລົງທຶນລັດ; ຕ້ອງມີການບໍລິຫານຫຼວງຫຼາຍ; ເພື່ອບັນລຸຜົນສຳເລັດ ຕາມເປົ້າຫມາຍຫົວຫນ່ວຍແຜນງານ. ດັ່ງນັ້ນ, ຈຶ່ງແນະນຳ ຄວນແບ່ງບັນດາຕົວຊີ້ວັດຫົວຫນ່ວຍແຜນງານ ອອກເປັນບັນດາອົງປະກອບນ້ອຍໆຕື່ມອີກ, ເພື່ອໃຫ້ຜົນທີ່ ໄດ້ຂອງແຕ່ລະລະໂຄງການລົງທຶນລັດ ແມ່ນສາມາດເຊື່ອມໂຍງກັບຜົນໄດ້ຮັບຂອງມັນ ທາງດ້ານການບັນລຸຜົນສຳເລັດ ຂອງເປົ້າໝາຍຫົວຫນ່ວຍແຜນງານ.

**ບາດກ້າວ 3: ຈັດວາງໂຄງການລົງທຶນລັດສືບຕໍ່ ແລະ ໂຄງການລົງທຶນລັດສະເໜີໃໝ່ ທີ່ພົວພັນໂດຍກົງກັບເປົ້າໝາຍ ຫືວໜ່ວຍແຜນງານ**

ຫຼັງຈາກວາງບັນດາເປົ້າໝາຍລະດັບກາງ, ຈັດບັນດາໂຄງການ ລົງທຶນລັດທີ່ເປັນຜົນຕໍ່ກັບແຕ່ລະເປົ້າໝາຍ. ໂຄງການລົງທຶນລັດ ລວມເຖິງໂຄງການສືບຕໍ່ ແລະສະເໜີໃໝ່. ສ່ວນບັນດາໂຄງການລົງທຶນລັດທີ່ກຳລັງສຶກສາຄວາມ ເປັນໄປໄດ້ແມ່ນຕ້ອງເອົາເຂົ້າບັນຊີຄືກັນ.

ນອກຈາກນີ້, ບັນດາໂຄງການ ລົງທຶນລັດ ທີ່ຫາກໍ່ສຳເລັດ, ຫຼື ສຳເລັດແລ້ວໃນມໍ່ໆມານີ້ ແລະ ຢູ່ໃນຂັ້ນຕອນການນຳໃຊ້, ກໍ່ຕ້ອງເອົາເຂົ້າບັນຊີຄືກັນ. ນີ້ກໍ່ເພື່ອຮັບປະກັນວ່າຜົນຕົວຈິງຂອງບັນດາໂຄງການລົງທຶນລັດ, ທີ່ຜ່ານມາ ແລະ ປະຈຸບັນ, ໄດ້ຖືກຕິດຕາມກວດກາ, ດັ່ງນັ້ນ ການປະກອບສ່ວນຂອງມັນຈຶ່ງໄດ້ຖືກລວມເຂົ້າໃນຜົນສຳເລັດຂອງບັນດາເປົ້າໝາຍລະດັບກາງ.

ຍິ່ງກ່ວານັ້ນ, ບັນດາໂຄງການ ລົງທຶນລັດ ທີ່ປະກອບສ່ວນທາງອ້ອມໃຫ້ແກ່ເປົ້າໝາຍລະດັບກາງ, ເຖິງແມ່ນວ່າມັນຈະສະໜອງຜົນທາງກົງໃຫ້ແກ່ເປົ້າໝາຍລະດັບກາງອື່ນໆກໍ່ຕາມ, ມັນກໍ່ຍັງນອນຢູ່ໃນບັນຊີນີ້ ຈາກຜົນໄດ້ຮັບນີ້, ບັນດາໂຄງການອາດຈະປະກົດຂຶ້ນຢູ່ພາຍໃຕ້ເປົ້າໝາຍລະດັບກາງຈຳນວນໜຶ່ງ ທີ່ຕ່າງກັນ.

**ຮູບ 4: ບັນຊີບັນດາໂຄງການ ລົງທຶນລັດ**



ໂຄງການລົງທຶນລັດ ທີ່ໄດ້ຂຶ້ນບັນຊີແລ້ວ ຕ້ອງມີຕົວຊີ້ວັດທີ່ສະແດງເຫັນຜົນໄດ້ຮັບ ຂອງຕົວຊີ້ວັດເປົ້າໝາຍລະດັບກາງ, ໂດຍການລວບລວມ ບັນດາຕົວຊີ້ວັດເຫຼົ່ານີ້, ການປະກອບສ່ວນໂດຍກົງຂອງບັນດາໂຄງການລົງທຶນລັດ ໃຫ້ແກ່ເປົ້າໝາຍລະດັບກາງ ໃນເວລານີ້ກໍ່ຈະມີຄວາມຊັດເຈນ.

**ບາດກ້າວ 4: ຊອກຫາຄວາມຕ້ອງການໃນຕໍ່ໜ້າ ພາຍໃນລະດັບທີ່ສາມເພື່ອໃຫ້ບັນລຸບັນດາເປົ້າໝາຍລະດັບກາງ**

ຖ້າ SEDP ຍັງຢູ່ໃນປີຕົ້ນໆ, ບັນດາແຜນໂຄງການລົງທຶນລັດທີ່ມີຢູ່ ອາດຈະບໍ່ພຽງພໍທີ່ຈະສະໜອງຜົນໄດ້ຮັບໃຫ້ແກ່ ການບັນລຸບັນດາເປົ້າໝາຍລະດັບກາງ. ຢູ່ໃນບາດກ້າວນີ້, ສະມາຊິກໃນກອງປະຊຸມຕ້ອງປຶກສາຫາລືກ່ຽວກັບ ທ່າແຮງຂອງບັນດາໂຄງການລົງທຶນລັດ ຫຼື ວິທີການທາງເລືອກອື່ນໆ ເພື່ອບັນລຸບັນດາເປົ້າໝາຍລະດັບກາງ.

ຖ້າບັນດາຂະແໜງການ ຫຼື ເຂດແຄວ້ນ ບ່ອນທີ່ການລົງທຶນ ເອກະຊົນ ແລະ ຄວາມສຳເລັດຂອງສັງຄົມມີຜົນກະທົບທາງກົງໃດໜຶ່ງ ໃຫ້ແກ່ການບັນລຸຂອງບັນດາເປົ້າໝາຍລະດັບກາງ, ມັນມີຄວາມຈຳເປັນທີ່ຕ້ອງກຳນົດປະລິມານ ຂອງມັນກ່ອນ ທີ່ຈະປຶກສາຫາລືກ່ຽວກັບທ່າແຮງຂອງບັນດາໂຄງການລົງທຶນລັດ.

ຫຼັງຈາກຫົວຂໍ້ນີ້ໄດ້ຮັບການຢືນຢັນແລ້ວ, ບັນດາຜູ້ເຂົ້າຮ່ວມກອງປະຊຸມຈະປຶກສາຫາລືວ່າ ຈະເຮັດແນວໃດເພື່ອບັນລຸເປົ້າໝາຍລະດັບກາງ ລວມທັງທ່າແຮງທາງກົງ ແລະ ທາງອ້ອມຂອງບັນດາໂຄງການລົງທຶນລັດ.

ຫຼັງຈາກກອງປະຊຸມໄດ້ຕົກລົງເຫັນດີ ເພື່ອພິຈາລະນາວາງແຜນການບັນດາໂຄງການລົງທຶນລັດ ໃດໜຶ່ງແລ້ວ, ພະແນກຂະແໜງການ/ເຂດແຄວ້ນຈະເລີ່ມຕົ້ນການກຳນົດ ແລະ ວາງແຜນໂຄງການ ເຊິ່ງຈະເປັນວິທີທາງເພື່ອບັນລຸເປົ້າໝາຍລະດັບກາງ

**ບາດກ້າວ 5: ຊອກຫາປະເດັນພື້ນຖານ ຢູ່ໃນລະດັບໜຶ່ງ ແລະ ສອງ ທີ່ອາດຈະ ເປັນຕົວອຸປະສັກການບັນລຸຜົນສຳເລັດ ຂອງບັນດາຕົວຊີ້ວັດ ເປົ້າໝາຍລະດັບກາງ**

ບັນດາເປົ້າໝາຍລະດັບກາງຈຳນວນໜຶ່ງອາດຈະບໍ່ຖືກບັນລຸ ໂດຍຜ່ານການເພີ່ມ ຫຼື ປັບປຸງໂຄງການລົງທຶນລັດ. ອາດມີຄວາມຕ້ອງການ ໃຫ້ມີສົມມຸດຖານອື່ນໆ, ລວມທັງບັນດາສາເຫດທີ່ພວກເຮົາບໍ່ສາມາດຄວບຄຸມໄດ້ (ກໍລະນີທຳມະຊາດ, ຜົນກະທົບດ້ານເສດຖະກິດມະຫາພາກ ແລະ ອື່ນໆ). ໃນກໍລະນີເຊັ່ນນີ້, ມັນມີຄວາມຈຳເປັນ ທີ່ຈະຕ້ອງວິເຄາະກໍລະນີຕ່າງໆເຫຼົ່ານີ້ ແລະ ຊອກຫາບັນດາມາດຕະການແກ້ໄຂທີ່ເປັນໄປໄດ້ທີ່ສາມາດບັນລຸເປົ້າໝາຍ.

ຖ້າບັນດາມາດຕະການແກ້ໄຂແມ່ນບໍ່ສາມາດໃຊ້ໄດ້ ຫຼື ບໍ່ຖືກກັບຕົວຈິງ, ມັນມີຄວາມຈຳເປັນທີ່ຈະຕ້ອງລາຍງານປະຫວັດຄວາມເປັນມາໃຫ້ແກ່ຜູ້ຕັດສິນໃຈ. ມັນມີຄວາມສຳຄັນຫຼາຍໃນເວລາຂຽນບົດລາຍງານ, ການຄາດຄະເນລະດັບຜົນໄດ້ຮັບ ໂດຍສົມທຽບກັບເປົ້າທຳອິດທີ່ໄດ້ຕັ້ງໄວ້ກ່ອນແລ້ວແມ່ນມີຄວາມຈຳເປັນ.

## ບົດສະຫຼຸບ ແລະ ໝາກຜົນ

ຂ້າງລຸ່ມນີ້ແມ່ນ ບົດສະຫຼຸບ ແລະ ໝາກຜົນ ໂດຍຜ່ານກອງປະຊຸມ POT;

**POT**: ເຄືອຈຸປະສົງແຜນງານ ເປັນສິ່ງອ້າງອີງ ທີ່ສຳຄັນໃນເວລາຕິດຕາມກວດກາ ຫົວໜ່ວຍແຜນງານ PIP. ມັນຍັງຊ່ວຍໃນການກຳນົດສະຖານະພາບຂອງໂຄງການລົງທຶນລັດເມື່ອເລີ່ມຕົ້ນເຮັດການປະ

ເມີນແບບຂາດໂຕ ແລະ ການປະເມີນແບບສົມທຸບ. POT ອາດຈະຖືກແກ້ໄຂປະຈໍາປີ, ອີງຕາມການພັດທະນາ ຂອງແຕ່ລະບັນດາໂຄງການລົງທຶນລັດ ແລະ ການປະກອບສ່ວນຂອງມັນ ໃຫ້ແກ່ເປົ້າຫມາຍລະດັບກາງ.

**ການກໍານົດໂຄງການລົງທຶນລັດໃຫມ່:** ບັນດາໂຄງການລົງທຶນລັດໃຫມ່ອາດຈະຖືກສະເຫນີຢູ່ໃນ ເວລາການປຶກສາຫາລື ການບັນລຸເປົ້າຫມາຍລະດັບກາງ. ເຖິງຢ່າງໃດກໍ່ຕາມ, ມັນບໍ່ໄດ້ຫມາຍຄວາມວ່າບັນດາໂຄງການທີ່ ໄດ້ຖືກສະເໜີໃຫມ່ນັ້ນແມ່ນຈະຖືກຮັບຮອງເອົາ. ຂະແຫນງການ ຫຼື ທ້ອງຖິ່ນທີ່ມີໜ້າທີ່ຮັບຜິດຊອບໂຄງການຄວນຈະ ເລີ່ມ ການກໍານົດໂຄງການ ແລະ ການສຶກສາຄວາມເປັນໄປໄດ້.

## ຂໍ້ແນະນໍາກ່ຽວກັບການບັນລຸເປົ້າຫມາຍລະດັບກາງ:

ຂໍ້ແນະນໍາໃນເພີ່ມເຕີມ ກ່ຽວກັບລະດັບຫົວຫນ່ວຍແຜນງານ PIP ອາດແນະນໍາໃຫ້ກັບຜູ້ມີສິດຕັດສິນ. ໂດຍຂຶ້ນກັບແຕ່ລະຫົວຂໍ້, ການປຶກສາຫາລືຕ່າງໆ ໃນຕໍ່ຫນ້າອາດຈະມີເພື່ອແກ້ໄຂ ປະເດັນຕ່າງໆ

## <u>ຕົວຢ່າງຂອງເຄືອຈຸດປະສົງແຜນງານ</u>

ເອກະສານຕິດຄັດ 2 ສະແດງໃຫ້ເຫັນເຖິງ ຕົວຢ່າງຕ່າງໆ ຂອງເຄືອຈຸດປະສົງ ແຜນງານຂອງ 1) ແຜນພັດທະນາເສດຖະກິດ-ສັງຄົມ ແຂວງ ແລະ 2)ແຜນພັດທະນາຂະແໜງ ໂຍທາທິການ ແລະ ຂົນສົ່ງໃນ 3 ແຂວງທົດລອງ ຂອງໂຄງການ ພີແຄັບ 2 ຄື: ອຸດົມໄຊ, ຄໍາມ່ວນ ແລະ ສາລະວັນ ສໍາລັບປີ 2006-2010.

## <u>ຜົນໄດ້ຮັບ ຂອງ ການວິເຄາະຕົວຢ່າງ</u>

ໂດຍຜ່ານການວິເຄາະ ເພື່ອສ້າງ ຕົວຢ່າງ ເຄືອຈຸດປະສົງແຜນງານ, ຜົນໄດ້ຮັບບາງຢ່າງ ສາມາດສະແດງໃຫ້ເຫັນຂ້າງລຸ່ມນີ້:

### 1) *ຄວາມສອດຄ່ອງ ລະຫວ່າງ ແຜນພັດທະນາ ເສດຖະກິດ ສັງຄົມ ຂັ້ນແຂວງ ແລະ ແຜນພັດທະນາ ຂອງຂະແໜງການ*

ມີບາງ ຂໍ້ຂັດແຍ້ງ ໃນບັນດາເນື້ອໃນຂອງການພັດທະນາ ລະຫວ່າງ ແຜນພັດທະນາ ເສດຖະກິດສັງຄົມ ແຂວງ (PSEDPs) ແລະ ແຜນພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ (PWTDPs). ບາງຈຸດ ຂອງທັງສອງ ແຜນ ໄດ້ສະແດງຈຸດປະສົງ ທີ່ແຕກຕ່າງກັນ., ເປົ້າໝາຍໄລຍະກາງ ແລະ ແມ່ນແຕ່ລາຍຊື່ ຂອງບັນດາໂຄງການລົງທຶນລັດ. ແຜນພັດທະນາ ເສດຖະກິດສັງຄົມ ແຂວງ ແມ່ນແຜນພັດທະນາຢ່າງຮອບດ້ານ ກວມທຸກຂະແໜງການທັງໝົດ, ເຊິ່ງຄວນຕ້ອງໄດ້ມີການລວມເຂົ້າກັນ ພາຍຫຼັງໄດ້ມີການຮ່າງສະບັບສຸດທ້າຍຂອງ ບັນດາແຜນພັດທະນາ ຂອງຂະແໜງການໃນແຂວງ, ດັ່ງນັ້ນ, ໂດຍພື້ນຖານແລ້ວ, ສິ່ງທີ່ຂັດແຍ້ງບໍ່ສາມາດຈະມີໄດ້. ມັນໄດ້ໃຫ້ການຄາດວ່າ ສິ່ງທີ່ເກີດຂຶ້ນນີ້ມາຈາກສາເຫດ ຄື: 1) ຜູ້ຮັບຜິດຊອບຂອງແຜນທັງສອງ ມີອຸປະສັກທາງດ້ານ ການສື່ສານ ແລະ ການປະສານສົມທົບ ເຊິ່ງກັນ ແລະ ກັນ; ຫຼື 2) ແຜນພັດທະນາ ຂອງຂະແໜງການບໍ່ທັນເກັບກໍາໄດ້ ໃນຊ່ວງເວລາການສັງລວມສ້າງແຜນພັດທະນາ

ເສດຖະກິດ ສັງຄົມ ຂອງແຂວງ.

***2) ສາຍພົວພັນທາງດ້ານ ເຫດ ແລະ ຜົນ ລະຫວ່າງ ຈຸດມຸ່ງໝາຍລະດັບກາງ ແລະບັນດາໂຄງການ ລົງທຶນລັດ***

ສາຍພົວພັນທາງຕັ້ງ ລະຫວ່າງ ບັນດາເປົ້າໝາຍລະດັບກາງ ແລະ ບັນດາໂຄງການລົງທຶນລັດໂດຍເລື້ອຍໆ ແລ້ວແມ່ນມີຄວາມອ່ອນບາງ. ບັນດາເປົ້າໝາຍ ລະດັບກາງຕ້ອງມີ ສາຍພົວພັນລະຫວ່າງ ເຫດ ແລະ ຜົນ ກັບ ບັນດາໂຄງການລົງທຶນລັດ ທີ່ກ່ຽວຂ້ອງ. ຢ່າງໃດກໍຕາມ, ມັນບໍ່ມີຄວາມຈະແຈ້ງ ແລະ ບໍ່ສາມາດສະ ແດງໃຫ້ເຫັນໄດ້ວ່າ ບັນດາໂຄງການລົງທຶນລັດໃດທີ່ໄດ້ຖືກວາງໄວ້ ເພື່ອເປັນຕົວວັດແທກ ໃນການບັນລຸ ເປົ້າໝາຍລະດັບກາງໃນແຜນ. ນອກເໜືອຈາກນີ້ແລ້ວ, ບາງຕົວຊີ້ວັດ ລະດັບກາງ ແມ່ນໄດ້ຂາດຫາຍ ໄປ ໃນບັນດາໂຄງການລົງທຶນລັດທີ່ກ່ຽວຂ້ອງ.

### (3) ການກຳນົດ ຕາຕະລາງໂຄຼໂນໂລຊີ (Chronology Chart)

ຕາຕະລາງໂຄຼໂນໂລຍີ ຕ້ອງໄດ້ກຳນົດໄວ້ ສຳລັບທຸກໆຫົວໜ່ວຍແຜນງານ ເຊັ່ນດຽວກັນ. ສຳລັບ POT ໄດ້ລະບຸ ການພົວພັນ ລະຫວ່າງ ເປົ້າໝາຍລະດັບກາງ ແລະ ໂຄງການລົງທຶນລັດຈາກວິທີການທີ່ມີໂລຊິກ, ***ແຕ່ສຳລັບຕາຕະລາງລຳດັບໂຄງການ (ໂຄຼໂນໂລຊີ)*** ແລ້ວຈະສະແດງໃຫ້ເຫັນ ການພົວພັນຂອງພວກມັນຕາມລຳດັບຂອງເວລາ. ຕາຕະລາງ ໂຄຼໂນໂລຊີ ນີ້ ໄດ້ຖືກສ້າງຂຶ້ນໃນຮູບແບບ ເສັ້ນສະແດງ bar-chart ທີ່ສະແດງໃຫ້ເຫັນ ຄວາມຄືບໜ້າຂອງບັນດາ ເປົ້າໝາຍລະດັບກາງ ແລະ ບັນດາຜົນໄດ້ຮັບໂຄງການລົງທຶນລັດ.

### ຕາຕະລາງ 2: ຕາຕະລາງ ໂຄຼໂນໂລຊີ

ປີຕິດຕາມກວດກາ

| ບັນດາເປົ້າໝາຍລະດັບກາງ | ຄາດຄະເນຜົນບັນລຸຢູ່ໃນໄລຍະກາງ | ຫົວໜ່ວຍ/% | ປີທີ 1 | ປີທີ 2 | ປີທີ 3 | ປີທີ 4 | ປີທີ 5 |
|---|---|---|---|---|---|---|---|
| ເພີ່ມການຜະລິດເຂົ້າ ນາປີຢູ່ໃນທ້ອງຖິ່ນ xxx | ກກກກ ໂຕນ/ ລະດູນາປີ | ຫົວໜ່ວຍ | cccc | dddd | | | aaaa |
| | | % | 55% | 70% | 75% | 85% | 100% |
| ເພີ່ມການຜະລິດເຂົ້າ ນາແຊງຢູ່ໃນທ້ອງຖິ່ນ xxx | ກກກກ ໂຕນ/ ລະດູນາແຊງ | ຫົວໜ່ວຍ | gggg | hhhh | | | bbbb |
| | | % | 45% | 65% | 80% | | 100% |

| ຊື່ໂຄງການ PIP | ຕົວຊີ້ວັດໝາກຜົນໂຄງການ/ໄລຍະເວລາ | | ປີທີ 1 | ປີທີ 2 | ປີທີ 3 | ປີທີ 4 | ປີທີ 5 |
|---|---|---|---|---|---|---|---|
| **ໂຄງການຊົນລະປະທານຢູ່ເຂດ xxx** ຊົນລະປະທານສຳລັບ ການຜະລິດເຂົ້າລະດູແລ້ງ | <ໄລຍະເວລາ> ຄວາມຄືບໜ້າໃນ (2) ປີ ຈາກ ປີທີ 1 | ເສັ້ນສະແດງ | ໂຄງການ | ການຄຸ້ມຄອງນຳໃຊ້ | | | |
| | <ຕົວຊີ້ວັດໝາກຜົນໂຄງການ> ການເພີ່ມການຜະລິດເຂົ້າລະດູແລ້ງໃຫ້ໄດ້ xxx ໂຕນ | ຫົວໜ່ວຍ | ຍັງບໍ່ | ການຄຸ້ມຄອງນຳໃຊ້ ການຜະລັດເຂົ້າໄນລະດູແ ... ຈະເພີ່ມຂຶ້ນ xxx ໂຕນ | ການຜະລັດເຂົ້າໄນລະດູແລ້ງໃນຕໍ່ໜ້າຈະເພີ່ມ ຂຶ້ນ xxx ໂຕນ | | |
| **ໂຄງການປັບປຸງພືດ ເຂົ້າ** ນຳໃຊ້ ແລະ ສຶກສາຄວາມອາດສາມາດຂອງການປັບປຸງພືດທີ່ໄດ້ມີການພັດທະນາໃນສະຖາບັນກະສິກຳ | <ໄລຍະເວລາ> | ເສັ້ນສະແດງ | ໂຄງການ | | | ການຄຸ້ມຄອງນຳໃຊ້ | |
| | <ຕົວຊີ້ວັດໝາກຜົນໂຄງການ> ການເພື່ອຜົນຜະລິດເຂົ້າໃນລະດູແລ້ງໃຫ້ໄດ້ xxx ໂຕນ | ຫົວໜ່ວຍ | | ການທົດລອງ ປີທີ 1 ເພີ້ມຂຶ້ນ aa ໂຕນ | ການທົດລອງ ປີທີ 2 ເພີ້ມຂຶ້ນ aa ໂຕນ | ການຄຸ້ມຄອງນຳໃຊ້ ເພີ້ມຂຶ້ນ xx ໂຕນ | |
| | ການເພີ່ມຜົນຜະລິດເຂົ້າໃນລະດູນາປີໃຫ້ໄດ້ xx ໂຕນ | | | ເພີ້ມຂຶ້ນ bb ໂຕນ | ເພີ້ມຂຶ້ນ bb ໂຕນ | ເພີ້ມຂຶ້ນ xx ໂຕນ | |
| **ການປັບປຸງຂອງຮ່ອງລະບາຍນ້ຳ** ການກໍ່ສ້າງຂົວແລະຕາຟັ່ງເພື່ອພືດລະດູຝົນ | <ໄລຍະເວລາ> 2 ປີ ຈາກ ປີທີ່3 ຫາປີ ທີ່ 4 | ເສັ້ນສະແດງ | | | ໂຄງການ | | ການຄຸ້ມຄອງນຳໃຊ້ |
| | <ຕົວຊີ້ວັດໝາກຜົນໂຄງການ> ການເພີ່ມຂຶ້ນໃນລະດູຝົນໃຫ້ໄດ້ xx ໂຕນ | ຫົວໜ່ວຍ | | | | ການທົດລອງການຄຸ້ມຄອ ເພີ້ມຂຶ້ນ xx ໂຕນ | ການຄຸ້ມຄອງນຳໃຊ້ ເພີ້ມຂຶ້ນ xx ໂຕນ |

ຈຳນວນການບັນລຸຜົນປະຈຳປີ

% ການບັນລຸເປົ້າໝາຍປະຈຳປີ

ການຄຸ້ມຄອງນຳໃຊ້ຂອງບັນດາຜົນໄດ້ຮັບໂຄງການ

ບັນດາໝາກຜົນໂຄງການປະຈຳປີ

ບາດກ້າວລຸ່ມນີ້ ແມ່ນວິທີການມາດຖານ ເພື່ອພັດທະນາຕາຕະລາງໂຄຼໂນໂລຊີ.

### ບາດກ້າວ 1: ການກຳນົດບັນດາຕົວຊີ້ວັດ

ຕາຕະລາງໂຄຼໂນໂລຊີ ສະແດງໃຫ້ເຫັນເຖິງ ການປັບປຸງປ່ຽນແປງທີ່ມີລັກສະນະເປັນລຳດັບຂອງບັນດາ

ຕົວຊີ້ວັດ. ສະນັ້ນ, ບັນດາຕົວຊີ້ວັດ ທີ່ໄດ້ຖືກວັດແທກ ໃນບັນດາເປົ້າໝາຍລະດັບກາງ ແລະ ໂຄງການລົງທຶນລັດ ແມ່ນມີຄວາມສຳຄັນ. ສຳລັບໂຄງການລົງທຶນລັດ, ບັນດາຕົວຊີ້ວັດ ທີ່ສະແດງໃຫ້ ເຫັນຜົນໄດ້ຮັບພາຍຫຼັງສິ້ນສຸດ ແລະ ຊ່ວງນຳໃຊ້ ແມ່ນມີຄວາມສຳຄັນເຊັ່ນດຽວກັນ. ມັນມີຄວາມຈຳເປັນ ທີ່ຈະຕ້ອງຮູ້ຄວາມຄືບໜ້າຂອງບັນດາຕົວຊີ້ວັດ ເຫຼົ່ານີ້ທຸກໆປີ, ດັ່ງນັ້ນຄວາມຄືບໜ້າຕົວຈິງ ແລະ ໝາກຜົນຈາກບັນດາໂຄງການລົງທຶນລັດ ກໍ່ສາມາດສັງເກດໄດ້.

ເພື່ອຢາກບັນລຸບັນດາຕົວຊີ້ວັດຄວາມຄືບໜ້າປະຈຳປີ ຈົນເຖິງເປົ້າໝາຍລະດັບກາງ, SEDP ອາດເປັນສິ່ງ ອ້າງອີງທີ່ດີ. ຖ້າ SEDP ຫຼື ສິ່ງອື່ນໆ ທີ່ກ່ຽວຂ້ອງນັ້ນ ບໍ່ສາມາດສະໜອງຂໍ້ມູນຂ່າວສານໄດ້, ດັ່ງນັ້ນ ຂໍ້ມູນສະຖິຕິ ແລະ ບົດລາຍງານຂອງເຂດແຄວ້ນ ຫຼື ບັນດາຂະແໜງການກໍ່ສາມາດນຳໃຊ້ເປັນສິ່ງອ້າງອີງໄດ້. ຖ້າຍັງບໍ່ຊອກໄດ້ອີກ, ມັນມີຄວາມຈຳເປັນທີ່ຈະກຳນົດບັນດາຕົວ ຊີ້ວັດ ໂດຍການປຶກສາຫາລືກັບພະນັກງານຂະແໜງການ ແລະ ເຂດແຄວ້ນ.

ເພື່ອຢາກບັນລຸໝາກຜົນປະຈຳປີ ຈາກໂຄງການລົງທຶນລັດ ຕ່າງໆ, ເອກະສານໂຄງການ ແລະ ບົດລາຍງານການປະເມີນ ແມ່ນເປັນສິ່ງອ້າງອີງທີ່ດີ. ສຳລັບບັນດາໂຄງການທີ່ມີຜົນໄດ້ຮັບທາງບວກໃຫ້ແກ່ເປົ້າໝາຍລະດັບກາງ, ແລະ ໄດ້ສຳເລັດແລ້ວ ແລະ ຢູ່ໃນໄລຍະການນຳໃຊ້, ມັນແມ່ນມີຄວາມຈຳເປັນທີ່ອ້າງອີງເຖິງອົງການທີ່ຮັບຜິດຊອບ.

**ບາດກ້າວ 2: ການວາງບັນດາເປົ້າໝາຍລະດັບກາງ, ລວມທັງການສະແດງຜົນໄດ້ຮັບຕາມລຳດັບຈາກຄວາມສຳເລັດຂອງມັນ**

ຫຼັງຈາກຊອກໄດ້ບັນດາຕົວຊີ້ວັດປະຈຳປີ, ຈາກນັ້ນພວກມັນກໍ່ຈະຖືກບັນທຶກລົງໃສ່ຕາຕະລາງໂຄ້ໂນໂລຊີແຖວ ເທິງສຸດຂອງຕາຕະລາງຈະຖືກຕື່ມຂໍ້ມູນດັ່ງລຸ່ມນີ້.

## ຮູບ 3: ຕາຕະລາງໂຄງໂນໂລຊີ, ບັນດາເປົ້າຫມາຍລະດັບກາງ ແລະຄວາມຄືບຫນ້າປະຈໍາປີຂອງພວກເຂົາ

ປີຕິດຕາມກວດກາ

ຈໍານວນການບັນລຸປະຈໍາປີ

% ເປົ້າຫມາຍການບັນລຸປະຈໍາປີ

| ບັນດາເປົ້າຫມາຍລະດັບກາງ | ຄາດຫວັງຜົນບັນລຸຢູ່ທ້າຍຂອງໄລຍະກາງ | ຫົວໜ່ວຍ/% | ປີທີ 1 | ປີທີ 2 | | | ປີທີ 5 |
|---|---|---|---|---|---|---|---|
| ການຜະລິດໃນລະດູຝົນຢູ່ເຂດ xxx ເພີ້ມຂື້ນ | aaaa ໂຕນ / ລະດູຝົນ | ຫົວຫ່ວຍ | cccc | dddd | | | aaaa |
| | | % | 45% (55%) | 70% (70%) | 75% | 85% | 100% |
| ການຜະລິດເຂົ້າໃນລະດູແລ້ງຢູ່ເຂດ xxx ເພີ້ມຂື້ນ | bbbb ໂຕນ / ລະດູແລ້ງ | ຫົວຫ່ວຍ | gggg | hhhh | | | bbbb |
| | | % | 38% (45%) | 61% (65%) | 80% | 90% | 100% |
| | | | | | | | |
| ຊື່ໂຄງການ PIP | ຕົວຊີ້ວັດຫມາກຜົນໂຄງການ/ໄລຍະເວລາ | | ປີທີ 1 | ປີທີ 2 | ປີທີ 3 | ປີທີ 4 | ປີທີ 5 |
| **ໂຄງການຊົນລະປະທານເຂດ xxx** ຊົນລະປະທານສໍາລັບການຜະລິດເຂົ້າລະດູແລ້ງ | <ໄລຍະເວລາ> ຄວາມຄືບຫນ້າໃນ (2) ປີ ຈາກປີທີ 1 | ເສັ້ນສະແດງ | ໂຄງການ | ການຄຸ້ມຄອງນໍາໃຊ້ | | | |
| | | | | | | | |
| | | | | | | | |
| | <ຕົວຊີ້ວັດຫມາກຜົນໂຄງການ> | ຫົວໜ່ວຍ | | ການຄຸ້ມຄອງນໍາໃຊ້ | | | |

***(a) ບັນດາເປົ້າຫມາຍລະດັບກາງ:*** ອະທິບາຍບັນດາເປົ້າຫມາຍລະດັບກາງທີ່ສະແດງເຖິງ ຫົວຫນ່ວຍແຜນງານ. ເມື່ອມີຫຼາຍກ່ວາຫນຶ່ງຕົວຊີ້ວັດລະດັບກາງ, ໃຫ້ຂຽນອອກທັງຫມົດ.

***(b) ບັນດາເປົ້າຫມາຍໄລຍະກາງ***

***(ບັນດາຕົວຊີ້ວັດ):*** ຂຽນຕົວຊີ້ວັດເປົ້າຫມາຍທີ່ໄດ້ຄາດຫວັງໄວ້ທີ່ຄວນຈະຖືກ ບັນລຸຢູ່ຕອນທ້າຍຂອງໄລຍະກາງ. ຖ້າມີຕົວເລກ ຖານຂໍ້ມູນໃດຫນຶ່ງ (ບັນດາຕົວຊີ້ວັດຂອງສະພາບປະຈຸບັນ), ແນະນໍາວ່າຄວນຈະລວມເອົາຕົວເລກເຫຼົ່ານີ້ ເຊັ່ນດຽວກັນ. (ຕົວຢ່າງ: ການຜະລິດເຂົ້າໃນເຂດແຄວັນ XXX ເພີ່ມຂື້ນ ຈາກລະດັບປະຈຸບັນທີ່ມີ XXX ໂຕນ ຮອດເປົ້າຫມາຍລະດັບກາງເຊິ່ງແມ່ນ XXX ໂຕນ)

**(c)** ***ການບັນລຸເປົ້າຫມາຍປະຈໍາປີ (ແຜນການ) ດ້ວຍຈໍານວນ:*** ຊີ້ບອກບັນດາເປົ້າຫມາຍຄວາມຄືບຫນ້າປະຈໍາປີ. ແນ່ນອນທີ່ສຸດຢູ່ປີທີ 5, ຄວນຄາດຄະເນວ່າເປົ້າຫມາຍໄລຍະກາງໄດ້ບັນລຸຜົນສໍາເລັດ. ໂດຍຂຶ້ນກັບຕົວຂອງເປົ້າຫມາຍເອງ ແລະ ວິທີການຂອງມັນທີ່ຈະບັນລຸ, ຄວາມຄືບຫນ້າປະຈໍາ ປີອາດຈະມີການຂຶ້ນໆ ລົງໆ.

**(d)** ***ການບັນລຸເປົ້າຫມາຍປະຈໍາປີ (ແຜນ) ເປັນ % ຂອງເປົ້າຫມາຍ:*** ຊີ້ບອກເປີເຊັນຂອງການບັນລຸຄວາມຄືບຫນ້າປະຈໍາປີ (ແຜນ) ຄືການປຽບທຽບໃສ່ເປົ້າຫມາຍລະດັບກາງ. ຢູ່ປີທີ 5, ເປີເຊັນນີ້ຄວນຈະຮອດ 100%.

### ບາດກ້າວ 3: ການຈັດວາງບັນດາໂຄງການລົງທຶນລັດ, ລວມທັງຜົນຂອງຄວາມຄືບຫນ້າໃສ່ຕາຕະລາງ ໂຄງໂນໂລຊີ

ບາດກ້າວຕໍ່ໄປແມ່ນການບັນທຶກ ບັນດາໂຄງການລົງທຶນລັດ ທີ່ພົວພັນເຖິງບັນດາເປົ້າຫມາຍລະດັບກາງ ທີ່ໄດ້ຖືກກຳນົດຢູ່ໃນ POT. ການຕື່ມໃສ່ຕາຕະລາງແມ່ນສະແດງດັ່ງລຸ່ມນີ້;

**ຕາຕະລາງ 3: ຕາຕະລາງ ໂຄງໂນໂລຢີ, ບັນດາໂຄງການລົງທຶນລັດ ແລະ ຫມາກຜົນຄວາມຄືບໜ້າປະຈຳ ປີຂອງພວກມັນ**

ປີຕິດຕາມກວດກາ

ການຄຸ້ມຄອງນຳໃຊ້ບັນດາຜົນໄດ້ຮັບໂຄງການ

ຜົນໄດ້ຮັບໂຄງການປະຈຳປີ

| ຊື່ໂຄງການ PIP | ຕົວຊີ້ວັດໝາກຜົນໂຄງການ/ໄລຍະເວລາ | | ປີທີ 1 | ປີທີ 2 | ປີທີ 3 | | ປີທີ 5 |
|---|---|---|---|---|---|---|---|
| **ໂຄງການຊົນລະປະທານເຂດ xxx**<br>ຊົນລະປະທານສຳລັບການ<br>ຜະລິດເຂົ້າລະດູແລ້ງ | <ໄລຍະເວລາ><br>ການເພີ້ມຂຶ້ນໃນ (2) ປີ ຈາກ ປີທີ 1 | ເສັ້ນສະແດງ | ໂຄງການ | ການຄຸ້ມຄອງນຳໃຊ້ | | | |
| | <ຕົວຊີ້ວັດໝາກຜົນໂຄງການ><br>ການຜະລິດເຂົ້າໃນລະດູແລ້ງເພີ້ມຂຶ້ນ xxx ໂຕນ | ທົວໜ່ວຍ | ປີ່ | ການຄຸ້ມຄອງນຳໃຊ້<br>ການຜະລິດເຂົ້າໃນລະດູແ<br>ເພີ້ມຂຶ້ນ xxx ໂຕນ | ການຜະລິດເຂົ້າໄນລະດູແລ້ງໜ້າຈະເພີ້ມຂື້ນ xxx ໂຕນ | | |
| **ໂຄງການປັບປຸງ ພືດ ເຂົ້າ**<br>ນຳໃຊ້ ແລະ ສຶກສາຄວາມອາດສາມາດ<br>ຂອງການປັບປຸງພືດທີ່ໄດ້ມີການພັດທະນາ<br>ໃນສະຖາບັນກະສິກຳ | <ໄລຍະເວລາ> | ເສັ້ນສະແດງ | ໂຄງການ | | | ການຄຸ້ມຄອງນຳໃຊ້ | |
| | <ຕົວຊີ້ວັດໝາກຜົນໂຄງການ><br>ການຜະລິດເຂົ້າລະດູແລ້ງເພີ້ມຂຶ້ນ<br>xxx ໂຕນ | ທົວໜ່ວຍ | | ທົດລອງປີທີ 1<br>ເພີ້ມຂຶ້ນ aa ໂຕນ | ທົດລອງ ປີທີ 2<br>ເພີ້ມຂຶ້ນ aa ໂຕນ | ການຄຸ້ມຄອງນຳໃຊ້<br>ເພີ້ມຂຶ້ນ xx ໂຕນ | |
| | ການຜະລິດເຂົ້າລະດູຝົນ ເພີ້ມຂຶ້ນ<br>xx ໂຕນ | | | ເພີ້ມຂຶ້ນ bb ໂຕນ | ເພີ້ມຂຶ້ນ bb ໂຕນ | ເພີ້ມຂຶ້ນ xx ໂຕນ | |
| **ການປັບປຸງຂອງຮ່ອງລະບາຍນ້ຳ**<br>ການກໍ່ສ້າງຂົວແລະຕາຟັ່ງເພື່ອພືດລະດູຝົນ | <ໄລຍະເວລາ><br>2 ປີ ແຕ່ ປີທີ 3 ເຖິງ ປີທີ 4 | ເສັ້ນສະແດງ | | | ໂຄງການ | | ການຄຸ້ມຄອງນຳໃຊ້ |
| | <ຕົວຊີ້ວັດໝາກຜົນໂຄງການ><br>ການຜະລິດເຂົ້າລະດູຝົນເພີ້ມຂຶ້ນ<br>xx ໂຕນ | ທົວໜ່ວຍ | | | | ທົດລອງການຄຸ້ມຄອງນຳໃຊ້<br>ເພີ້ມຂຶ້ນ xx ໂຕນ | ການຄຸ້ມຄອງນຳໃຊ້<br>ເພີ້ມຂຶ້ນ xx ໂຕນ |

(a) ***ໂຄງການ ລົງທຶນລັດ:*** ອະທິບາຍຊື່ຂອງໂຄງການລົງທຶນລັດ ທີ່ໄດ້ຈັດປະເພດຢູ່ໃນທົວໜ່ວຍແຜນງານ PIP. ມັນຈະ ເປັນການດີຫຼາຍຖ້າວ່າລະຫັດໂຄງການແມ່ນ ໄດ້ອະທິບາຍຊື່ຂອງໂຄງການເອງ, ເພື່ອລະບຸໂຄງການ ທີ່ໄດ້ຢ່າງຊັດເຈນ.

**(b)** ***ໄລຍະເວລາຂອງໂຄງການ:*** ອະທິຍາຍ ໄລຍະເວລາ (ຄາດຫວັງ) ແລະ ໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ PIP.

**(c)** ***ບັນດາຕົວຊີ້ວັດຜົນໄດ້ຮັບໂຄງການ:*** ອະທິບາຍບັນດາຕົວຊີ້ວັດທີ່ມີຜົນຕໍ່ກັບເປົ້າຫມາຍລະດັບກາງ, ກັບ ເປົ້າຫມາຍຂອງມັນເອງໃນລະດັບໂຄງການ. ມັນຕ້ອງຮັບປະກັນວ່າຕົວເປົ້າຫມາຍຂອງມັນເອງ ພົວພັນກັບເປົ້າຫມາຍລະດັບກາງ.

**(d)** ***ການຈັດຕັ້ງປະຕິບັດໂຄງການ:*** ແຕ້ມເສັ້ນສະແດງພາຍໃນ ປີຈັດຕັ້ງປະຕິບັດ.

***(e) ໄລຍະເວລາຂອງຜົນໄດ້ຮັບໂຄງການ:*** ຖ້າຫມາກຜົນໂຄງການເບິ່ງຄືກັບວ່າຈະເກີດຂຶ້ນພຽງແຕ່ ຫຼັງຈາກສິ້ນ ສຸດ ຫຼື ໃນຊ່ວງການຄຸ້ມຄອງນຳໃຊ້ ຫຼື ຖ້າບາງທີບັນດາຕົວຊີ້ວັດອາດຈະມີແນວໂນ້ມວ່າ

ຈະມີການປັບ ປຸງ ໃນໄລຍະການນຳໃຊ້, ໃຫ້ແຕ້ມເສັ້ນສະແດງໄປຈົນສຸດ ຈົນຮອດບ່ອນຜົນໄດ້ຮັບບໍ່ໄດ້ສະໜັບສະໜູນ ໃຫ້ແກ່ເປົ້າໝາຍລະດັບກາງອີກແລ້ວ.

(f) ***ບັນດາຜົນໄດ້ຮັບຂອງໂຄງການປະຈຳປີ:*** ອະທິບາຍຄວາມຄືບໜ້າຕ່າງໆ ຕົວຊີ້ວັດຂອງຜົນ ໄດ້ຮັບປະຈຳປີທີ່ເກີດຈາກໂຄງການ ສືບຕໍ່ອະທິບາຍບັນດາຜົນໄດ້ຮັບຂອງໂຄງການ ຫຼັງຈາກການສຳ ເລັດຂອງໂຄງການ ເຊິ່ງຢູ່ໃນໄລຍະ "ການນຳໃຊ້" ຖ້າວ່າຜົນໄດ້ຮັບມີແນວໂນ້ມວ່າ ອາດຈະມີການປັບປຸງຢູ່ໃນໄລຍະການຄຸ້ມຄອງນຳໃຊ້

## ບາດກ້າວ 4: ຊອກຫາບັນຫາປະເດັນ ໃນຕາຕະລາງໂຄ້ງໂນໂລຊີ

ຫຼັງຈາກການສະທ້ອນໃຫ້ເຫັນ ເຖິງບັນດາຕົວຊີ້ວັດເປົ້າໝາຍລະດັບກາງທັງໝົດ ແລະ ບັນດາໂຄງການລົງທຶນລັດ ຈາກເຄືອຈຸດປະສົງແຜນງງານແລ້ວ, ໃຫ້ປຶກສາຫາລືວ່າ ທົວໜ່ວຍແຜນງານທັງໝົດແມ່ນໄດ້ຈັດຕາມ ລຳດັບຢ່າງຖືກຕ້ອງກັບຄວາມເປັນຈິງ ແລ້ວຫຼືບໍ່ ເພື່ອນຳໄປຈັດຕັ້ງປະຕິບັດຄວາມສາມາດທາງດ້ານກາຍະພາບ, ຂອງໜ້າວຽກພາຍໃນຂະແໜງການ/ເຂດແຄວັນ, ຄຽງຄູ່ໄປກັບການຄາດຄະເນດ້ານການເງິນ/ງົບປະມານທີ່ມີຢູ່ຈຳກັດ ຕ້ອງຖືກພິຈາລະນາ ໃນການປຶກສາຫາລື.

ເມື່ອບັນດາປະເດັນຕ່າງໆໄດ້ຖືກຍົກຂື້, ໃຫ້ປຶກສາຫາລືບັນດາມາດຕະການ ເພື່ອແກ້ໄຂປະເດັນ ຕ່າງໆນັ້ນໂດຍ ເນັ້ນໃສ່ບູລິມະສິດທຳອິດ ກໍ່ຄືການບັນລຸເປົ້າໝາຍລະດັບກາງ. ເຖິງແນວໃດກໍ່ຕາມ, ມັນມີຄວາມຈຳເປັນ ເພື່ອຊອກຫາບັນດາມາດຕະການທີ່ຖືກຕ້ອງກັບຕົວຈິງ ໂດຍການຜະເຊີນໜ້າ ແລະ ວິເຄາະບັນດາເງື່ອນໄຂ ແລະ ຂໍ້ ຈຳກັດຕົວຈິງ.

## ບົດສະຫຼຸບ ແລະ ໝາກຜົນ

ຕໍ່ໄປນີ້ແມ່ນໝາກຜົນ ແລະ ບົດສະຫຼຸບ ພາຍຫຼັງສຳເລັດຂອງຕາຕະລາງໂຄ້ງໂນໂລຊີ

**ຕາຕະລາງໂຄ້ງໂນໂລຊີ:** ຕາຕະລາງໂຄ້ງໂນໂລຊີຈະເປັນບ່ອນອີງທີ່ສຳຄັນ ເມື່ອເວລາການຕິດຕາມກວດກາທົວໜ່ວຍແຜນງານ PIP ຕາມລຳດັບຂອງເວລາ. ເຊັ່ນດຽວກັນ ມັນສາມາດຊ່ວຍກຳນົດສະຖານະພາບຂອງ ບັນດາໂຄງການ ລົງທຶນລັດໃນເວລາເລີ່ມຕົ້ນເຮັດການປະເມີນແບບຂາດຕົວ ແລະ ການປະເມີນແບບສົມທຽບ. ຕາຕະລາງ ໂຄ້ງໂນໂລຊີ ຈະຖືກພິຈາລະນາແກ້ໃຫມ່ທຸກໆປີ ຄຽງຄູ່ກັນກັບ POT, ໂດຍອີງໃສ່ການພັດທະນາ ຂອງແຕ່ລະບັນດາ ໂຄງການລົງທຶນລັດ ແລະ ການປະກອບສ່ວນຂອງບັນດາໂຄງການດັ່ງກ່າວໃຫ້ແກ່ເປົ້າໝາຍລະດັບກາງ.

**ການກຳນົດທີ່ຕັ້ງ/ການຍົກຍ້າຍທີ່ຕັ້ງ ຂອງບັນດາໂຄງການລົງທຶນລັດຕາມລຳດັບ**: ໂດຍຜ່ານການດຳເນີນການສ້າງ ແລະ ດຳເນີນການປຶກສາຫາລື, ໂຄງການລົງທຶນລັດ ຈຳນວນໜຶ່ງອາດຈະບໍ່ເໝາະສົມກັບຕົວຈິງທີ່ຈະບັນລຸ ພາຍໃນກອບເວລາທີ່ໄດ້ກຳນົດໄວ້ຕາມເວລາທີ່ຕ້ອງການ, ຫຼືມີຄວາມຕ້ອງການຕ້ອງເລັ່ງການພັດທະນາ. ໃນກໍລະນີນີ້, ຄຳແນະນຳ ເພື່ອຈັດວາງຕາຕະລາງເວລາອັນໃໝ່ ໃຫ້ແກ່ບັນດາ

ໂຄງການລົງທຶນລັດ ເຫຼົ່ານັ້ນອາດຈະຖືກ ຍົກຂຶ້ນ. ສຳລັບບັນດາໂຄງການລົງທຶນລັດທີ່ໄດ້ມີຄວາມຄິດເຫັນ ແນະນຳແລ້ວ ໂດຍຜ່ານ POT, ຕາຕະລາງເວລາ ໃນການວາງແຜນການ, ການຈັດຕັ້ງປະຕິບັດ ແລະ ການນຳໃຊ້ ແມ່ນຕ້ອງມີການປຶກສາຫາລື ແລະ ຄົ້ນຄິດຮ່ວມກັນ.

**ຂໍ້ແນະນຳກ່ຽວກັບການບັນລຸເປົ້າໝາຍລະດັບກາງ:**

ຂໍ້ແນະນຳໃນເພີ່ມເຕີມ ກ່ຽວກັບລະດັບຫົວໜ່ວຍແຜນງານ PIP ອາດແນະນຳໃຫ້ກັບຜູ້ມີສິດຕັດສິນ. ໂດຍຂຶ້ນກັບແຕ່ລະຫົວຂໍ້, ການປຶກສາຫາລືຕ່າງໆ ໃນຕໍ່ໜ້າອາດຈະມີເພື່ອແກ້ໄຂ ປະເດັນຕ່າງໆ

**<u>ຕົວຢ່າງ ຂອງ ຕາຕະລາງ ໂລຈິໂນໂລຊີ</u>**

ເອກະສານຕິດຄັດ 3 ສະແດງໃຫ້ເຫັນເຖິງ ຕົວຢ່າງຕ່າງໆ ຂອງ ຕາຕະລາງ ໂລຈິໂນໂລຊີ ຂອງ (1) ແຜນພັດທະ ນາເສດຖະກິດ ສັງຄົມ ແຂວງ ແລະ 2) ແຜນພັດທະນາ ຂະແໜງ ທີ່ເປັນຕົວແບບ ຄື: ຂະແໜງໂຍທາທິການ ແລະ ຂົນສົ່ງ ໃນ 3 ແຂວງທົດລອງ ຂອງໂຄງການ ພີແຄັບ 2 ຄື: ອຸດົມໄຊ, ຄຳມ່ວນ ແລະ ສາລະວັນ ສຳລັບປີ 2006-2010.

**<u>ຜົນໄດ້ຮັບ ຂອງການວິເຄາະຕົວຢ່າງ</u>**

ໂດຍຜ່ານການວິເຄາະເພື່ອສ້າງຕາຕະລາງໂລຈິໂນໂລຊີ , ຜົນໄດ້ຮັບບາງຢ່າງສາມາດສະແດງໃຫ້ ເຫັນຂ້າງ ລຸ່ມນີ້;

***1) ບັນດາອົງປະກອບ ທາງດ້ານປະລິມານ ຂອງບັນດາຕົວຊີ້ວັດ***

ດັ່ງໄດ້ກ່າວໃນຫົວຂໍ້ ຂອງບັນດາເຄື່ອງມື PIP ອື່ນໆ, ມັນບໍ່ທັນພຽງພໍເທື່ອ ສຳລັບ ບັນດາແຜນພັດທະນາ ທີ່ຈະຕັ້ງ ຄ່າທາງດ້ານປະລິມານຂອງບັນດາຕົວຊີ້ວັດ. ດັ່ງນັ້ນ, ມັນມີຄວາມຫຍຸ້ງຍາກທີ່ຈະກ່າວເຖິງ ຄ່າຂອງເປົ້າໝາຍ ເປັນໄລຍະວັດແທກຂອງທຸກໆປີຈັດຕັ້ງປະຕິບັດໃນຕາຕະລາງໂລຈິໂນໂລຊີ. ດັ່ງນັ້ນ ແຜນ ພັດທະນາ ຕ້ອງມີ ຕົວຊີ້ວັດຕ່າງໆ ທີ່ຈະແຈ້ງທີ່ມີຄ່າເປັນຕົວເລກທີ່ໄດ້ລະບຸໄວ້.

***2) ສາຍພົວພັນ ທາງດ້ານ ເຫດ ແລະ ຜົນ ລະຫວ່າງ ບັນດາເປົ້າໝາຍລະດັບກາງ ແລະ ບັນດາໂຄງການ ລົງທຶນລັດ***

ປະເດັນນີ້ໄດ້ຖືກອ້າງອີງເຖິງແລ້ວ ໃນຫົວຂໍ້ຂອງເຄືອຈຸດປະສົງແຜນງານ ຍ້ອນວ່າ ສາຍພົວພັນ ລະຫວ່າງ ເປົ້າໝາຍລະດັບກາງ ແລະ ບັນດາໂຄງການລົງທຶນລັດ ແມ່ນມີຄວາມອ່ອນບາງ ໃນແຜນການ, ດັ່ງນັ້ນ ຕົວຢ່າງຕ່າງໆ ຂອງ ຕາຕະລາງ ໂລຈິໂນໂລຊີ ນີ້ຈຶ່ງຕ້ອງມີບາງຊ່ອງວ່າງ ຂອງບັນດາ ໂຄງການລົງທຶນລັດທີ່ ຈະບັນລຸເປົ້າໝາຍລະດັບກາງ. ບັນດາແຜນພັດທະນາ ຕ້ອງມີຕັກກະສາດພື້ນຖານ ທີ່ບັນດາໂຄງການ ນັ້ນ ບໍ່ແມ່ນຈຸດປະສົງ ແຕ່ຈະເປັນຕົວວັດແທກ ເພື່ອບັນລຸບັນດາເປົ້າໝາຍທີ່ໄດ້ລະບຸໄວ້.

## 2.3. ການສ້າງ ແຜນທີ່ການລົງທຶນລັດ

ຫຼັງຈາກ ສ້າງບັນດາຫົວໜ່ວຍ ແຜນງານ PIP ດ້ວຍມຸມມອງ ທາງດ້ານໂລຊິກ ແລະ ທາງດ້ານ ໂລຈິໂນໂລຊີ

ແລ້ວ, ຕ້ອງມີມຸມມອງດ້ານພູມີສາດອີກ. ໃນການສຶກສາ ພື້ນທີ່ຄອບຄຸມຂອງ ແຜນພັດທະນາ ເສດຖະ ກິດ-ສັງຄົມ ແລະ ຫົວໜ່ວຍແຜນງານ PIP, ມັນມີຄວາມສຳຄັນທີ່ຕ້ອງໄດ້ມີການສັງເກດການຢ່າງມີຍຸດທະສາດ ເຖິງທີ່ຕັ້ງ ທາງດ້ານພູມີສາດ ຂອງການປະກອບສ່ວນ ຕໍ່ກັບເປົ້າໝາຍລະດັບກາງ ແລະ ບັນດາໂຄງການລົງທຶນລັດຂອງມັນ ໂດຍຜ່ານການສັງເກດແຜນທີ່ ຕາມມາດຕາສ່ວນທີ່ເໝາະສົມ. ມາດຕາສ່ວນ ແລະ ຂະໜາດຂອງແຜນທີ່ ແມ່ນແຕກຕ່າງກັນຂຶ້ນກັບລະດັບຂອງຫົວໜ່ວຍ ແຜນງານ PIP ທີ່ສຶກສາ.

ແຜນທີ່ຕ່າງໆ ໄດ້ສ້າງຂຶ້ນໂດຍການແຕ້ມ ສະຖານທີ່ຕັ້ງຂອງໂຄງການລົງທຶນລັດ ແລະ ຂໍ້ມູນທີ່ຈຳເປັນກ່ຽວຂ້ອງ ກັບບັນດາເປົ້າໝາຍ ຂອງ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດພ້ອມໆ ກັນໃນແຜນ ທີ່ອັນດຽວກັນ. ໃນເວລາສຶກສາ ຫົວໜ່ວຍແຜນງານ PIP ໃນລະດັບຂະແໜງການ (ກະຊວງ), ແຜນທີ່ທີ່ກວມເອົາເນື້ອທີ່ທັງໝົດ ພາຍໃນປະເທດແມ່ນໄດ້ຖືກນຳໃຊ້. ເມື່ອສຶກສາຫົວໜ່ວຍແຜນງານ ໃນລະດັບເຂດແຄວ້ນ, ແຜນທີ່ອັດຕາ ສ່ວນຂະໜາດນ້ອຍແມ່ນໄດ້ຖືກນຳໃຊ້ ໂດຍອີງຕາມ ອັດຕາສ່ວນຂອງຂົງເຂດທີ່ນຳເອົາມາສຶກສາ. ການສຶກສາຕ່າງໆ ຕ້ອງໄດ້ປະຕິບັດ ໃນຊ່ວງເລີ່ມຕົ້ນ ຂອງຊ່ວງແຜນໄລຍະກາງໄວທີ່ສຸດ ກ່ອນທີ່ຈະປະກາດແຜນ ພັດທະນາເສດຖະກິດ-ສັງຄົມ 5 ປີ.

ຮູບທີ່ 5: ແຜນທີ່ ລະດັບຊາດ ແລະ ເຂດແຄວ້ນ




ໂດຍຂຶ້ນກັບບັນດາຫົວໜ່ວຍແຜນງານ PIP ຂອງຂະແໜງການ ແລະ ເຂດແຄວ້ນ, ແຜນທີ່ໂຄງການລົງທຶນລັດສາມາດ ສ້າງຂຶ້ນໄດ້ ພາຍໃນບັນດາຫົວໜ່ວຍແຜນງານ PIP ຈຳນວນໜຶ່ງທີ່ ໄດ້ຮັບຄວາມສົນໃຈພ້ອມໆກັນ. ແຜນທີ່ໂຄງການລົງທຶນລັດ ກໍ່ສາມາດສ້າງຂຶ້ນໄດ້ເຊັ່ນດຽວກັນ ພາຍໃນຂະແໜງການ ຫຼື ເຂດແຄວ້ນໃດໜຶ່ງ, ຫຼື ໃນຫົວຂໍ້ ທີ່ສຳຄັນ ແລະ ຫົວເລື່ອງທີ່ກວມເອົາທຸກປະເດັນ ເຊັ່ນ ການຫຼຸດຜ່ອນຄວາມທຸກຍາກ, ການເທົ່າທຽມຍິງ-ຊາຍ, ວິທີການ ການປົກປັກຮັກສາ ທາງດ້ານສິ່ງແວດລ້ອມ ແລະ ອື່ນໆ

**(1). ການສ້າງ ແຜນທີ່ໂຄງການລົງທຶນລັດ**

ແຜນທີ່ໂຄງການລົງທຶນລັດ ແມ່ນໄດ້ສ້າງຂຶ້ນໃນຮູບແບບກອງປະຊຸມປຶກສາຫາລື. ກ່ອນທີ່ຈະສ້າງແຜນທີ່ໂຄງການລົງທຶນລັດ, ຕ້ອງກະກຽມ ແຜນທີ່ຫວ່າງເປົ່າ ທີ່ມີອັດຕາສ່ວນ ແລະ ຂະໜາດ ທີ່ເໝາະສົມຂຶ້ນກັບ

ຫົວຂໍ້ ແລະ ຂອບເຂດເນື້ອໃນ ທີ່ຈະປຶກ ສາຫາລື. ກອງປະຊຸມປຶກສາຫາລື ໃນການສ້າງແຜນທີ່ໂຄງການລົງທຶນລັດແມ່ນມີຂັ້ນຕອນດັ່ງຕໍ່ໄປນີ້:

## ຂັ້ນຕອນທີ່ 1: ເກັບກຳຂໍ້ມູນທາງດ້ານພູມີສາດ ກ່ຽວກັບບັນດາເປົ້າໝາຍລະດັບກາງ, ບັນດາໂຄງການລົງທຶນລັດ ແລະ ຂໍ້ມູນທີ່ຈຳເປັນອື່ນໆ.

ແຜນທີ່ໂຄງການລົງທຶນລັດ ສະແດງໃຫ້ເຫັນເຖິງ ການພົວພັນ ຂອງສະຖານທີ່ຕັ້ງຕ່າງໆ ແລະ ເນື້ອທີ່ຄອບຄຸມຂອງເປົ້າໝາຍ ລະດັບກາງ ແລະ ບັນດາໂຄງການໂຄງການລົງທຶນລັດ. ດັ່ງນັ້ນ, ຂໍ້ມູນທີ່ຊັດ ເຈນຂອງພື້ນທີ່ຄອບຄຸມ ແລະ/ ຫຼື ສະຖານທີ່ ຕັ້ງຂອງເປົ້າໝາຍລະດັບກາງ, ພ້ອມກັບ ທີ່ຕັ້ງຂອງບັນດາໂຄງການລົງທຶນລັດ ແມ່ນມີຄວາມສຳຄັນ. ຖ້າບັນດາຂໍ້ມູນ ເຫຼົ່ານີ້ ບໍ່ຈະແຈ້ງ, ມັນມີຄວາມສຳຄັນ ຕ້ອງໄດ້ເກັບກຳຂໍ້ມູນດັ່ງກ່າວກ່ອນ.

ນອກຈາກບັນດາຂໍ້ມູນເຫຼົ່ານີ້ແລ້ວ, ຂໍ້ມູນພື້ນຖານທີ່ກ່ຽວຂ້ອງ ທາງດ້ານສັງຄົມ, ເສດຖະກິດ ແລະ ພື້ນຖານໂຄງ ລ່າງ ໃນພື້ນທີ່ ຊ່ວຍໃຫ້ເຂົ້າໃຈໄດ້ ລັກສະນະທາງດ້ານພູມີສາດຂອງມັນ. ຂໍ້ມູນມາດຕະຖານດັ່ງລຸ່ມນີ້ ສາມາດ ເກັບກຳໄດ້ ຈາກບັນດາອົງການຈັດຕັ້ງທີ່ຮັບຜິດຊອບ;

- ຂໍ້ມູນ ທາງດ້ານທຳມະຊາດ ເຊັ່ນ ແມ່ນ້ຳຕ່າງໆ ສາຍພູ, ປ່າໄມ້, ພື້ນທີ່ສະຫງວນ ແລະ ອື່ນໆ.
- ຂໍ້ມູນ ທາງດ້ານສັງຄົມ ເຊັ່ນ ສະຖານທີ່ຕັ້ງຕ່າງໆ ຂອງບ້ານ, ພົນລະເມືອງ, ກຸ່ມຊົນເຜົ່າ ແລະ ອື່ນໆ
- ໂຄງລ່າງພື້ນຖານ ເຊັ່ນ ທາງ, ຂົວ, ໄຟຟ້າ ລວມເຖິງໂຮງງານຜະລິດກະແສໄຟຟ້າ, ໂຮງໝໍ, ຄລີນິກ, ໂຮງຮຽນ ແລະ ອື່ນໆ.
- ຂໍ້ມູນ ທາງດ້ານເສດຖະກິດ ເຊັ່ນ ຕະຫຼາດ, ພື້ນທີ່ກະສິກຳ (ລວມເຖິງປະເພດ ກະສິກຳ), ຕາໜ່າງຊົນລະປະທານ, ພື້ນທີ່ ອຸດສະຫະກຳ, ບໍ່ແຮ່ ແລະ ອື່ນໆ.

ຂໍ້ມູນປະເພດຕ່າງໆ ທີ່ຕ້ອງການສຳລັບການສຶກສາສະເພາະ ຕ້ອງມີການຄັດເລືອກສະເພາະ. ແລະ ຕ້ອງມີຂໍ້ມູນ ເພີ່ມເຕີມອື່ນໆອີກ ເມື່ອມີຄວາມຈຳເປັນ.

## ຂັ້ນຕອນ 2: ແຕ້ມຂໍ້ມູນລົງໃນແຜນທີ່ໂຄງການລົງທຶນລັດ

ພາຍຫຼັງເກັບກຳຂໍ້ມູນ ທີ່ຊັດເຈນ ທາງດ້ານພູມີສາດແລ້ວ, ຈະແຕ້ມລົງໃນແຜນທີ່ໂຄງການລົງທຶນລັດຫວ່າງໆເປົ່າດັ່ງກ່າວນັ້ນ.

***ບັນດາເປົ້າໝາຍລະດັບກາງ:*** ແຕ້ມເປົ້າໝາຍລະດັບກາງ ລົງໃນແຜນທີ່ໂຄງການລົງທຶນລັດ. ຖ້າເປົ້າໝາຍລະດັບກາງນັ້ນ ກວມເອົາຂອບເຂດທັງໝົດຂອງແຜນທີ່, ພວກມັນສາມາດຖືກທ້ອນໂຮມ ເປັນຂໍ້ຊຽນອະທິ

ບາຍໃຫ້ເປັນໝາຍ ເຫດ ຢູ່ນອກແຜນທີ່. ໃນກໍລະນີນີ້, ຕ້ອງແນ່ໃຈວ່າເນື້ອທີ່ ທີ່ບັນດາເປົ້າໝາຍຄອບຄຸມນັ້ນຈະແຈ້ງ ແລະ ຖືກຕ້ອງ ຊັດເຈນ.

***ບັນດາໂຄງການ PIP:*** ແຕ້ມ ບັນດາໂຄງການລົງທຶນລັດ ລົງໃນແຜນທີ່. ວາງທີ່ຕັ້ງຂອງໂຄງການໃຫ້ຖືກຕ້ອງ ຊັດເຈນ. ຖ້າບາງໂຄງການ ກວມເອົາ ຂອບເຂດໃດໜຶ່ງພາຍໃນແຜນທີ່, ຕ້ອງລະບຸພື້ນທີ່ຄອບຄຸມດັ່ງກ່າວ. ເຊັ່ນດຽວກັນຕ້ອງຂຽນບັນດາຕົວຊີ້ບອກຂອງຜົນກະທົບຂອງ ໂຄງການລົງທຶນລັດ ທີ່ກ່ຽວພັນກັບເປົ້າໝາຍລະດັບກາງ ທີ່ນຳມາສຶກສານັ້ນ. ໃຫ້ໃສ່ເຄື່ອງໝາຍໃສ່ໂຄງການຕ່າງໆ ໂດຍອີງສະຖານະພາບຂອງໂຄງການ ເຊັ່ນ ໂຄງການສືບຕໍ່, ສະເໜີໃໝ່, ຢູ່ໃນຂັ້ນຕອນວາງແຜນ ແລະ ອື່ນໆ.

***ຂໍ້ມູນພື້ນຖານ.*** ແຕ້ມຂໍ້ມູນພື້ນຖານ ກ່ຽວກັບຫົວໜ່ວຍ ແຜນງານ PIP, ຫຼື ການສຶກສາ.

**ຂັ້ນຕອນ: ວິເຄາະ ສະຖານະການ ທາງດ້ານພູມີສາດ**
ຫຼັງຈາກແຕ້ມທຸກໆ ຂໍ້ມູນແລ້ວ, ໃຫ້ວິເຄາະແຜນທີ່ໂຄງການລົງທຶນລັດ ທີ່ສຳເລັດສົມບູນນັ້ນ. ພວກມັນຈະໄດ້ມີການວິເຄາະ ຕາມ ສອງທັດສະນະ ດັ່ງນີ້;

**ການຄອບຄຸມ ຂອງບັນດາເປົ້າໝາຍ ລະດັບກາງ:** ໃຫ້ກວດກາວ່າ ການຄອບຄຸມ ແມ່ນເປັນໄປໄດ້ທາງດ້ານພູມີສາດນ້ອຍໂພດ ຫຼື ໃຫຍ່ໂພດ ຫຼືບໍ່. ເຊັ່ນດຽວກັນ ກວດກາວ່າ ເງື່ອນໄຂທາງດ້ານທຳມະຊາດ, ສັງຄົມ, ພື້ນຖານໂຄງລ່າງ ຫຼື ເສດຖະກິດ ພາຍໃນພື້ນທີ່ ແມ່ນມີຄວາມເໝາະສົມ ເພື່ອບັນລຸຜົນສຳເລັດ ຂອງເປົ້າໝາຍລະດັບກາງຫຼືບໍ່.

**ສະຖານທີ່ຕັ້ງ ຂອງບັນດາໂຄງການລົງທຶນລັດ:** ກວດກາວ່າ ບັນດາໂຄງການລົງທຶນລັດ ແມ່ນຕັ້ງຢູ່ໃນຂອບເຂດທີ່ຮັບປະກັນ ການບັນລຸຜົນສຳເລັດຂອງເປົ້າໝາຍລະດັບກາງຫຼືບໍ່. ເຊັ່ນດຽວກັນກວດກາເງື່ອນໄຂອ້ອມຂ້າງ ບັນດາໂຄງການລົງທຶນລັດ (ທຳມະຊາດ, ສັງຄົມ, ພື້ນຖານໂຄງລ່າງ ແລະ ເງື່ອນໄຂທາງດ້ານເສດຖະກິດ) ແມ່ນເໝາະສົມພຽງພໍ ເພື່ອບັນລຸເປົ້າໝາຍທີ່ຕັ້ງໄວ້ຫຼືບໍ່.

## (2). ຂໍ້ສະຫຼຸບ ແລະ ໝາກຜົນຕ່າງໆ

ຕໍ່ໄປນີ້ແມ່ນຂໍ້ສະຫຼຸບ ແລະ ໝາກຜົນຕ່າງໆ ຈາກການສຳເລັດການແຕ້ມແຜນທີ່ໂຄງການລົງທຶນລັດ;

**ແຜນທີ່ໂຄງການລົງທຶນລັດ:** ແຜນທີ່ໂຄງການລົງທຶນລັດເອງ ສະແດງທັດສະນະທີ່ຄົບຖ້ວນ ຂອງການຄອບຄຸມທາງດ້ານພູມີສາດ ຂອງ ບັນດາຕົວຊີ້ບອກ, ແລະ ສະຖານທີ່ຕັ້ງ ຂອງບັນດາໂຄງການລົງທຶນລັດ ທີ່ປະກອບສ່ວນ ຕໍ່ຄວາມສຳເລັດຂອງເປົ້າໝາຍ. ເຊັ່ນດຽວກັນ ມັນສະແດງໃຫ້ເຫັນຈຳນວນຂອງໂຄງການມີໜ້ອຍຫຼາຍຊ່ຳໃດໃນເຂດແຄວ້ນໃດໜຶ່ງ ໂດຍການປຽບທຽບ ສະຖານທີ່ຕັ້ງ ໃນແຜນທີ່ໂຄງການ.

**ຄຳແນະນຳ ທາງດ້ານພູມີສາດ ຕໍ່ກັບບັນດາໂຄງການລົງທຶນລັດ:** ຖ້າໄດ້ມີ ການປຶກສາຫາລື ໃນຊ່ວງ ຫຼື ຫຼັງຈາກສຳ ເລັດການແຕ້ມແຜນທີ່ໂຄງການລົງທຶນ, ພວກມັນກໍ່ເປັນສິ່ງອ້າງອີງໄດ້ເຊັ່ນກັນ. ໃນລະດັບໂຄງ ການລົງທຶນລັດ, ສະຖານທີ່ ຕັ້ງຂອງ ບັນດາໂຄງການແມ່ນຖືກລະບຸຢ່າງຈະແຈ້ງ, ແລະ ນອກຈາກນັ້ນສຳລັບ ບັນດາໂຄງການ ທີ່ວາງແຜນໃໝ່, ສາມາດມີ ຄຳແນະນຳ ຢ່າງມີຍຸດທະສາດ ກ່ຽວກັບສະຖານທີ່ຕັ້ງໄດ້.

**ຄຳແນະນຳ ທາງດ້ານພູມີສາດ ຕໍ່ກັບເປົ້າໝາຍລະດັບກາງ:** ຂໍ້ແນະນຳໃນເພີ່ມເຕີມ ກ່ຽວກັບລະດັບຫົວ ໜ່ວຍ ແຜນງານ PIP ອາດແນະນຳໃຫ້ກັບຜູ້ມີສິດຕັດສິນ. ໂດຍຂຶ້ນກັບແຕ່ລະຫົວຂໍ້, ການປຶກສາຫາລື ຕ່າງໆ ໃນຕໍ່ໜ້າອາດຈະມີເພື່ອແກ້ໄຂ ປະເດັນຕ່າງໆ

## (3). ການນຳໃຊ້ GIS

ຈາກການແນະນຳ ຂັ້ນຕອນໃນການສ້າງ ແຜນທີ່ໂຄງການລົງທຶນລັດ ຕ້ອງຜ່ານຈາກກອງປະຊຸມປຶກສາຫາລື, ມັນມີຄວາມຈຳ ເປັນນຳໃຊ້ແຜນທີ່ຫວ່າງເປົ່າ ທີ່ມີຂະໜາດໃຫຍ່, ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມສາມາດແຕ້ມລົງ ໄດ້ຢ່າງງ່າຍດາຍ. ຢ່າງໃດກໍ່ຕາມ, ຍ້ອນຄວາມກ້າວໜ້າຂອງ ເຕັກໂນໂລຢີ ທາງດ້ານຂໍ້ມູນຂ່າວສານ ໃນ ຊ່ວງຫຼາຍປີທີ່ຜ່ານມາ ເຮັດໃຫ້ມີວິທີການອັນໃໝ່ ໃນການສ້າງແຜນທີ່ໂຄງການລົງທຶນລັດ.

ລະບົບຂໍ້ມູນຂ່າວສານ ທາງດ້ານພູມີສາດ (GIS) ສາມາດນຳມາໃຊ້ໄດ້ ໂດຍການແຕ້ມເປົ້າໝາຍລະດັບ ກາງ ແລະ ບັນດາໂຄງການລົງທຶນລັດເພີ່ມເຕີມ ຈາກແຜນທີ່ເອເລັກໂຕນິກ ໂດຍວິທີການທີ່ເໝາະສົມ. ຫຼາຍໆ ແຂວງ ແລະ ກະຊວງມີແຜນທີ່ GIS. ແນະນຳວ່າ ຕ້ອງມີການສອບຖາມເອົາຂໍ້ມູນ GIS ທີ່ມີຄວາມ ຈຳເປັນ.

## <u>ຕົວຢ່າງຕ່າງໆ ຂອງແຜນທີ່ ໂຄງການລົງທຶນລັດ ໂດຍການນຳໃຊ້ ຊ໋ອບແວ GIS ຟຼີ</u>

### <u>ຕົວຢ່າງຂອງເຄືອຈຸດປະສົງ ແຜນງານ</u>

ເອກະສານຕິດຄັດ 2 ສະແດງໃຫ້ເຫັນເຖິງ ຕົວຢ່າງຕ່າງໆ ຂອງເຄືອຈຸດປະສົງ ແຜນງານຂອງ 1) ແຜນພັດທະ ນາ ເສດຖະກິດສັງຄົມ ແຂວງ ແລະ 2) ແຜນພັດທະນາຂະແໜງ ໂຍທາທິການ ແລະ ຂົນສົ່ງ ໃນ 3 ແຂວງ ທົດລອງ ຂອງໂຄງການ ພີແຄັບ 2 ຄື: ອຸດົມໄຊ, ຄຳມ່ວນ ແລະ ສາລະວັນ ສຳລັບປີ 2006-2010.

ໂຄງການ ພີແຄັບ 2 ໄດ້ສ້າງ ຕົວຢ່າງຕ່າງໆ ຂອງ ແຜນທີ່ໂຄງການລົງທຶນລັດ ຂອງ ແຜນພັດທະ ນາຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ ໃນ 3 ແຂວງ ທົດລອງ. ຄື: ອຸດົມໄຊ, ຄຳມ່ວນ ແລະ ສາລະວັນ ສຳລັບປີ 2006-2010. ແຜນທີ່ເຫຼົ່ານີ້ ໄດ້ສ້າງຂຶ້ນ ໂດຍນຳໃຊ້ ຟຼີຊອບແວ GIS, *MapWondow*[1] (ໃຫ້ເບິ່ງ ເອກະ ສານຕິດຄັດ ທີ 4), ລັກສະນະຂອງ ແຜນທີ່ມີດັ່ງຕໍ່ໄປນີ້.

1 http://www.mapwindow.org/

1) ພື້ນທີ່ເປົ້າໝາຍ: 3 ແຂວງທົດລອງ ຂອງໂຄງການພິແຄັບ 2
   - ອຸດົມໄຊ
   - ຄຳມ່ວນ
   - ສາລະວັນ
2) ຂໍ້ມູນທີ່ມີ
   - ຂອບເຂດ ການປົກຄອງ
   - ທາງຫຼວງແຫ່ງຊາດ
   - ທາງຫຼວງແຂວງ ແລະ ທາງຊົນນະບົດ
   - ພູມິປະເທດ
   - ແມ່ນໍ້າ
   - ບ້ານ (ລວມເຖິງ ສຸກສາລາ, ໂຮງຮຽນ)
   - ທີ່ຕັ້ງຂອງ ໂຄງການລົງທຶນລັດ ທີ່ມີໃນລາຍຊື່ ຂອງ ແຜນພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ ສຳລັບປີ 2006-2010.
3) ໜ້າທີ່ ທີ່ມີ
   - ໜ້າທີ່ ການສະແດງໃຫ້ເຫັນ : ການສະແດງໃຫ້ເຫັນ
     - Basic data ຂໍ້ມູນ ພື້ນຖານ
     - ພື້ນຖານໂຄງລ່າງ ຕົວຈິງ
     - ໂຄງການລົງທຶນລັດ ທີ່ມີໃນລາຍຊື່ ຂອງແຜນພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ ສຳລັບປີ 2006-2010
   - ໜ້າທີ່ ດັດແກ້ : ດັດແກ້
     - ຂໍ້ມູນພື້ນຖານ
     - ໂຄງການລົງທຶນລັດທີ່ມີໃນລາຍຊື່ ຂອງແຜນພັດທະນາຂະແໜງ ໂຍທາທິການ ແລະ ຂົນສົ່ງ ສຳລັບປີ 2006-2010
   - ການວິເຄາະຂໍ້ມູນ

## 3. ການຕິດຕາມກວດກາ ບັນດາຫົວໜ່ວຍ ແຜນງານ PIP ແລະ ແຜນທີ່ໂຄງການລົງທຶນລັດ

ບັນດາຫົວໜ່ວຍ ແຜນງານ PIP , ລວມທັງ ເຄື່ອຈຸດປະສົງແຜນງານ ແລະ ຕາຕະລາງໂລຈິໂນໂລຊີ, ພ້ອມກັບ ແຜນທີ່ໂຄງການລົງທຶນລັດ ແມ່ນໄດ້ຖືກສ້າງຂຶ້ນ ໂດຍອີງໃສ່ ແຜນພັດທະນາ ເສດຖະກິດ-ສັງຄົມໄລຍະກາງ, ແລະ ຈະເປັນກອບບວງກພື້ນຖານ ໃນຊ່ວງ 5 ປີ. ຢ່າງໃດກໍ່ຕາມ, ພວກມັນຕ້ອງມີການຕິດຕາມກວດກາ ແລະ ປັບປຸງປະຈຳປີ ພ້ອມກັນກັບ ແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ, ເພື່ອທ່ວງທັນກັບຄວາມຄືບໜ້າຂອງຄວາມສຳເລັດຂອງ ບັນດາເປົ້າໝາຍລະດັບກາງຂອງມັນ. ພາກຍ່ອຍຕໍ່ໄປນີ້ອະທິບາຍວິທີການການຕິດຕາມກວດກາຕ່າງໆ ສຳລັບແຕ່ລະອົງປະກອບ.

## 3.1 ການຕິດຕາມກວດກາ ບັນດາຫົວໜ່ວຍ ແຜນງານ PIP

ການຕິດຕາມກວດກາ ບັນດາຫົວໜ່ວຍແຜນງານ PIP ແມ່ນໄດ້ປະຕິບັດພ້ອມໆ ກັບຂັ້ນຕອນ ການສະເໜີງົບປະມານ ສຳລັບສົກງົບປະມານປີຕໍ່ໄປ. ຈຸດປະສົງຂອງການຕິດຕາມກວດກາແມ່ນ (a) ສະແດງໃຫ້ເຫັນຜົນໄດ້ຮັບ ແລະ ຕົວຊີ້ບອກຂອງບັນດາປີທີ່ຜ່ານມາ (b) ຢືນຢັນ ທິດທາງຂອງຫົວໜ່ວຍແຜນງານພາຍໃນແຜນພັດ ທະນາເສດຖະກິດ-ສັງຄົມປະຈຳປີ, ແລະ ງົບປະມານການລົງທຶນລັດ ສຳລັບປີປັດຈຸບັນ, ແລະ (c) ນຳໃຊ້ບັນດາຜົນໄດ້ຮັບ ຈາກການຕິດຕາມກວດກາ ເພື່ອສະໜັບສະໜູນ ການຄັດເລືອກໂຄງການລົງທຶນລັດ ແລະ ການການຈັດສັນງົບປະມານໂຄງການລົງທຶນລັດ ດັ່ງກ່າວ.

ໂດຍຜ່ານຂະບວນການນີ້, ຜົນຕ່າງໆຂອງການຈັດຕັ້ງປະຕິບັດ ແລະ ປະເດັນຕ່າງໆຂອງມັນຂອງປີທີ່ຜ່ານມາ ໄດ້ຖືກລະບຸ, ແລະ ນອກຈາກນັ້ນ, ສາມາດຢືນຢັນໄດ້ ແນວທາງໂດຍລວມຈາກການສ້າງແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ ແລະ ການສະເໜີງົບປະມານການລົງທຶນລັດສຳລັບປີຕໍ່ໄປ.

### (1). ເຄືອຈຸດປະສົງແຜນງານ (POT)

ໜ້າວຽກຫຼັກ ຂອງການຕິດຕາມກວດກາ POT ແມ່ນ***ການຈັດວາງ ບັນດາໂຄງການລົງທຶນລັດ.*** ຍ້ອນວ່າສະຖານະພາບຂອງແຕ່ລະໂຄງການລົງທຶນລັດປ່ຽນແປງ ແຕ່ລະປີ, ມີຄວາມຈຳເປັນໃນການປັບປຸງພວກມັນໃຫ້ຢູ່ໃນສະຖານະພາບທີ່ເປັນຢູ່ໃນປັດຈຸບັນ. ສະຖານະພາບຈາກການເປັນໂຄງການໃໝ່ ຈາກປີກ່າຍຈະກາຍມາເປັນໂຄງການສືບຕໍ່. ໂຄງການທີ່ຫາກໍ່ສຳເລັດ ກໍ່ຈະປ່ຽນຈາກສະຖານະພາບມາເປັນໂຄງການສຳເລັດແລ້ວ, ຫຼື ນຳໃຊ້. ສຳລັບບັນດາໂຄງການທີ່ສຳເລັດ, ຈະຕ້ອງມີການເກັບກຳບັນດາຕົວຊີ້ວັດ ຂອງການສຳເລັດ.
***ສຳລັບໂຄງການ ລົງທຶນລັດທີ່ວາງແຜນໃໝ່***, ໄດ້ມີການປຶກສາຫາລື ກ່ຽວກັບຫົວໜ່ວຍແຜນງານ ທີ່ມັນນອນຢູ່. ພາຍຫຼັງການປະເມີນແບບຂາດຕົວ ໄດ້ສຳເລັດລົງແລ້ວ, ມັນຕ້ອງຖືກລວມເຂົ້າໃນ POT ຊົ່ວຄາວ. ມັນຈະຖືກ ລວມເຂົ້າຢ່າງເປັນທາງການ ໃນເວລາງົບປະມານ ໄດ້ຮັບການຮັບຮອງ ໂດຍສະພາແຫ່ງຊາດແລ້ວ. ມັນມີຄວາມສຳຄັນ ທີ່ຈະຕ້ອງຮັບປະກັນວ່າ ບັນດາຕົວຊີ້ວັດນັ້ນຕ້ອງກ່ຽວພັນກັບເປົ້າໝາຍລະດັບກາງ.

***ບັນດາທີ່ຖືກຈັດຕັ້ງປະຕິບັດໂຄງການ ແລະໄດ້ບັນລຸຜົນຄາດໝາຍຂອງມັນແລ້ວ*** ອາດຈະຖືກເອົາອອກຈາກ POT. ຢ່າງໃດກໍ່ຕາມ, ມັນມີຄວາມສຳຄັນ ທີ່ຈະຕ້ອງຮັບປະກັນວ່າ ບັນດາຕົວເລກຂອງເປົ້າໝາຍລະດັບກາງແມ່ນໄດ້ ມີການດັດປັບ ໂດຍອີງໃສ່ ການບັນລຸຜົນສຳເລັດ ຂອງບັນດາຜົນໄດ້ຮັບຂອງໂຄງການ.

POT, ແລະຂໍ້ມູນ ຂອງໂຄງການລົງທຶນລັດທີ່ໄດ້ຮັບການປັບປຸງ ຈະສຳເລັດ.

### (2). ຕາຕະລາງໂລຼໂນໂລຊີ

ການຕິດຕາມກວດກາ ສ່ວນໃຫຍ່ ແມ່ນຈະເຮັດໃນຕາຕະລາງໂຄຼໂນໂລຊີ ຍ້ອນຕາຕະລາງໄດ້ສະແດງໃຫ້ເຫັນ ການໄຫຼວຽນປະຈຳປີ ຂອງບັນດາເປົ້າໝາຍ, ຂອງບັນດາຕົວຊີ້ວັດ, ແລະ ບັນດາໂຄງການລົງທຶນລັດ. ມັນມີຄວາມສຳຄັນ ທີ່ຕ້ອງມີການປັບປຸງຕົວເລກສະເພາະຕ່າງໆ ໃຫ້ເຂົ້າກັບໄລຍະປັດຈຸບັນ.

### ແຜນວາດ 5: ຕາຕະລາງໂຄຼໂນໂລຊີ (Chronology Chart) ແລະ ບັນດາຈຸດທີ່ຕ້ອງຕິດຕາມ ກວດກາ

ປີຕິດຕາມກວດກາ

| ບັນດາເປົ້າຫມາຍລະດັບກາງ | ຄາດຄະເນຜົນບັນລຸຢູ່ໃນໄລຍະກາງ | ຫົວຫນ່ວຍ/% | ປີທີ 1 | ປີທີ 2 | ປີທີ 3 | ປີທີ 4 | ປີທີ 5 |
|---|---|---|---|---|---|---|---|
| ເພີ່ມການຜະລິດເຂົ້າ ນາປີຢູ່ໃນທ້ອງຖິ່ນ xxx | ກກກກ ໂຕນ/ ລະດູນາປີ | ຫົວຫນ່ວຍ | cccc | dddd | | | aaaa |
| | | % | 55% | 70% | 75% | 85% | 100% |
| ເພີ່ມການຜະລິດເຂົ້າ ນາແຊງຢູ່ໃນທ້ອງຖິ່ນ xxx | ກກກກ ໂຕນ/ ລະດູນາແຊງ | ຫົວຫນ່ວຍ | gggg | hhhh | | | bbbb |
| | | % | 45% | 65% | 80% | | 100% |

| ຊື່ໂຄງການ PIP | ົວຊີ້ວັດໝາກຜົນໂຄງການ/ໄລຍະເວລາ | | ປີທີ 1 | ປີທີ 2 | ປີທີ 3 | ປີທີ 4 | ປີທີ 5 |
|---|---|---|---|---|---|---|---|
| **ໂຄງການຊົນລະປະທານຢູ່ເຂດ xxx** ຊົນລະປະທານສຳລັບ ການຜະລິດເຂົ້າລະດູແລ້ງ | <ໄລຍະເວລາ> ຄວາມຄືບໜ້າໃນ (2) ປີ ຈາກ ປີທີ 1 | ເສັ້ນສະແດງ | ໂຄງການ | ການຄຸ້ມຄອງນຳໃຊ້ | | | |
| | <ຕົວຊີ້ວັດໝາກຜົນໂຄງການ> ການເພີ່ມການຜະລິດເຂົ້າລະດູແລ້ງໃຫ້ໄດ້ xxx ໂຕນ | ຫົວຫນ່ວຍ | ຍັງບໍ່ | ການຄຸ້ມຄອງນຳໃຊ້ ການຜະລດເຂາ ໃນລະດູ ... ຈະເພີ້ມຂື້ນ xxx ໂຕນ | ການຜະລດເຂາ ໃນລະດູແລ້ງໃນຕໍ່ໜ້າຈະເພີ້ມ ຂື້ນ xxx ໂຕນ | | |
| **ໂຄງການປັບປຸງພືດ ເຂົ້າ** ນຳໃຊ້ ແລະ ສຶກສາຄວາມອາດສາມາດຂອງການປັບປຸງພືດທີ່ໄດ້ມີການພັດທະນາໃນສະຖາບັນກະສິກຳ | <ໄລຍະເວລາ> | ເສັ້ນສະແດງ | ໂຄງການ | | | ການຄຸ້ມຄອງນຳໃຊ້ | |
| | <ຕົວຊີ້ວັດໝາກຜົນໂຄງການ> ການເພື່ອຜົນຜະລິດເຂົ້າໃນລະດູແລ້ງໃຫ້ໄດ້ xxx ໂຕນ | ຫົວຫນ່ວຍ | | ການທົດລອງ ປີທີ 1 ເພີ້ມຂື້ນ aa ໂຕນ | ການທົດລອງ ປີທີ 2 ເພີ້ມຂື້ນ aa ໂຕນ | ການຄຸ້ມຄອງນຳໃຊ້ ເພີ້ມຂື້ນ xx ໂຕນ | |
| | ການເພີ່ມຜົນຜະລິດເຂົ້າໃນລະດູນາປີ ໃຫ້ໄດ້ xx ໂຕນ | | | ເພີ້ມຂື້ນ bb ໂຕນ | ເພີ້ມຂື້ນ bb ໂຕນ | ເພີ້ມຂື້ນ xx ໂຕນ | |
| **ການປັບປຸງຂອງຮ່ອງລະບາຍນ້ຳ** ການກໍ່ສ້າງຂົວແລະຕາຟັ່ງເພື່ອພົດລະດູຝົນ | <ໄລຍະເວລາ> 2 ປີ ຈາກ ປີທີ່3 ຫາປີ ທີ່ 4 | ເສັ້ນສະແດງ | | | ໂຄງການ | | ການຄຸ້ມຄອງນຳໃຊ້ |
| | <ຕົວຊີ້ວັດໝາກຜົນໂຄງການ> ການເພີ່ມຂື້ນໃນລະດູຝົນໃຫ້ໄດ້ xx ໂຕນ | ຫົວຫນ່ວຍ | | | | ການທົດລອງການຄຸ້ມ ເພີ້ມຂື້ນ xx ໂຕນ | ການຄຸ້ມຄອງນຳໃຊ້ ເພີ້ມຂື້ນ xx ໂຕນ |

ຈຳນວນການບັນລຸຜົນປະຈຳປີ
% ການບັນລຸເປົ້າຫມາຍປະຈຳປີ
ການຄຸ້ມຄອງນຳໃຊ້ຂອງບັນດາຜົນໄດ້ ຮັບໂຄງການ
ບັນດາຫມາກຜົນໂຄງການປະຈຳປີ

ການຕິດຕາມກວດກາ ຂອງຕາຕະລາງໂຄຼໂນໂລຊີ ແມ່ນປະຕິບັດ ຕາມຂັ້ນຕອນຕ່າງໆ ດັ່ງຕໍ່ໄປນີ້;

### ຂັ້ນຕອນ 1: ເກັບກຳ ບັນດາຕົວຊີ້ວັດ ຫຼ້າສຸດ

ເກັບກຳບັນດາຕົວຊີ້ວັດທັງໝົດ ຈາກແຜນພັດທະນາ ເສດຖະກິດ-ສັງຄົມປະຈຳປີ, ຈາກບົດລາຍງານ ໂຄງການ ແລະ ແຫຼ່ງຂໍ້ມູນຈາກຂະແໜງການ/ເຂດແຄວັນ. ຢືນຢັນວ່າ ບັນດາຕົວເລກ ຫຼ້າສຸດ ແມ່ນຜົນໄດ້ຮັບຕົວຈິງ ຫຼື ແມ່ນຕົວເລກຄາດຄະແນ, ແລະ ຕ້ອງຮັບປະກັນ ວ່າບັນດາຕົວເລກຕົວຈິງນັ້ນຕ້ອງມີການປັບປຸງຢ່າງໄວທີ່ ສຸດເມື່ອໄດ້ຮັບມາໃໝ່. ປຽບທຽບລ່ວງໜ້າ ວ່າຜົນໄດ້ຮັບຕົວຈິງ ແລະ ແຜນເບື້ອງຕົ້ນ, ແລະ ເຮັດເຄື່ອງໝາຍໃສ່ ຕົວເລກທີ່ສຳຄັນ ທີ່ບໍ່ບັນລຸຕົວເລກທີ່ຄາດໝາຍໄວ້.

### ຂັ້ນຕອນ 2: ຂຽນບັນດາຕົວເລກຊີ້ວັດ ສຳລັບບັນດາເປົ້າໝາຍລະດັບກາງ

## ແຜນວາດທີ່ 6: ການຕິດຕາມກວດກາ ບັນດາເປົ້າໝາຍລະດັບກາງ

ປີຕິດຕາມກວດກາ

| ບັນດາເປົ້າຫມາຍລະດັບກາງ | ຄາດຫວັງຜົນບັນລຸຢູ່ທ້າຍຂອງ ໄລຍະກາງ | ຫົວຫນ່ວຍ/% | ປີທີ 1 | ປີທີ 2 | | | ປີທີ 5 |
|---|---|---|---|---|---|---|---|
| ການຜະລິດໃນລະດູຝົນຢູ່ເຂດ xxx ເພີ້ມຂື້ນ | aaaa ໂຕນ / ລະດູຝົນ | ຫົວຫ່ວຍ | cccc | dddd | | | aaaa |
| | | % | 45% (55%) | 70% (70%) | 75% | 85% | 100% |
| ການຜະລິດເຂົ້າໃນລະດູແລ້ງຢູ່ເຂດ xxx ເພີ້ມຂື້ນ | bbbb ໂຕນ / ລະດູແລ້ງ | ຫົວຫ່ວຍ | gggg | hhhh | | | bbbb |
| | | % | 38% (45%) | 61% (65%) | 80% | 90% | 100% |
| | | | | | | | |
| ຊື່ໂຄງການ PIP | ຕົວຊີ້ວັດຫມາກຜົນໂຄງການ/ໄລຍະເວລາ | | ປີທີ 1 | ປີທີ 2 | ປີທີ 3 | ປີທີ 4 | ປີທີ 5 |
| **ໂຄງການຊົນລະປະທານເຂດ xxx** ຊົນລະປະທານສຳລັບການຜະລິດເຂົ້າລະດູແລ້ງ | <ໄລຍະເວລາ> ຄວາມຄືບຫນ້າໃນ (2) ປີ ຈາກປີທີ 1 | ເສັ້ນສະແດງ | ໂຄງການ | ການຄຸ້ມຄອງນຳໃຊ້ | | | |
| | <ຕົວຊີ້ວັດຫມາກຜົນໂຄງການ> | ຫົວຫນ່ວຍ | | ການຄຸ້ມຄອງນຳໃຊ້ | | | |

ຈຳນວນການບັນລຸປະຈຳປີ

% ເປົ້າຫມາຍການບັນລຸປະຈຳປີ

ມັນມີຄວາມສຳຄັນ ທີ່ຕ້ອງຂຽນ ຕົວເລກໃໝ່ຫຼ້າສຸດ, ຈາກຜົນໄດ້ຮັບຕົວຈິງ ແລະ ຈາກການຄາດຄະເນ. ແລະ ຕ້ອງຮັບປະກັນວ່າຜົນໄດ້ຮັບຕົວຈິງນັ້ນ ໄດ້ຂຽນລົງທັນທີທີ່ມີຂໍ້ມູນ. ສຳລັບການຄາດຄະເນ, ມັນມີຄວາມສຳຄັນ ທີ່ທຳອິດຕ້ອງ ສັງເກດຜົນໄດ້ຮັບຕົວຈິງກ່ອນ ແລະ ກວດກາວ່າ ມີຄວາມຈຳເປັນຕ້ອງມີບັນດາຕົວຊີ້ວັດເພີ່ມເຕີມ ຫຼືບໍ່.

ພາຍຫຼັງ ການຄິດໄລ່ ເປີເຊັນຂອງຄວາມສຳເລັດ ຫຼ້າສຸດ, ຖ້າເປີເຊັນແມ່ນຕ່ຳກວ່າ ເມື່ອປຽບທຽບກັບແຜນການ, ມັນມີຄວາມສຳຄັນ ທີ່ຕ້ອງມີມາດຕະການແກ້ໄຂສຳລັບປີຕໍ່ໆໄປ.

## ຂັ້ນຕອນ 3: ຂຽນ ບັນດາຕົວຊີ້ວັດຜົນກະທົບໂຄງການລົງທຶນລັດ

## ແຜນວາດ ທີ່ 7: ການຕິດຕາມກວດກາ ບັນດາໂຄງການລົງທຶນລັດ

ປີຕິດຕາມກວດກາ

| ຊື່ໂຄງການ PIP | ຕົວຊີ້ວັດຫມາກຜົນໂຄງການ/ໄລຍະເວລາ | | ປີທີ 1 | ປີທີ 2 | ປີທີ 3 | ປີທີ 4 | ປີທີ 5 |
|---|---|---|---|---|---|---|---|
| **ໂຄງການຊົນລະປະທານເຂດ xxx** ຊົນລະປະທານສຳລັບການຜະລິດເຂົ້າລະດູແລ້ງ | <ໄລຍະເວລາ> ການເພີ້ມຂື້ນໃນ (2) ປີ ຈາກ ປີທີ 1 | ເສັ້ນສະແດງ | ໂຄງການ | ການຄຸ້ມຄອງນຳໃຊ້ | | | |
| | <ຕົວຊີ້ວັດຫມາກຜົນໂຄງການ> ການຜະລິດເຂົ້າໃນລະດູແລ້ງເພີ້ມຂື້ນ xxx ໂຕນ | ຫົວຫນ່ວຍ | | ການຄຸ້ມຄອງນຳໃຊ້ ການຜະລິດເຂົ້າໃນລະດູ ... ເພີ້ມຂື້ນ xxx ໂຕນ | ການຜະລິດເຂົ້າໃນລະດູແລ້ງຫນ້າຈະເພີ້ມຂື້ນ | | |
| **ໂຄງການປັບປຸງ ພືດ ເຂົ້າ** ນຳໃຊ້ ແລະ ສຶກສາຄວາມອາດສາມາດຂອງການປັບປຸງພືດທີ່ໄດ້ມີການພັດທະນາໃນສະຖາບັນກະສິກຳ | <ໄລຍະເວລາ> | ເສັ້ນສະແດງ | ໂຄງການ | | | ການຄຸ້ມຄອງນຳໃຊ້ | |
| | <ຕົວຊີ້ວັດຫມາກຜົນໂຄງການ> ການຜະລິດເຂົ້າລະດູແລ້ງເພີ້ມຂື້ນ xxx ໂຕນ | ຫົວຫນ່ວຍ | | ທົດລອງປີທີ 1 ເພີ້ມຂື້ນ aa ໂຕນ | ທົດລອງ ປີທີ 2 ເພີ້ມຂື້ນ aa ໂຕນ | ການຄຸ້ມຄອງນຳໃຊ້ ເພີ້ມຂື້ນ xx ໂຕນ | |
| | ການຜະລິດເຂົ້າລະດູຝົນ ເພີ້ມຂື້ນ xx ໂຕນ | | | ເພີ້ມຂື້ນ bb ໂຕນ | ເພີ້ມຂື້ນ bb ໂຕນ | ເພີ້ມຂື້ນ xx ໂຕນ | |
| **ການປັບປຸງຂອງຮ່ອງລະບາຍນ້ຳ** ການກໍ່ສ້າງຂົວແລະຕາຟັ່ງເພື່ອພືດລະດູຝົນ | <ໄລຍະເວລາ> 2 ປີ ແຕ່ ປີທີ 3 ເຖິງ ປີທີ 4 | ເສັ້ນສະແດງ | | | ໂຄງການ | | ການຄຸ້ມຄອງນຳໃຊ້ |
| | <ຕົວຊີ້ວັດຫມາກຜົນໂຄງການ> ການຜະລິດເຂົ້າລະດູຝົນເພີ້ມຂື້ນ xx ໂຕນ | ຫົວຫນ່ວຍ | | | | ທົດລອງການຄຸ້ມຄອງນຳໃຊ້ ເພີ້ມຂື້ນ xx ໂຕນ | ການຄຸ້ມຄອງນຳໃຊ້ ເພີ້ມຂື້ນ xx ໂຕນ |

ການຄຸ້ມຄອງນຳໃຊ້ ບັນດາຜົນໄດ້ຮັບໂຄງ

ຜົນໄດ້ຮັບໂຄງ ການປະຈຳປີ

ກວດຄວາມຄືບໜ້າປະຈຳປີ ຂອງແຕ່ລະໂຄງການ ແລະ ປັບປຸງແຜນວາດ, ພ້ອມກັບປັບປຸງ ການປ່ຽນແປງ

ໃດໆ ຂອງແຜນການທີ່ຄາດໄວ້.

**ຂັ້ນຕອນທີ 4: ແຕ້ມບັນດາໂຄງການລົງທຶນລັດໃໝ່ ແລະ ເອົາໂຄງການ ທີ່ສຳເລັດແລ້ວອອກ (ຫຼື ເອົາຜົນກະທົບ ທີ່ສຳເລັດແລ້ວອອກ)**
ສຳລັບບັນດາໂຄງການໃໝ່ ທີ່ຂຽນລົງໃນ POT, ມັນຈະຖືກຕື່ມລົງໃສ່ແຜນວາດ ພ້ອມກັບບັນດາຕົວຊີ້ວັດຂອງມັນ ແລະ ຜົນກະທົບປະຈຳປີ. ສຳລັບໂຄງການທີ່ກຳລັງນຳໃຊ້ ທີ່ໄດ້ບັນລຸຜົນກະທົບ ຕາມເປົ້າໝາຍຂອງມັນ ແລ້ວ ຈະໄດ້ເອົາອອກຈາກ POT, ມັນຈະຕ້ອງໄດ້ເອົາອອກຈາກ ຕາຕະລາງໂຄູໂນໂລຊີ ເຊັ່ນກັນ. ຢ່າງໃດກໍ່ຕາມ, ຕ້ອງຮັບປະກັນວ່າຕົວເລກ ຂອງເປົ້າໝາຍລະດັບກາງ ໄດ້ຮັບການປັບດັດ ໂດຍອີງຕາມການສຳເລັດ ຂອງຜົນ ໄດ້ຮັບຂອງໂຄງການ.

**ຂັ້ນຕອນທີ 5: ກວດການສຳເລັດທັງໝົດ.**
ປຽບທຽບ ຜົນໄດ້ຮັບຕົວຈິງ ກັບແຜນເບື້ອງຕົ້ນ. ຖ້າລະດັບຂອງຄວາມສຳເລັດ ແມ່ນຕ່ຳກວ່າ ແຜນການປະຈຳປີຫຼາຍ ຕ້ອງມີວິທີການແກ້ໄຂ.

## 3.2 ການຕິດຕາມກວດກາ ແຜນທີ່ໂຄງການລົງທຶນລັດ

ແຜນທີ ໂຄງການລົງທຶນລັດໄດ້ຖືກປັບປຸງປະຈຳປີ ເຊັ່ນດຽວກັນ. ໜ້າທີ່ຫຼັກຂອງການຕິດຕາມກວດກາແຜນທີ່ໂຄງການລົງທຶນລັດ ແມ່ນເພື່ອ ປັບປຸງເປົ້າໝາຍລະດັບກາງ ແລະ ສະຖານະພາບຂອງບັນດາໂຄງການ PIP. ການຕິດຕາມກວດກາ ແຜນທີ່ ໂຄງການລົງທຶນລັດແມ່ນປະຕິບັດ ຕາມຂັ້ນຕອນຕ່າງໆ ດັ່ງນີ້;

**ຂັ້ນຕອນ ທີ 1: ເກັບກຳ ຂໍ້ມູນ ທາງດ້ານພູມີສາດ ຫຼ້າສຸດ:**
ໂດຍການນຳໃຊ້ ຂໍ້ມູນອ້າງອີງດຽວກັນກັບ POT, ໃຫ້ເກັບກຳ ບັນດາຕົວຊີ້ວັດ ຈາກ ແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ, ຈາກບົດລາຍງານ ໂຄງການ ແລະ ແຫຼ່ງຂໍ້ມູນຈາກຂະແໜງການ/ເຂດແຄວ້ນ. ຊອກ ຫາສະຖານທີ່ຕັ້ງທີ່ແນ່ນອນ ຂອງບັນດາໂຄງການວາງແຜນໃໝ່, ພ້ອມກັບ ບັນດາຕົວຊີ້ວັດອ້ອມຂ້າງ.

**ຂັ້ນຕອນ 2: ໃສ່ຂໍ້ມູນ ຫຼ້າສຸດແທນທີ່ ລົງໃນ ແຜນທີ່ໂຄງການລົງທຶນລັດ**
ສະແດງຂໍ້ມູນ ຫຼ້າສຸດ ລົງໃນແຜນທີ່ໂຄງການລົງທຶນລັດ. ຖ້າແຜນທີ່ໂຄງການລົງທຶນລັດ ເບື້ອງຕົ້ນໄດ້ສ້າງຂຶ້ນປະຈຳປີເທິງເຈັ້ຍ, ແນະນຳ ວ່າຕ້ອງອັດເອກະສານ ແລະ ຂຽນທັບໃສ່, ເພື່ອສາມາດສະແດງໃຫ້ເຫັນເຖິງຄວາມຄືບໜ້າ. ແຕ້ມສະຖານທີ່ຕັ້ງຂອງບັນດາໂຄງການສະເໜີໃໝ່. ເຊັ່ນດຽວກັນຕ້ອງມີການແຕ້ມບັນດາຂໍ້ມູນ ທີ່ກ່ຽວຂ້ອງທີ່ອາດຈະມີຜົນຕໍ່ກັບບັນດາຕົວຊີ້ວັດລະດັບກາງ ຈາກບັນດາເອກະສານຂອງໂຄງການ.

**ຂັ້ນຕອນ 3: ການຕິດຕາມກວດກາ ການສຳເລັດ ແລະ ຄວາມຄືບໜ້າ ທັງໝົດ:**

ປຽບທຽບ ຜົນໄດ້ຮັບຕົວຈິງ ທີ່ແຕ້ມລົງໃນແຜນການເບື້ອງຕົ້ນ. ຖ້າພົບການທັບຊ້ອນ ພາຍໃນພື້ນທີ່ຄອບຄຸມ ຂອງ ໂຄງການ, ຕ້ອງມີການຫຼີກລ່ຽງ ໂດຍຜ່ານການປຶກສາຫາລື ກັບເຈົ້າຂອງໂຄງການ. ຖ້າມີບາງໂຄງການລົງທຶນລັດ ທີ່ ເຊື່ອວ່າ ຈະສາມາດຂະຫຍາຍຜົນກະທົບ ໂດຍການຂະຫຍາຍ ພື້ນທີ່ຄອບຄຸມ, ແນະນຳໃຫ້ຂະແໜງການ/ເຂດ ແຄວ້ນ ທີ່ຮັບຜິດຊອບ ແລະ ເຈົ້າຂອງໂຄງການ ໃຫ້ຮູ້ເຖິງຄວາມເປັນໄປໄດ້.

### 3.3 ການສະທ້ອນຜົນຂອງການຕິດຕາມກວດກາ ໃຫ້ແຕ່ລະໂຄງການລົງທຶນລັດ

ໃນຂະບວນການ ຂອງການຕິດຕາມກວດກາ ບັນດາຫົວໜ່ວຍ ແຜນງານ PIP, ຕ້ອງມີການສະທ້ອນ ຂໍ້ມູນຫຼ້າສຸດ ຈາກບັນດາໂຄງການ ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້.

ການສະທ້ອນຂໍ້ມູນ ບັນດາຫົວໜ່ວຍແຜນການ PIP ທີ່ໄດ້ຮັບການຕິດຕາມກວດກາ ຜ່ານ ແຕ່ລະບັນດາໂຄງການລົງທຶນລັດ ແມ່ນປະຕິບັດ ໃນ 2 ຂັ້ນຕອນ. ຂັ້ນຕອນທຳອິດ ເມື່ອແຕ່ລະໂຄງການລົງທຶນລັດ ກຳລັງໄດ້ຮັບການປະເມີນ ຫຼື ປະເມີນຜົນແບບຂາດຕົວ, ແລະ ຂັ້ນຕອນທີ່ສອງ ເມື່ອບັນດາໂຄງການລົງທຶນລັດຖືກຈັດເປັນກຸ່ມ ແລະ ກຳລັງໄດ້ຮັບການປະເມີນແບບສົມທຽບ. 2 ຂັ້ນຕອນ ຂອງການສະທ້ອນຜົນຂອງການຕິດຕາມກວດກາ ຂອງ ຫົວໜ່ວຍແຜນງານ ໃຫ້ແຕ່ລະບັນດາໂຄງການລົງທຶນລັດ ແມ່ນໄດ້ອະທິບາຍດັ່ງຕໍ່ໄປນີ້ ;

#### (1). ການສະທ້ອນໃຫ້ແກ່ ການປະເມີນ/ປະເມີນຜົນແບບຂາດຕົວ

ຜົນຂອງການຕິດຕາມກວດກາ ຂອງຫົວໜ່ວຍແຜນງານ PIP ແມ່ນໄດ້ຖືກນຳໃຊ້ໃນການປະເມີນ/ປະເມີນຜົນແບບຂາດຕົວ. ວິທີການຂອງການນຳໃຊ້ດັ່ງກ່າວ ປ່ຽນແປງໄປໂດຍຂຶ້ນກັບ ສະຖານະພາບຂອງຄວາມຄືບໜ້າຂອງໂຄງການ ທີ່ຖືກປະເມີນ/ປະເມີນຜົນ.

**ສຳລັບບັນດາໂຄງການໃນຂັ້ນຕອນ ກຳນົດໂຄງການ:** ກຳນົດໂຄງການ ເຖິງແມ່ນວ່າ ຂັ້ນຕອນນີ້ ບໍ່ຕ້ອງການການປະເມີນແບບຂາດຕົວ, ຫົວໜ່ວຍແຜນງານ PIP ສາມາດເປັນທິດນຳ ໃຫ້ບັນດາໂຄງການທີ່ຖືກກຳນົດມາໃໝ່. ລັກສະນະໂດຍລວມຂອງຂະໜາດໂຄງການ, ພື້ນທີ່ຄອບຄຸມ ແລະເວລາຂອງໂຄງການ ທີ່ເຊິ່ງກຳລັງ ຖືກວາງແຜນນີ້ ລວມເຖິງ ຜົນກະທົບທີ່ຕ້ອງການໃນຊ່ວງການນຳໃຊ້ ທີ່ຄາດຄະເນໄວ້ ສາມາດລະບຸໄດ້ໂດຍອີງໃສ່ ຄວາມຕ້ອງການ ຈາກ POT, ຕາຕະລາງໂຄໂນໂລຊີ ແລະ ບັນດາແຜນທີ່ໂຄງການລົງທຶນລັດ .

**ສຳລັບບັນດາໂຄງການໃໝ່ກ່ອນການກໍ່ສ້າງ:** ການປະເມີນແບບຂາດຕົວ ຂອງໂຄງການວາງແຜນໃໝ່ ແມ່ນຂັ້ນຕອນທີ່ມີຄວາມສຳຄັນທີ່ສຸດ. ໂຄງການລົງທຶນລັດ ໃນຂັ້ນຕອນນີ້ຕ້ອງມີຄວາມສອດຄ່ອງຢ່າງຄົບຖ້ວນກັບ ແຜນພັດທະນາເສດຖະກິດ-ສັງຄົມ ເພື່ອຈະໄດ້ມີການຈັດຕັ້ງປະຕິບັດ ແລະຜົນກະທົບ ທີ່ຄາດຫວັງໄວ້ໃນຊ່ວງ ແລະ ພາຍຫຼັງໂຄງການສຳເລັດ ຕ້ອງຈະແຈ້ງຊັດເຈນ. ເພື່ອວັດແທກ ບັນດາປະເດັນເຫຼົ່ານີ້,

ບັນດາຫົວໜ່ວຍແຜນງານ PIP ແລະ ເຄື່ອງມືຂອງມັນສາມາດສະໜອງຂໍ້ມູນລະອຽດ ຂອງປະເດັນຕ່າງໆຂອງການປະເມີນເຫຼົ່ານີ້.

**ສໍາລັບໂຄງການສືບຕໍ່:** ເຄື່ອງມືຕ່າງໆ ຂອງຫົວໜ່ວຍແຜນງານ PIP ຊ່ວຍໃນການປະເມີນ ບັນດາໂຄງການສືບຕໍ່ໃນການສັງເກດໄດ້ບັນດາຜົນກະທົບທີ່ຄາດໝາຍໄວ້. ໃນຕາຕະລາງໂຄ້ໂນໂລຊີ, ຄວາມຄືບໜ້າປະຈໍາປີຂອງການປະກອບສ່ວນຈາກຜົນກະທົບຂອງແຕ່ລະໂຄງການ ໃຫ້ແກ່ເປົ້າໝາຍລະດັບກາງແມ່ນໄດ້ຖືກຂຽນອອກ. ການປະເມີນຄວາມສອດຄ່ອງ ແລະ ປະສິດທິຜົນສາມາດເຮັດໄດ້ ໂດຍການສົມທຽບຄວາມຄືບໜ້າທີ່ຄາດໝາຍໄວ້ ກັບສະຖານະການຕົວຈິງ.

**ສໍາລັບບັນດາໂຄງການທີ່ສໍາເລັດແລ້ວ:** ການປະເມີນຜົນເວລາໂຄງການສໍາເລັດ ແມ່ນປະຕິບັດສໍາລັບໂຄງການທີ່ສໍາເລັດແລ້ວ. ເຄື່ອງມືຫົວໜ່ວຍແຜນງານ PIP ສະໜັບສະໜູນ ການປະເມີນຜົນ ໂດຍການນໍາໃຊ້ ຕາຕະລາງໂຄ້ໂນໂລຊີ, ໃນເວລາກວດກາ ຜົນກະທົບຂອງໂຄງການທີ່ສໍາເລັດດັ່ງກ່າວ. ສໍາລັບບັນດາໂຄງການທີ່ໄດ້ມີການສົ່ງມອບ ເພື່ອການນໍາໃຊ້, ບັນດາຕົວຊີ້ວັດ ຂອງຜົນກະທົບໂຄງການສາມາດປຽບທຽບກັບແຜນການການນໍາໃຊ້ ແລະ ການບູລະນະຮັກສາຂອງໂຄງການ, ເພື່ອຢືນຢັນທັງຜົນກະທົບ (ຜົນສະທ້ອນ) ແລະ ຄວາມຍືນຍົງຂອງໂຄງການ.

**ສໍາລັບ ບັນດາໂຄງການສໍາເລັດແລ້ວທີ່ຢູ່ໃນຊ່ວງການນໍາໃຊ້:** ບັນດາເຄື່ອງມື ຫົວໜ່ວຍແຜນງານ PIP ເປັນປະໂຫຍດ ເຊັ່ນກັນໃນເວລາການປະເມີນໂຄງການຖືກນໍາໃຊ້. ບັນດາຕົວຊີ້ວັດ ຂອງຜົນກະທົບຈາກໂຄງການສາມາດປຽບທຽບກັບຜົນກະທົບຕົວຈິງ ຈາກການນໍາໃຊ້ໂຄງການ.

### (2). ການສະທ້ອນ ຕໍ່ການປະເມີນແບບສົມທຽບ

ກອງປະຊຸມປຶກສາຫາລື ການປະເມີນແບບສົມທຽບໂດຍທົ່ວໄປແມ່ນຈັດຕັ້ງປະຕິບັດ ລະຫວ່າງບັນດາໂຄງການລົງທຶນລັດທີ່ຢູ່ໃນຂະແໜງການ ຫຼື ເຂດແຄວ້ນດຽວກັນ. ໃນກໍລະນີສ່ວນໃຫຍ່, ບັນດາໂຄງການລົງທຶນລັດຖືກຈັດແບ່ງໃນ POT ອັນດຽວກັນສາມາດປຽບທຽບກັນໄດ້. ໃນກໍລະນີດັ່ງກ່າວ, ບັນດາເປົ້າໝາຍສາມາດຖືວ່າ ເປັນມາດຕະຖານການປະເມີນຜົນ. ໂດຍການປຽບທຽບຂະໜາດ ຫຼື ປະລິມານຂອງການປະກອບສ່ວນ ຂອງແຕ່ລະໂຄງການ ໂດຍຜ່ານບັນດາເປົ້າໝາຍລະດັບກາງນີ້ ສາມາດເປັນທິດທາງໃນການໃຫ້ຄະແນນແຕ່ລະໂຄງການໄດ້.

***ຕາຕະລາງໂຄ້ໂນໂລຊີ*** ແມ່ນເປັນບ່ອນອ້າງອີງທີ່ດີເຊັ່ນກັນ ໃນເວລາປະເມີນແບບສົມທຽບ. ຖ້າເຂົ້າໃຈໄດ້ສະຖາ ນະພາບຢ່າງເປັນລໍາດັບຂອງບັນດາເປົ້າໝາຍ ພາຍໃນແຜນໄລຍະກາງ, ທິດທາງທັງ ໝົດຂອງການປະເມີນ ແບບສົມທຽບອາດຈະແຈ້ງຊັດເຈນຂຶ້ນ. ສໍາປະສິດການຈັດອັນດັບຂອງ ມາດຕະຖານການປະເມີນອາດຈະໄດ້ຮັບການພິຈາລະນາ ໂດຍອີງໃສ່ສະຖານະພາບ ຕາມລໍາດັບຂອງແຜນ 5 ປີ.
***ບັນດາແຜນທີ່ໂຄງການລົງທຶນລັດ*** ຖືກໃຊ້ໃຫ້ເປັນປະໂຫຍດ ໂດຍສະເພາະ ໃນເວລາປຽບທຽບບັນດາ

ໂຄງການ ພາຍໃນເຂດ ແຄວ້ນດຽວກັນ. ສາມາດລິເລີ່ມໂຄງການຕ່າງໆໄດ້ ໃນພື້ນທີ່ ທີ່ບໍ່ໄດ້ຮັບການພັດທະນາ ແລະ ມີຄວາມຈຳເປັນ ທີ່ຈະຕ້ອງມີການພັດທະນາ, ເມື່ອປຽບທຽບໃສ່ ບັນດາ ເຂດແຄວ້ນ ແລະ ຂະແໜງການອື່ນໆ.

## 4. ການປະເມີນຜົນ ບັນດາຫົວໜ່ວຍແຜນງານ PIP

ການປະເມີນຜົນ ບັນດາຫົວໜ່ວຍ ມີ 2 ຈຸດປະສົງ. ຈຸດປະສົງທຳອິດ ແມ່ນເພື່ອສະໜັບສະໜູນ ການປະເມີນຜົນ ແຜນພັດທະນາເສດຖະກິດ-ສັງຄົມປັດຈຸບັນ, ແລະ ຈຸດປະສົງທີ່ສອງ ແມ່ນການຖ່າຍ ໂອນຜົນກະທົບຕ່າງໆ ຂອງບັນດາໂຄງການລົງທຶນລັດ ໃຫ້ແຜນພັດທະນາເສດຖະກິດ-ສັງຄົມໃໝ່ ແລະ ບັນດາຫົວໜ່ວຍແຜນງານ PIP ຂອງມັນ.

ຕອນໄກ້ໄລຍະການສຳເລັດຂອງ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ, ແຜນພັດທະນາ ເສດຖະກິດ-ສັງຄົມ ມີຄວາມຈຳເປັນຕ້ອງໄດ້ຮັບການປະເມີນ ເພື່ອໃຫ້ເຂົ້າໃຈໄດ້ ເຖິງຄວາມຄືບໜ້າຕາມ ທີ່ຄາດໝາຍໄວ້ໃນປີ 2020, ແລະ ນຳເອົາຜົນຂອງການປະເມີນຜົນ ເພື່ອສ້າງແຜນພັດທະນາເສດຖະກິດ-ສັງຄົມທີ່ຈະມາເຖິງສຳລັບ 5 ປີຕໍ່ໜ້າ. ຍ້ອນວ່າບັນດາຫົວໜ່ວຍແຜນງານ PIP ແມ່ນມີການພົວພັນຢ່າງໄກ້ຊິດກັບແຜນພັດທະນາ ເສດຖະກິດ-ສັງຄົມ, ແນະນຳວ່າ ທຳອິດ ໃຫ້ເລີ່ມການປະເມີນສຳລັບບັນດາຫົວໜ່ວຍແຜນງານ PIP ກ່ອນ ເພື່ອມັນຈະໄດ້ກາຍ ເປັນບ່ອນອ້າງອີງທີ່ດີ ໃນເວລາປະເມີນຜົນ ແຜນພັດທະນາເສດຖະກິດ-ສັງຄົມ.

ແຕ່ລະບັນດາໂຄງການລົງທຶນລັດແລະ ຜົນກະທົບຕ່າງໆ ຂອງມັນທີ່ກຳລັງຄືບໜ້າ ອາດຈະຂ້າມຜ່ານແຜນພັດທະນາເສດຖະກິດ-ສັງຄົມປັດຈຸບັນ ແລະ ຊ່ວງເວລາຂອງ ແຜນພັດທະນາ ເສດຖະກິດ-ສັງຄົມ ສະບັບໃໝ່. ບັນດາໂຄງການເຫຼົ່ານີ້ ຈະໄດ້ຖືກກຳນົດໃນຂະບວນການປະເມີນຜົນ ບັນດາຫົວໜ່ວຍແຜນງານ PIP, ດັ່ງນັ້ນ ບັນດາຜົນກະທົບຂອງມັນ ຈະສະທ້ອນໃຫ້ເຫັນ ໃນແຜນພັດທະນາເສດຖະກິດ-ສັງຄົມ ສະບັບໃໝ່.

ຕ້ອງມີການປະເມີນຜົນ ກ່ອນຈະມີການສ້າງ ແຜນພັດທະນາເສດຖະກິດ-ສັງຄົມ ທີ່ຈະມາເຖິງ. ດັ່ງນັ້ນ, ມັນຕ້ອງປະເມີນຜົນໄວທີ່ສຸດ ໃນປີສຸດທ້າຍທີ່ສຳເລັດການຕິດຕາມກວດກາ ສຳລັບບັນດາຫົວໜ່ວຍແຜນງານ PIP.

ພາກຍ່ອຍ ຕໍ່ໄປນີ້ ອະທິບາຍ ຂັ້ນຕອນ ຂອງການປະເມີນຜົນ ບັນດາຫົວໜ່ວຍ ແຜນງານ PIP.

### 4.1. ຄວາມສຳເລັດ ແລະ ຄວາມຄືບໜ້າ ຂອງບັນດາເປົ້າໝາຍຫົວໜ່ວຍ ແຜນງານ PIP

ກ່ອນເລີ່ມການປະເມີນຜົນ, ມັນມີຄວາມສຳຄັນ ທີ່ຕ້ອງມີການວັດແທກຄວາມສຳເລັດ ຂອງຫົວໜ່ວຍແຜນງານ PIP ປີກາຍ. ມັນວັດແທກໂດຍການຕິດຕາມກວດກາ ບັນດາຫົວໜ່ວຍແຜນງານ PIP ເຊັ່ນກັນກັບ

ທີ່ໄດ້ປະຕິບັດປະຈຳປີ. ຍ້ອນມັນເປັນຂອງປີກາຍ, ຜົນໄດ້ຮັບຕ່າງໆ ແມ່ນໄດ້ຖືກປຽບທຽບ ກັບບັນດາແຜນງານເບື້ອງຕົ້ນ. ສຳລັບເປົ້າໝາຍລະດັບກາງ ທີ່ບໍ່ໄດ້ບັນລຸຜົນຕາມທີ່ເບື້ອງຕົ້ນໄດ້ຄາດໝາຍໄວ້ນັ້ນ, ມັນຕ້ອງໄດ້ມີການລະບຸຄັກແນ່ວ່າ ຕ້ອງການວິເຄາະເພີ່ມເຕີມ ໃນຊ່ວງວາລະຂອງການການປະເມີນຜົນ.

ມັນມີຄວາມສຳຄັນເຊັ່ນດຽວກັນ ໃນການສັງເກດຄວາມຄືບໜ້າ ຂອງຄວາມສຳເລັດຂອງເປົ້າໝາຍລະດັບກາງທີ່ຜ່ານມາ, ເພື່ອຮູ້ວ່າ ບັນດາເປົ້າໝາຍໄດ້ບັນລຸຜົນສຳເລັດ ຫຼືບໍ່. ພວກມັນຕ້ອງໄດ້ມີການປະເມີນຜົນເພີ່ມເຕີມໃນຊ່ວງວາລະຂອງການປະເມີນຜົນ.

## 4.2 ການປະເມີນຜົນ ໂດຍການນຳໃຊ້ 5 ມາດຕະຖານ ການປະເມີນຜົນ

ບັນດາຫົວໜ່ວຍແຜນງານ PIP ຈະໄດ້ຮັບການປະເມີນຜົນ ໂດຍການນຳໃຊ້ 5 ມາດຕະຖານການປະເມີນຜົນ. ເຖິງແມ່ນວ່າ ໂດຍພື້ນຖານແລ້ວ ມັນໄດ້ໃຊ້ມາດຕະຖານແບບດຽວກັນ ໃນການຄຸ້ມຄອງໂຄງການລົງທຶນລັດ, ແຕ່ຍ້ອນວ່າ ຈຸດປະສົງທີ່ແຕກຕ່າງກັນ ໃນລະດັບໂຄງການ ແລະ ແຜນງານ, ເຮັດໃຫ້ຄຳຖາມຕ່າງໆ ສຳລັບການປະເມີນຜົນສະເພາະ ແຕກຕ່າງກັນ. ນອກຈາກນີ້ແລ້ວ, ການໃຫ້ຄະແນນ ແລະ ການຈັດອັນດັບ ແມ່ນແຕກຕ່າງກັບ ວິທີການປະເມີນໂຄງການ. ທີມງານປະເມີນຜົນຈະໃຫ້ຄຳເຫັນແນະນຳ ທີ່ຄົບຖ້ວນ ຕໍ່ຫົວໜ່ວຍແຜນງານ PIP ໂດຍອີງໃສ່ສະຖານະການ. ຂ້າງລຸ່ມນີ້ ແມ່ນຄຳຖາມສະເພາະຂອງການປະເມີນຜົນ ໃນແຕ່ລະມາດຕະຖານ, ເຊິ່ງເຄື່ອງມືແຜນງານ ອາດຈະຖືກນຳໃຊ້ໃຫ້ເປັນປະໂຫຍດເພື່ອຊອກຫາຄຳແນະນຳໃຫ້ແຕ່ລະຄຳຖາມ.

### (1). ຄວາມສອດຄ່ອງ

ຄວາມສອດຄ່ອງວັດແທກວ່າ ຫົວໜ່ວຍແຜນງານ ມັນຍັງຄົງມີຄວາມສອດຄ່ອງ ໃນຈຸດເວລາການປະເມີນຜົນ. ສ່ວນໜ້ອຍທີ່ສຸດ, ເຖິງແມ່ນວ່າ ຫົວໜ່ວຍແຜນງານ PIP ແມ່ນມີຄວາມສອດຄ່ອງຢ່າງເຕັມສ່ວນ ໃນຊ່ວງເວ ລາວາງແຜນ, ສະຖານະພາບອາດຈະປ່ຽນແປງຍ້ອນວ່າ ການປ່ຽນແປງຂອງສິ່ງອ້ອມຂ້າງ (ຕົວຢ່າງເຊັ່ນ ສະພາບແວດລ້ອມ, ນະໂຍບາຍ, ການພົວພັນສາກົນ, ເສດຖະກິດ, ສາເຫດ ທາງດ້ານທຳມະຊາດ ແລະ ອື່ນໆ) ດັ່ງນັ້ນ, ມັນມີຄວາມຈຳເປັນຕ້ອງຢືນຢັນສະຖານະການໃນປັດຈຸບັນ. ຫົວໜ່ວຍແຜນງານ PIP ໃນການປະເມີນຜົນ ໄດ້ຖືກສຶກສາຄົ້ນຄວ້າ ທັງທັດສະນະຈາກຜົນກະທົບ (ແຜນພັດທະນາເສດຖະກິດ-ສັງຄົມ) ແລະ ສາເຫດ (ບັນດາໂຄງການ PIP). ຂ້າງລຸ່ມນີ້ ແມ່ນຈຸດຕ່າງໆ ສະເພາະຂອງການສຶກສາຄົ້ນຄວ້າ.

- ໂຄງສ້າງ ຢ່າງມີມີໂລຊິກ ລະຫວ່າງແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ຫົວໜ່ວຍແຜນງານ PIP ແມ່ນສອດຄ່ອງໃນເວລາ ການປະເມີນຜົນຫຼືບໍ່ (ເຄືອຈຸດປະສົງແຜນງານ).
- ໂຄງສ້າງ ຢ່າງມີໂລຊິກ ລະຫວ່າງ ຫົວໜ່ວຍແຜນງານ PIP ແລະ ບັນດາໂຄງການລົງທຶນລັດ

| |
|---|
| ແມ່ນສອດຄ່ອງ ໃນເວລາ ການປະເມີນຜົນຫຼືບໍ່? (ເຄື່ອງຈຸດປະສົງແຜນງານ)<br>➢ ພື້ນທີ່ຄອບຄຸມ ຂອງທົ່ວໜ່ວຍແຜນງານ PIP ແມ່ນສອດຄ່ອງຫຼືບໍ່? (PIP Map) |

**(2). ປະສິດທິຜົນ**

ປະສິດທິຜົນ ຂອງທົ່ວໜ່ວຍແຜນງານ ແມ່ນ ແຜນງານ PIP ບັນລຸ ເປົ້າໝາຍທີ່ຄາດໄວ້ຫຼືບໍ່. ເຊັ່ນດຽວກັນ ເພື່ອຮັບປະກັນວ່າ ບັນດາໂຄງການລົງທຶນລັດທີ່ມີ ທີ່ຕັ້ງຢ່າງມີໂລຊິກນັ້ນ ໄດ້ປະກອບສ່ວນ ຕໍ່ການບັນລຸຜົນສຳເລັດຂອງມັນ ຫຼືບໍ່?

| |
|---|
| ➢ ທົ່ວໜ່ວຍແຜນງານ PIP ແມ່ນມີປະສິດທິຜົນ ຫຼືບໍ່, ທົ່ວໜ່ວຍແຜນງານ PIP ບັນລຸເປົ້າໝາຍທີ່ຄາດໝາຍ ໄວ້ຂອງມັນຫຼືບໍ່? (ເຄື່ອຈຸດປະສົງແຜນງານ)<br>➢ ບັນດາເປົ້າໝາຍລະດັບກາງ ໄດ້ຮັບຜົນກະທົບໂດຍກົງ ຈາກຄວາມສຳເລັດຂອງທົ່ວໜ່ວຍແຜນງານ PIP, ຫຼື ສົມມຸດຕິຖານໄດ້ວ່າ ໄດ້ຮັບຜົນກະທົບທາງບວກ/ທາງລົບ (ເຄື່ອຈຸດປະສົງແຜນງານ/ຕາຕະລາງ ໂລູໂນໂລຊີ) |

**(3). ປະສິດທິພາບ**

ປະສິດທິພາບ ຂອງທົ່ວໜ່ວຍແຜນງານ PIP ແມ່ນໄດ້ຮັບການວັດແທກ ໂດຍອີງໃສ່ ການປະສົມປະສານກັນຂອງຜົນກະທົບຕ່າງໆ ພາຍໃນບັນດາໂຄງການ PIP. ມັນວັດແທກວ່າ ການດຳເນີນການ, ການປະສົມປະສານ, ການກະຈາຍທາງດ້ານການເງິນ, ການຈັດວາງຢ່າງເປັນລຳດັບ ແລະ ການກະຈາຍທາງດ້ານພູມິສາດ ຂອງບັນດາໂຄງການລົງທຶນລັດ ພາຍໃນທົ່ວໜ່ວຍແຜນງານ PIP ໄດ້ຮັບການພິຈະລະນາຢ່າງມີປະສິດທິ ພາບຫຼືບໍ່?

| |
|---|
| ➢ ການປະສົມປະສານ ລະຫວ່າງບັນດາໂຄງການລົງທຶນລັດ (ໂຄງການໃໝ່, ສືບຕໍ່, ນຳໃຊ້, ໂຄງການທຶນສົມທົບ ກັບການຊ່ວຍເຫຼືອທາງການເພື່ອການພັດທະນາ) ແມ່ນມີປະສິດທິພາບພຽງພໍຫຼືບໍ່? (ເຄື່ອຈຸດປະສົງແຜນງານ)<br>➢ ການດຳເນີນງານ ຂອງແຕ່ລະໂຄງການ (ບັນດາໂຄງການ) ໄດ້ຮັບຜົນກະທົບ ຢ່າງມີປະສິດທິພາບຈາກ ທົ່ວໜ່ວຍແຜນງານ PIP ຫຼືບໍ່? (ຕາຕະລາງໂລູໂນໂລຊີ)<br>➢ ການກະຈາຍ ທາງດ້ານການເງິນ ລະຫວ່າງບັນດາໂຄງການໂຄງການລົງທຶນລັດ ໄດ້ຮັບຜົນກະທົບຢ່າງມີປະສິດທິພາບຈາກ ທົ່ວໜ່ວຍແຜນງານ PIP ຫຼືບໍ່? (ເຄື່ອຈຸດປະສົງແຜນງານ/ຕາຕະລາງໂລູໂນໂລຊີ)<br>➢ ການຈັດລຽງ ຢ່າງເປັນລຳດັບ ຂອງບັນດາໂຄງການລົງທຶນລັດ ແມ່ນມີປະສິດທິພາບ ຫຼືບໍ່? (ຕາຕະລາງໂລູໂນໂລຊີ) |

- ການກະຈາຍ ທາງດ້ານພູມິສາດ ຂອງບັນດາໂຄງການລົງທຶນລັດ ແມ່ນມີປະສິດທິພາບພຽງພໍຫຼືບໍ່? (PIP Map)

### (4). ຜົນກະທົບ (ຜົນສະທ້ອນ)

ການວັດແທກຜົນກະທົບ ມີທັງ ໃນທັດສະນະດ້ານບວກ ແລະ ດ້ານລົບ. ເຊັ່ນດຽວກັນ ມັນວັດແທກວ່າ ຫົວໜ່ວຍ ແຜນງານ PIP ມີຜົນກະທົບໂດຍກົງຕໍ່ກັບ ແຜນພັດທະນາ ເສດຖະກິດ-ສັງຄົມຫຼືບໍ່, ແລະ ມີຜົນກະທົບທາງອ້ອມ ຕໍ່ກັບບັນດາຫົວໜ່ວຍແຜນງານອື່ນໆ ຫຼື ບັນດາຫົວຂໍ້ອື່ນໆ ຂອງແຜນພັດທະນາ ເສດຖະກິດ-ສັງຄົມຫຼືບໍ່?

- (ຜົນກະທົບ ທາງກົງດ້ານບວກ) ຫົວໜ່ວຍແຜນງານ PIP ກະທົບດ້ານບວກ ຕໍ່ກັບ ແຜນພັດທະນາ ເສດຖະກິດ-ສັງຄົມ ໃນຫົວຂໍ້ທີ່ກ່ຽວຂ້ອງ ຫຼືບໍ່? (ເຄື່ອງຈຸດປະສົງແຜນງານ/ຕາຕະລາງໂຄ້ໂນໂລຊີ)
- (ຜົນກະທົບ ທາງກົງ ດ້ານບວກ) ຫົວໜ່ວຍ ແຜນງານ PIP ກະທົບດ້ານບວກ ຕໍ່ກັບບັນດາແຜນງານ PIP ອື່ນໆ ຫຼືບໍ່? (ເຄື່ອງຈຸດປະສົງແຜນງານ)
- (ຜົນກະທົບ ທາງກົງດ້ານລົບ) ຫົວໜ່ວຍແຜນງານ PIP ກະທົບດ້ານລົບຕໍ່ກັບ ແຜນພັດທະນາ ເສດຖະກິດ-ສັງຄົມ ໃນຫົວຂໍ້ທີ່ກ່ຽວຂ້ອງ ຫຼືບໍ່? (ເຄື່ອງຈຸດປະສົງແຜນງານ/ຕາຕະລາງໂຄ້ໂນໂລຊີ) (ເຄື່ອງຈຸດປະສົງແຜນງານ/ຕາຕະລາງໂຄ້ໂນໂລຊີ)
- (ຜົນກະທົບທາງກົງດ້ານລົບ) ຫົວໜ່ວຍ ແຜນງານ PIP ກະທົບດ້ານລົບ ຕໍ່ກັບ ບັນດາແຜນງານ PIP ອື່ນໆ ຫຼືບໍ່? (ເຄື່ອງຈຸດປະສົງແຜນງານ)

### (5). ຄວາມຍືນຍົງ

ເວົ້າໂດຍສະເພາະແລ້ວ ຄວາມຍືນຍົງ ຈະບໍ່ແມ່ນມາດຕະຖານການປະເມີນປະຜົນໂດຍກົງ, ຍ້ອນວ່າ ຫົວໜ່ວຍ ແຜນງານ PIP ໄດ້ສຳເລັດລົງ ໃນເວລາ ແຜນພັດທະນາ ເສດຖະກິດ-ສັງຄົມ ປັດຈຸບັນສຳເລັດ. ຢ່າງໃດກໍ່ຕາມ, ໃນຄວາມເປັນຈິງ, ຫຼາຍໆ ອົງປະກອບ ຂອງຫົວໜ່ວຍ ແຜນງານ PIP ປັດຈຸບັນຈະໄດ້ ຖ່າຍໂອນຕໍ່ ເພື່ອດຳເນີນ ໃຫ້ສຳເລັດ ເພື່ອບັນລຸເປົ້າໝາຍໄລຍະຍາວໃນປີ 2020. ດັ່ງນັ້ນ, ຈະມີຄຳຖາມ ຕ່າງໆ ວ່າການສະໜອງຜົນກະທົບ ແມ່ນມີຄວາມຈຳເປັນ ຫຼືບໍ່? ໃນທັດສະນະຂອງຂະແໜງການ ແລະ ເຂດແຄວ້ນ.

- ຫົວໜ່ວຍ ແຜນງານ PIP ມີທ່າແຮງທີ່ຈະສ້າງຜົນກະທົບ ຕໍ່ກັບເປົ້າໝາຍປີ 2020 ໃນ;
  - ມຸມມອງ ຍຸດທະສາດ ຂອງຂະແໜງການ (ຕາຕະລາງໂຄ້ໂນໂລຊີ)
  - ມຸມມອງ ຍຸດທະສາດ ຂອງເຂດແຄວ້ນ (ແຜນທີ່ ໂຄງການລົງທຶນລັດ)

## 4.3. ຂໍ້ສະຫຼຸບ ແລະ ຄຳເຫັນແນະນຳ

ຫຼັງຈາກ ສຶກສາຄົ້ນຄວ້າ ຄຳຖາມຕ່າງໆ ຂ້າງເທິງ, ຜົນຂອງການສຶກສາຄົ້ນຄວ້າດັ່ງກ່າວ ໄດ້ຮັບການລວມ ລວມ ແລະ ສະຫຼຸບໂດຍລວມ. ນອກຈາກນີ້, ຈະໄດ້ມີ ຄຳເຫັນແນະນຳ ໂດຍການພິຈະລະນາປະເດັນຕ່າງໆ ດັ່ງຕໍ່ໄປນີ້;

- ເປັນບ່ອນອ້າງອີງ ໃນເວລາເລີ່ມການປະເມີນຜົນ ແຜນພັດທະນາ ເສດຖະກິດ-ສັງຄົມໃນປັດຈຸບັນ.
- ເປັນທິດທາງ ໃນເວລາ ວາງເປົ້າໝາຍໃໝ່ ໃນແຜນພັດທະນາ ເສດຖະກິດ-ສັງຄົມໃໝ່.
- ເປັນບ່ອນອ້າງອີງ ໃນເວລາ ວາງເປົ້າໝາຍຕົວຈິງໃນ ແຜນພັດທະນາ ເສດຖະກິດ-ສັງຄົມໃໝ່.
- ເປັນບ່ອນອ້າງອີງຂອງການປະກອບສ່ວນ ແລະ ຄວາມຄືບໜ້າທາງດ້ານພູມິສາດຂອງ ແຜນພັດທະນາເສດຖະກິດ-ສັງຄົມໃໝ່
- ຖ່າຍໂອນ ບັນດາຜົນກະທົບສືບຕໍ່ ຂອງທິວໜ່ວຍ ແຜນງານ PIP ໃຫ້ ແຜນພັດທະນາ ເສດຖະກິດ - ສັງຄົມ ໃໝ່ ແລະ ທິວໜ່ວຍແຜນງານ.

ຈະແຈ້ງທີ່ສຸດ, ບັນດາທິວໜ່ວຍ ແຜນງານ PIP ທີ່ບໍ່ບັນລຸຄາດໝາຍຂອງມັນ ເປັນປະເດັນທີ່ສຳຄັນ, ດັ່ງນັ້ນ ຕ້ອງມີການວິເຄາະຢ່າງຮອບຄອບ ແລະຕ້ອງຂຽນລົງໃນບົດສະຫຼຸບ. ບັນດາມາດຕະການແກ້ໄຂ ຕ້ອງມີການສຶກ ສາຄົ້ນຄວ້າ ແລະ ຂຽນເປັນຄຳເຫັນແນະນຳ.

## 4.4. ສິ່ງທີ່ສະທ້ອນໃຫ້ເຫັນ ຈາກຜົນຂອງການປະເມີນຜົນ

ດັ່ງທີ່ໄດ້ລະບຸໄວ້ທຳອິດຂອງພາກນີ້, ຂໍ້ສະຫຼຸບ ແລະ ຄຳເຫັນແນະນຳ ຂອງການປະເມີນຜົນ ທິວໜ່ວຍ ແຜນງານ PIP ສາມາດສະທ້ອນໃຫ້ເຫັນ ໃນ 2 ປະເດັນ; ທຳອິດ ສຳລັບການປະເມີນຜົນ ແຜນພັດທະນາ ເສດຖະກິດ-ສັງ ຄົມ ແລະ ອັນອື່ນ ຕໍ່ກັບ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ທິວໜ່ວຍແຜນງານ PIP ໃໝ່. ຕໍ່ໄປນີ້ ແມ່ນແນວທາງຕ່າງໆ ຂອງສິ່ງສະທ້ອນໃຫ້ເຫັນ ຈາກຜົນຂອງການປະເມີນ ໃນແຕ່ລະປະ ເດັນ.

### (1). ຕໍ່ກັບ ການປະເມີນຜົນ ຂອງ ແຜນພັດທະນາເສດຖະກິດ-ສັງຄົມ

ບັນດາທິວໜ່ວຍແຜນງານ PIP ໄດ້ລວບລວມຢ່າງມີໂລຊິກ ຈາກແຜນພັດທະນາເສດຖະກິດ-ສັງຄົມ. ຢ່າງໃດກໍ່ຕາມ, ຍັງມີປະເດັນອື່ນໆໃນການປະກອບສ່ວນ ເຊັ່ນ ການລົງທຶນພາກເອກະຊົນ ຫຼື ການບັນລຸຜົນ ສຳເລັດຂອງສັງຄົມ, ທີ່ລວມເຂົ້າກັບບັນດາທິວໜ່ວຍ ແຜນງານ PIP, ຈາກຄວາມສຳເລັດຂອງ ແຜນພັດ ທະນາ ເສດຖະກິດ-ສັງຄົມ ໂດຍລວມ.

ດັ່ງນັ້ນ, ໂດຍການປະເມີນຜົນ ຂອງບັນດາທິວໜ່ວຍ ແຜນງານ PIP ທັງໝົດ, ມັນເຮັດໃຫ້ສາມາດເຂົ້າ ໃຈການປະກອບສ່ວນ ຂອງການລົງທຶນລັດ ຕໍ່ກັບແຜນພັດທະນາເສດຖະກິດ-ສັງຄົມ ກໍ່ຄື ການປະກອບ

ສ່ວນທາງອ້ອມ; ສະໜັບສະໜູນ ການລົງທຶນພາກເອກະຊົນ ແລະ ສັງຄົມ. ໂດຍຜ່ານ ການວິເຄາະເພີ່ມເຕີມ, ນໍ້າໜັກທາງດ້ານຂະແໜງການ ແລະ ເຂດແຄວ້ນ ສໍາລັບ ແຜນພັດທະນາເສດຖະກິດ-ສັງຄົມ ປັດຈຸບັນ ສາມາດປະເມີນຜົນໄດ້ ດັ່ງນັ້ນ ການປະກອບສ່ວນຕໍ່ກັບ ແຜນພັດທະນາເສດຖະກິດ-ສັງຄົມ ແມ່ນມີເຫດຜົນ.

ຈາກການເຂົ້າໃຈ ອິດທິພົນທາງກົງຂອງ ການລົງທຶນລັດໂດຍຂະແໜງການ ແລະ ເຂດແຄວ້ນ ຜ່ານ ແຜນພັດທະນາ ເສດ ຖະກິດ-ສັງຄົມ, ມັນຈະຊ່ວຍ ໃນການສ້າງ ແຜນພັດທະນາ ເສດຖະກິດ-ສັງຄົມ ສະບັບໃໝ່ ຄຽງຄູ່ກັບ ການຄາດ ໝາຍໂດຍກົງຈາກ ການປະກອບສ່ວນ ຈາກການລົງທຶນລັດ.

**(2). ຕໍ່ກັບແຜນພັດທະນາ ເສດຖະກິດ-ສັງຄົມ ໂດຍຜ່ານບັນດາຜົນກະທົບໂຄງການ**

ເຖິງແມ່ນວ່າ ເປົ້າໝາຍ ອັນໃໝ່ ໃນແຜນພັດທະນາ ເສດຖະກິດ-ສັງຄົມ ແມ່ນໄດ້ວາງໄວ້ທຸກໆ 5 ປີ, ບາງໂຄງການ ອາດຈະແກ່ຍາວຈົນຮອດ 2 ຊ່ວງຂອງ ແຜນພັດທະນາ ເສດຖະກິດ-ສັງຄົມ ໂດຍຜ່ານການປະເມີນຜົນ ບັນດາຫົວໜ່ວຍ ແຜນງານ PIP, ບັນດາໂຄງການລົງທຶນລັດ ເຫຼົ່ານີ້ໄດ້ຖືກກໍານົດ ແລະ ຂໍ້ມູນຂອງມັນ ໄດ້ຖືກຖ່າຍໂອນ ໃຫ້ກັບແຜນພັດທະນາເສດຖະກິດ-ສັງຄົມ ຕໍ່ໜ້າ (ແລະ ຫົວໜ່ວຍແຜນງານ PIP ທີ່ກ່ຽວຂ້ອງກັບ ໂຄງການລົງທຶນລັດ). ນີ້ຊ່ວຍການເລີ່ມຕົ້ນ ການຈັດຕັ້ງປະຕິບັດຂອງແຜນພັດທະນາ ເສດຖະກິດ-ສັງຄົມອັນໃໝ່.

ບັນດາຫົວໜ່ວຍ ແຜນງານ PIP ກໍ່ຄືບັນດາໂຄງການ ທີ່ບໍ່ປະສົບຜົນສໍາເລັດເທົ່າທີ່ຄວນ, ຕ້ອງໄດ້ມີການຂຽນ ເປັນລາຍຊື່ອອກມາ ໄປຄຽງຄູ່ກັບ ບັນດາມາດຕະການແກ້ໄຂ. ຕ້ອງມີການພິຈະລະນາ ບັນດາມາດຕະການ ແກ້ໄຂເຫຼົ່ານີ້, ແລະ ເມື່ອຈໍາເປັນ, ຕ້ອງລວມເຂົ້າໃນ ແຜນພັດທະນາ ເສດຖະກິດ-ສັງຄົມ ຕໍ່ໜ້າ ຫຼື ໃນບັນດາຫົວໜ່ວຍແຜນງານ PIP ເພື່ອຕິດຕາມ.

## ເອກະສານຄັດຕິດ

## ຕົວຢ່າງຂອງ ເຄື່ອງມື PIP ໃນບັນດາແຂວງທົດລອງ ໂຄງການພີແຄັບ 2

**ເອກະສານ ຄັດຕິດ 1. ຕາຕະລາງສັງລວມ ຂອງ ການວິເຄາະ ແຜນພັດທະນາ**

(1) ແຂວງ ອຸດົມໄຊ

1) ແຜນ ພັດທະນາ ເສດຖະກິດ ສັງຄົມ ແຂວງ 5 ປີ ຄັ້ງທີ 6 ( 2006 - 2010 )

2) ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ ຄັ້ງທີ 6 ( 2006 - 2010 )

(2) ແຂວງ ຄຳມ່ວນ

1) ແຜນ ພັດທະນາ ເສດຖະກິດ ສັງຄົມ ແຂວງ 5 ປີ ຄັ້ງທີ 6 ( 2006 - 2010 )

2) ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ ຄັ້ງທີ 6 ( 2006 - 2010 )

(3) ແຂວງ ສາລະວັນ

1) ແຜນ ພັດທະນາ ເສດຖະກິດ ສັງຄົມ ແຂວງ 5 ປີ ຄັ້ງທີ 6 ( 2006 - 2010 )

2) ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ ຄັ້ງທີ 6 ( 2006 - 2010 )

**ເອກະສານ ຄັດຕິດ 2. ເຄືອຈຸດປະສົງແຜນງານ**

(1) ແຂວງ ອຸດົມໄຊ

1) ແຜນ ພັດທະນາ ເສດຖະກິດ ສັງຄົມ ແຂວງ 5 ປີ ຄັ້ງທີ 6 ( 2006 - 2010 )

2) ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ ຄັ້ງທີ 6 ( 2006 - 2010 )

(2) ແຂວງ ຄຳມ່ວນ

1) ແຜນ ພັດທະນາ ເສດຖະກິດ ສັງຄົມ ແຂວງ 5 ປີ ຄັ້ງທີ 6 ( 2006 - 2010 )

2) ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ ຄັ້ງທີ 6 ( 2006 - 2010 )

(3) ແຂວງ ສາລະວັນ

1) ແຜນ ພັດທະນາ ເສດຖະກິດ ສັງຄົມ ແຂວງ 5 ປີ ຄັ້ງທີ 6 ( 2006 - 2010 )

2) ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ 2006-2010

**ເອກະສານຄັດຕິດ 3. ຕາຕະລາງ ໂຄໂນໂລຊີ**

(1) ແຂວງ ອຸດົມໄຊ

1) ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ 2006-2010

(2) ແຂວງ ສາລະວັນ

1) ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ ຄັ້ງທີ 6 ( 2006 - 2010 )

**ເອກະສານ ຄັດຕິດ 4. ແຜນທີ່**

(1) ແຂວງ ອຸດົມໄຊ

ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ ຄັ້ງທີ 6 ( 2006 - 2010 )

(2) ແຂວງ ຄຳມ່ວນ

ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ ຄັ້ງທີ 6 ( 2006 - 2010 )

(3) ແຂວງ ສາລະວັນ

ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ ຄັ້ງທີ 6 ( 2006 - 2010 )

**ໝາຍເຫດ:** ທີມງານ ພີແຄັບ ບໍ່ໄດ້ຮັບເອກະສານ ດ້ານທິດສະດີ ແຜນພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 2006-2010 ຂອງແຂວງ ຄຳມ່ວນ. ມີພຽງແຕ່ ລາຍຊື່ຂອງໂຄງການ ທີ່ໄດ້ຮັບເທົ່ານັ້ນ. ດັ່ງນັ້ນ, ປື້ມຄູ່ມືນີ້ ບໍ່ສາມາດກະກຽມ ເຄືອຈຸດປະສົງແຜນງານ ແລະ ຕາຕະລາງ ໂຄໂນໂລຊີ ຂອງແຂວງ ຄຳມ່ວນໄດ້.

## ເອກະສາ⁄ ຕິດຄັດ

## ຕົວຢ່າງຕ່າງໆ ຂອງເຄື່ອງມື PIP ໃນບັນດາແຂວງທົດລອງ ຂອງໂຄງການ ພີແຄັບ 2

**ເອກະສາ⁄ ຄັດຕິດ 1. ຕາຕະລາງສັງລວມ ຂອງ ກາ⁄ ວິເຄາະ ແຜ⁄ ພັດທະ⁄ າ**

**(1) ແຂວງ ອຸດົມໄຊ**

**1) ແຜນ ພັດທະນາ ເສດຖະກິດ ສັງຄົມ ແຂວງ 5 ປີ 2006 - 2010**

| ລ/ດ | ຫົວຂໍ້ | ຈຸດວິເຄາະຕ່າງໆ | ເນື້ອໃນຕ່າງໆ |
|---|---|---|---|
| 1 | **ອົງປະກອບ ຂອງແຜນພັດທະນາ ທີ່ມີຢູ່** | | **1. ຍຸດທະສາດ 20 ປີ ໃ⁄ ປີ 2020:** ແຜນພັດທະນາ ເສດຖະກິດ ສັງຄົມ ປັດຈຸບັນ - 2000 ແລະ ປັດຈຸບັນ-2020 ຂອງແຂວງ ອຸດົມໄຊ (ພະແນກ ແຜນການ ແລະ ການຮ່ວມມື, ວັນທີ່ 5/3/1999)<br>**2. ແຜ⁄ 10 ປີ ໃ⁄ ປີ 2010:** ທາງທີມງາ ບໍ່ມີ ແຜ ພັດທະ າ ເສດຖະກິດສັງຄົມ 10 ປີ ຂອງແຂວງ ອຸດົມໄຊ *<br>**3. ແຜ⁄ 5 ປີ ໃ⁄ ປີ 2010: (ຮ່າງ)** ແຜນພັດທະນາ ເສດຖະກິດ ສັງຄົມ 5 ປີ ຄັ້ງທີ່ 6 2006- 2010Tຂອງແຂວງ ອຸດົມໄຊ ( ພະແນກ ແຜນການ ແລະ ການລົງທຶນ, ວັນທີ່ 12/1/2009)<br>**4. ກາ⁄ ທົບທວ⁄ ກາງສະໄໝ 2.5 ປີ ຂອງແຜ⁄ 5 ປີ:** ບົດສັງລວມ ຂອງການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ ສັງຄົມ 5 ປີ ຄັ້ງທີ່ 6 ຈາກ 2005- 2007 ຂອງແຂວງ ອຸດົມໄຊ (ພະແນກ ແຜນການ ແລະ ການລົງທຶນ ແຂວງ ອຸດົມໄຊ, ເດືອ 8 ປີ 2008)<br>**5. ແຜ⁄ ປະຈຳປີ:** ແຜນພັດທະນາ ພັດທະນາ ເສດຖະກິດ ສັງຄົມ 2008-20009 ແຂວງອຸດົມໄຊ ວັນທີ 29 ເດືອນ 9 ປີ 2008) |
| 2 | **ຍຸດທະສາດ ກາ⁄ ພັດທະ⁄ າໂດຍ⁄ ລວມ ໃ⁄ ແຜ⁄ 20 ປີ** | **ບັ⁄ ດາທິດທາງ ກາ⁄ ພັດທະ⁄ າ ໄລຍະຍາວ** | ເພື່ອເສີມຂະຫຍາຍມະຕິຂອງກອງປະຊຸມພັກຂັ້ນສູນກາງ ຄັ້ງທີ່ 6 ແລະ ຂອງ ຄະນະກຳມະການພັກ ແຂວງຄັ້ງທີ່ 4 ແລະ ຄັ້ງທີ່ 5 ໂດຍການຜັນຂະຫຍາຍ ແຜນການເປັນແຜນງານ ແລະ ໂຄງການຕ່າງໆ ບົນພື້ນຖານ ແຜນງານບູລິມະສິດ ແຫ່ງຊາດ ຄັ້ງທີ 8. |
| | | **ບັນດາ ຕົວຊີ້ວັດ ມະຫາພາກ** | 1. PGDP ຕໍ່ຫົວຄົນ $2000, ແລະ ການເຕີບໂຕ ທາງດ້ານ ເສດຖະກິດ ສະເລັ່ຍຕໍ່ປີ 9-10%<br>2. ລາຍຮັບ ຕໍ່ປີ ຈະແມ່ນ 12- 13% ຂອງ PGDP<br>3. ເງິນເຟີ້ຕ່ຳ ອີງໃສ່ສະມັດຕະພາບຕົວຈິງ<br>4. ການບັນລຸຈຸດປະສົງ ແລະ ເປົ້າໝາຍ ຂອງ ການພັດທະນາ ເສດຖະກິດ ສັງຄົມ ຕ້ອງການ ການລົງທຶນປະຈຳປີ ທຽບເທົ່າກັບ 30-35% ຂອງGDP ທີ່ເຊິ່ງ ການລົງທຶນຂອງລັດ ຕ້ອງບໍ່ໜ້ອຍກວ່າ 14% ຂອງ GDP.<br>5. ມີການຄາດຄະເນວ່າ ການສະໜອງງົບປະມານ ຈາກປີ 2001-2020 ຈະແມ່ນ 900 ຕື້ກີບ ເຊິ່ງໃນນັ້ນ 800 ຕື້ກີບ ແລະ 100 ຕື້ກີບ ຈາກທະນາຄານ, ຈາກການລົງທຶນ ເອກະຊົນພາຍໃນ ແລະ ຕ່າງປະເທດ ແລະ ອື່ນໆ. |
| | | **ເປົ້າໝາຍ ແລະ ໜ້າວຽກ ຂອງແຜ⁄** | **1. ກາ⁄ ພັດທະ⁄ າ ທາງດ້າ⁄ ເສດຖະກິດ**<br>(1).ສ່ວ ແບ່ງພາກ ກະສິກຳ ແລະ ປ່າໄມ້ ກວມເອົາ 42% ແລະ (2) ອຸດສະຫະກຳ 28%, ແລະ (3) ກາ ບໍລິກາ 30%.<br>(1). ພາກ ກະສກຳ ແລະ ປ່າໄມ້ເຕີບໂຕ 7%, (2) ອຸດສາຫະກຳ ເຕີບໂຕ 12-13% ແລະ (3) ການບໍລິການ ເຕີບໂຕ 10-11% ຂອງ PGDP |
| | | | **2. ກາ⁄ ພັດທະ⁄ າ ທາງດ້າ⁄ ສັງຄົມ**<br>(1). ອັດຕາ ການອ່ານອອກຂຽນໄດ້ ຂອງຜູ້ໃຫຍ່ ອາຍຸ 15-40 ປີ ຮອດ 80% ໃນປີ 2000<br>(2). ອັດຕາ ຮຽ ໜັງສື ຂອງເດັກ ້ອຍເກ ເຂົ້າຮຽ ເຂົ້າໂຮງຮຽ ຮອດ 75%<br>(3). ອັດຕາອາຍຸຍື ຮອດ 56 ປີ ສຳລັບ ເພດຊາຍ ແລະ 58 ປີ ສຳລັບ ຜູ້ຍິງ |
| 3 | **ຍຸດທະສາດ ກາ⁄ ພັດທະ⁄ າ ໄລຍະກາງ (10 ປີ) ສຳລັບ ປີ 2010** | **ໄລຍະກາງ (10 ປີ) ທິດທາງ ກາ⁄ ພັດທະນາ, ຕົວຊີ້ວັດ ມະຫາພາກ, ແລະ ເປົ້າໝາຍ ແລະ ໜ້າວຽກ** | **ບໍ່ມີໄວ້ໃຫ້ທີມງາ⁄ *** |
| 4 | **ຍຸດທະສາດ ກາ⁄ ພັດທະ⁄ າ 5 ປີ ສຳລັບ 2010** | **ທິດທາງ ກາ⁄ ພັດທະ⁄ າ 5 ປີ** | ເພື່ອພັດທະນາ ເສດຖະກິດ-ສັງຄົມ ຢ່າງຕໍ່ເນື່ອງ. ຜົນຜະລິດ ທາງດ້ານ ກະສິກຳ ແລະ ປ່າໄມ້, ອຸດສາຫະກຳ, ແລະ ການບໍລິການ ເຕີບໂຕ 2-3 ເທື່ອ ທຽບໃສ່ ໄລຍະປັດຈຸບັນ. ປັບປຸງ ມາດຕະຖານຊີວິດການເປັນຢູ່ ຂອງບັນດາຊົນເຜົ່າ ແລະ ຫຼຸດພົ້ນອອກຈາກ ຄວາມທຸກຈົນພື້ນຖານ. ມີການພັດທະນາ ທາງດ້ານ ການສຶກສາ, ສາທາລະນະສຸກ, ວັດທະນະທຳ, ແຮງງານ ແລະ ສະຫວັດດີການສັງຄົມ. ** |
| | | **ຕົວຊີ້ວັດ ມະຫາພາກ,** | 1. PGDPຈະແມ່ນ 2,016.33 ຕື້ກີບ, PGDP ຕໍ່ຫົວຄົນແມ່ນ $640, ການເຕີບໂຕ ທາງດ້ານ ເສດຖະກິດ ແມ່ນ 16.6%, |
| | | | 2. ລາຍຮັບ ຕໍ່ປີ ຈະແມ່ 3.54% ຂອງ PGDP |
| | | **ເປົ້າໝາຍ ແລະ ໜ້າວຽກ ຂອງແຜ⁄** | **1. ກາ⁄ ພັດທະ⁄ າ ທາງດ້າ⁄ ເສດຖະກິດ**<br>(1). ກະສິກຳ ແລະ ປ່າໄມ້ ເຕີບໂຕ 1.5 ເທື່ອ, (2). ອຸດສາຫະກຳ ເຕີບໂຕ 28.8% ແລະ (3). ການບໍລິການ ເຕີບໂຕ 21% of PGDP ທຽບໃສ່ປີ 2005<br>(1). ສ່ວ ແບ່ງພາກ ກະສິກຳ ແລະ ປ່າໄມ້ ກວມເອົາ 41%, (2).ອຸດສະຫະກຳ 30% and (3).ກາ ບໍລິກາ 25% |
| | | | **2. ກາ⁄ ພັດທະ⁄ າ ທາງດ້າ⁄ ສັງຄົມ**<br>(1). ອັດຕາ ການອ່ານອອກຂຽນໄດ້ ຂອງຜູ້ໃຫຍ່ ອາຍຸ 15-40 ປີ ຮອດ 100%<br>(2). 95% ຂອງເດັກນ້ອຍ ອາຍຸ 6-10 ສາມາດເຂົ້າໂຮງຮຽນ<br>(3). ອັດຕາອາຍຸຍື ປະມາ 66 ປີ<br>(4). ສຳເລັດ ກາ ລົບລ້າງຄວາມທຸກຈົ ໃ ປີ 2010 |
| 5 | **ຫົວຂໍ້ ທີ່ສຳຄັນ ແລະ ຫົວເລື່ອງທີ່ກວມເອົາທຸກປະເດັ⁄ ໃ⁄ ແຜ⁄ 5 ປີ** | **ທຸກໆ ຂະແໜງການ ແລະ ປະເດັນທີ່ກວມເອົາທຸກເລື່ອງ ທີ່ກ່ຽວຂ້ອງກັບ ເປົ້າໝາຍ ຂອງຂະແໜງກາ⁄ ແລະ ໂດຍລວມ ເຊັ່ນ ການຫຼຸດຜ່ອນ ຄວາມທຸກຈົ⁄** | **ບໍ່ໄດ້ກ່າວໄວ້ໃ⁄ ແຜ⁄** |

| | | | |
|---|---|---|---|
| 6 | ກາ ພັດທະ າເຂດແຄວ້ ໃ ແຜ 5 ປີ | **ພື້ນທີ່ທີ່ເປັນເປົ້າໝາຍ, ຫຼັກການ ແລະ ເປົ້າໝາຍ ທາງດ້າ ກາ ພັດທະ າ ໃ ເຂດແຄວ້** | ມີ 3 ພື້ນທີ່ຈຸດສຸມທີ່ເປັນບູລິມະສິດ ສຳລັບການພັດທະນາ ສຳລັບ ການພັດທະນາ ໃນ ຂັ້ນແຂວງ ລວມມີ (1) ນ້ຳບາກ, ເມືອງໄຊ; (2) ນາຫອມ, ເມືອງ ບັງ; ແລະ (3) ນ້ຳຄາ, ເມືອງ ຫຸນ. |
| | | | ມີ 7 ພື້ນທີ່ຈຸດສົມ ໃນຂັ້ນແຂວງ ລວມມີ (1) ນ້ຳຮັງ, ເມືອງ ໄຊ; (2) ຕາດມູນ, ເມືອງຫຼ້າ; (3) ນ້ຳເຊໄຕ້, ເມືອງ ນາໝໍ້, (4) ຫ້ວຍເງິນ, ເມືອງ ງາ; (5) ນ້ຳຄອນ, ເມືອງ ບາງ; (6) ນ້ຳພູນ, ເມືອງ ຫຸນ; ແລະ ນ້ຳຄິງ, ເມືອງ ປາກແບ່ງ. |

* ໄດ້ມີການຢືນຢັນຈາກ ພະແນກ ແຜນການ ແລະ ການລົງທຶນ ແຂວງ ອຸດົມໄຊ, ໃນວັນທີ່ 24 ເດືອນ 2 ປີ 2009.

## 2) ແຜນ ພັດທະນາ ຂະແໜງ ໂຍທາທິການ ແລະ ຂົນສົ່ງ 5 ປີ 2006-2010

| ລ/ດ | ຫົວຂໍ້ | ຈຸດວິເຄາະຕ່າງໆ | ເນື້ອໃນຕ່າງໆ |
|---|---|---|---|
| 1 | ອົງປະກອບ ຂອງແຜນພັດທະນາ ທີ່ມີຢູ່ ຂອງຂະແໜງ ໂຍທາທິການ ແລະ ຂົນສົ່ງ | | **1. ຍຸດທະສາດ 20 ປີ ໃ ປີ 2020:** ແຜນພັດທະນາ ຂະແໜງ ຄົມມະນາຄົມ ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ຈາກປີ 2008-2015- 2020 (ພະແນກ ຄົມມະນາຄົມ ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ມື້ອອກ….)<br>**2. ແຜ 10 ປີ ໃ ປີ 2020:** ທາງທີມງາ ບໍ່ມີ ແຜ ພັດທະ າ 10 ປີ ຮອດປີ **2010 ***<br>**3. ແຜ 5 ປີ ໃ ປີ 2010:** (ຮ່າງ)ການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດສັງຄົມ ຈາກ 2001-2005 ແລະ ແຜນ ສຳລັບ 2006- 2010 ( ພະແນກ ຄົມມະນາຄົມ ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ, ມື້ອອກ: 5, ເດືອນ 4, 2005)<br>**4. ກາ ທົບທວ ກາງສະໄໝ 2.5 ປີ ຂອງແຜ 5 ປີ :** ບໍ່ທັນໄດ້ລວບລວມເທື່ອ. ມີແຕ່ການທົບທວນຈາກໜ່ວຍງານ. ໄດ້ຮັບການຢືນຢັນຈາກພະແນກ ຄົມມະນາຄົມ ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ວັນທີ່ 24 ເດືອນ 2, 2009.<br>**5. ແຜ ປະຈຳປີ:** ບົດສັງລວມ ການຈັດຕັ້ງປະຕິບັດ ແຜນພັດທະນາ ພັດທະນາ ເສດຖະກິດ ສັງຄົມ ສຳລັບ ປີ 20082- 009( ພະແນກ ຄົມມະນາຄົມ ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ເດືອນ 9, 2009)<br>**6. ແຜ ບູລິມະສິດ 5 ປີ ໃ ປີ 2010:** (ຮ່າງ) ແຜ ບູລິມະສິດ ຂອງ ກິດຈະກຳ ຂະແໜງ ຄົມມະ າຄົມ ແລະ ໂຍທາ ໃ ຊ່ວງ (2006- 2010) ຂອງແຂວງ ອຸດົມໄຊ (ສະບັບປັບປຸງ, ເດືອນ 2, 2008) (ພະແນກ ຄົມມະນາຄົມ ແລະ ໂຍທາ, ເດືອ 1 ປີ 2008. ) |
| 2 | ຍຸດທະສາດ ກາ ພັດທະ າໂດຍລວມ ໃ ແຜ 20 ປີ ຂອງຂະແໜງ ຄົມມະ າຄົມ ແລະ ໂຍທາ ໃ ປີ 2020 | **ບັ ດາທິດທາງ ກາ ພັດທະ າ ໄລຍະຍາວ** | 1. ເພື່ອເສີມຂະຫຍາຍມະຕິຂອງກອງປະຊຸມພັກຂັ້ນສູນກາງ ຄັ້ງທີ່ 6 ແລະ ທິດທາງຂອງແຂວງ ແລະ ກະຊວງ ຄົມມະນາຄົມ ແລະ ໂຍທາ ໂດຍສືບຕໍ່ພັດທະນາ ການຄົມມະນາຄົມ ເພື່ອເຂົ້າເຖິງ ພື້ນທີ່ຈຸດສຸມ ຂອງແຂວງ ແລະ ເມືອງຕ່າງໆ<br>2. ອຳນວຍຄວາມສະດວກ ໃຫ້ກັບ ບັນດາຂະແໜງການອື່ນໆ ໂດຍສະເພາະ ການຜະລິດ ອາຫານ, ສາທາລະນະສຸກ, ການສຶກສາ ແລະ ຂະແໜງການອື່ນໆ ເພື່ອຫຼຸດຜ່ອນ ຄວາມທຸກຈົນ. |
| | | **ບັນດາ ຕົວຊີ້ວັດ ມະຫາພາກໄລຍະຍາວ** | (1) ທາງປູຢາງ ຮອດ 30%, (2) ທາງປູຫີ ຮອດ 70%, (3) ສ້າງຂົວ 10 ແຫ່ງ; (4) ສ້າງທາງປູຢາງ ໃ ເຂດວາງແຜ ຕົວເມືອງ 70% ແລະ (5) ທາງປູຫີ ໃ ເຂດວາງແຜ ຕົວເມືອງ 100%<br>(6) ສຳເລັດ ກາ ກໍ່ສ້າງ ສະຖາ ີຈອດລົດເມ ທຸກໆ ແຂວງ<br>(7) ກໍ່ສ້າງ ພື້ນທີ່ ຖົ້ມຂີ້ເຫຍື້ອ ໃນທຸກໆ ແຂວງ |
| 3 | ຍຸດທະສາດ ກາ ພັດທະ າ ໄລຍະກາງ (10 ປີ) ຂອງຂະແໜງ ຄົມມະ າຄົມ ແລະ ໂຍທາ ໃ ປີ 2010 | **ເປົ້າໝາຍລວມ ຂອງກາ ພັດທະ າ ໄລຍະກາງ ໃ ປີ 2010** | **ບໍ່ມີໄວ້ໃຫ້ທີມງາ *** |
| 4 | ຍຸດທະສາດ ກາ ພັດທະ າ 5 ປີ ຂອງຂະແໜງຄົມມະ າຄົມ ແລະ ໂຍທາ ໃ ປີ 2010 | **ເປົ້າໝາຍລວມ ຂອງກາ ພັດທະ າ 5 ປີ ໃ ປີ 2010** | 1. ເພື່ອເສີມຂະຫຍາຍມະຕິຂອງກອງປະຊຸມພັກຂັ້ນສູນກາງ ຄັ້ງທີ່ 6 ແລະ ຂອງ ຄະນະກຳມະການພັກ ແຂວແລະ ທິດທາງ ແລະ ເປົ້າໝາຍ ຂອງ ກະຊວງ ຄົມມະນາຄົມ ແລະ ໂຍທາ.ການພັດທະນາ ໄດ້ປະກອບສ່ວນຢ່າງເຂັ້ມແຂ້ງໃນການຫຼຸດຜ່ອນ ຄວາມທຸກຈົນ ແລະ ອຳນວຍຄວາມສະດວກ ໃຫ້ກັບ ການພັດທະນາ ຂອງຂະແໜງການອື່ນໆ ໂດຍສະເພາະ ການພັດທະນາ ທາງດ້ານ ເສດຖະກິດ ແລະ ສັງຄົມ. |
